# ແຜນພັດທະນາ
# ຈຸລະວິສາຫະກິດ, ວິສາຫະກິດ ຂະໜາດນ້ອຍ ແລະ ກາງ
# 2021-2025




ກະຊວງອຸດສາຫະກຳ ແລະ ການຄ້າ

# ສາລະບານ


- ດຳລັດວ່າດ້ວຍການຮັບຮອງ ແລະ ປະກາດນຳໃຊ້ ແຜນພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 2021-2025 ສະບັບເລກທີ 183/ນຍ, ລົງວັນທີ 17 ມິຖຸນາ 2022.
- ຄຳນຳ.

| | | |
|---|---|---|
| I. | ພາກສະເໜີ | 1 |
| 1. | ບົດບາດ ແລະ ຄວາມສຳຄັນຂອງ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ | 1 |
| 2. | ປະຫວັດຄວາມເປັນມາການສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ ສປປ ລາວ | 2 |
| II. | ສະຫລຸບຕີລາຄາຜົນການຈັດຕັ້ງປະຕິບັດ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020 | 4 |
| 1. | ຜົນສຳເລັດຂອງການຈັດຕັ້ງປະຕິບັດວຽກງານ ຕາມ 7 ຂົງເຂດນະໂຍບາຍ | 4 |
| 1.1 | ນະໂຍບາຍສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ | 4 |
| 1.2 | ນະໂຍບາຍສົ່ງເສີມການເຂົ້າເຖິງແຫລ່ງທຶນ | 5 |
| 1.3 | ນະໂຍບາຍສົ່ງເສີມ ການເຂົ້າເຖິງການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ | 6 |
| 1.4 | ນະໂຍບາຍການເຂົ້າເຖິງຕະຫລາດ | 6 |
| 1.5 | ນະໂຍບາຍສ້າງ ແລະ ພັດທະນາຜູ້ປະກອບກິດຈະການໃໝ່ | 7 |
| 1.6 | ນະໂຍບາຍສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃຫ້ແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດ | 8 |
| 1.7 | ນະໂຍບາຍພາສີ - ອາກອນ ແລະ ດ້ານການເງິນ | 8 |
| 2. | ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້ | 9 |
| 2.1 | ຂໍ້ສະດວກ | 9 |
| 2.2 | ຂໍ້ຫຍຸ້ງຍາກ | 10 |
| 2.3 | ບົດຮຽນທີ່ຖອດຖອນໄດ້ | 10 |
| III. | ອຸປະສັກ ແລະ ສິ່ງທ້າທາຍ ຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ | 12 |
| 1. | ດ້ານການພັດທະນາຜູ້ປະກອບກິດຈະການ | 12 |
| 2. | ດ້ານການເຂົ້າເຖິງແຫລ່ງທຶນ | 13 |
| 3. | ດ້ານຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ | 13 |
| 4. | ດ້ານການເຂົ້າເຖິງການບໍລິການວິຊາການເພື່ອພັດທະນາທຸລະກິດ | 14 |
| 5. | ດ້ານການເຂົ້າເຖິງ ແລະ ຂະຫຍາຍຕະຫລາດ | 15 |
| 6. | ດ້ານສະພາບແວດລ້ອມການດຳເນີນທຸລະກິດ | 15 |

7. ດ້ານພາສີ, ອາກອນ ແລະ ດ້ານການເງິນ 16

8. ອຸປະສັກ ແລະ ສິ່ງທ້າທາຍອື່ນ 16

IV. ແຜນພັດທະນາ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 2021-2025 18

1. ວິໄສທັດ 18

2. ຈຸດປະສົງ 18

3. ນະໂຍບາຍສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 2021-2025 18

3.1 ນະໂຍບາຍພັດທະນາຜູ້ປະກອບກິດຈະການ 18

3.2 ນະໂຍບາຍສົ່ງເສີມການເຂົ້າເຖິງແຫລ່ງທຶນ 19

3.3 ນະໂຍບາຍສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກໍາ 19

3.4 ນະໂຍບາຍສົ່ງເສີມການເຂົ້າເຖິງການບໍລິການວິຊາການເພື່ອພັດທະນາທຸລະກິດ 20

3.5 ນະໂຍບາຍສົ່ງເສີມການເຂົ້າເຖິງ ແລະ ຂະຫຍາຍ ຕະຫລາດ 20

3.6 ນະໂຍບາຍສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການສ້າງຕັ້ງ ແລະ ດໍາເນີນທຸລະກິດ 21

3.7 ນະໂຍບາຍພາສີ-ອາກອນ ແລະ ດ້ານການເງິນ 21

4. ບັນດາມາດຕະການ ໃນແຕ່ລະຂົງເຂດນະໂຍບາຍ 22

4.1 ມາດຕະການສໍາລັບການພັດທະນາຜູ້ປະກອບກິດຈະການ 22

4.2 ມາດຕະການສໍາລັບສົ່ງເສີມການເຂົ້າເຖິງແຫລ່ງທຶນ 23

4.3 ມາດຕະການສໍາລັບການສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກໍາ 23

4.4 ມາດຕະການສໍາລັບການສົ່ງເສີມການເຂົ້າເຖິງ ການບໍລິການວິຊາການເພື່ອພັດທະນາທຸລະກິດ 24

4.5 ມາດຕະການສໍາລັບການສົ່ງເສີມການເຂົ້າເຖິງ ແລະ ຂະຫຍາຍຕະຫລາດ 25

4.6. ມາດຕະການສໍາລັບການສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການສ້າງຕັ້ງ ແລະ ດໍາເນີນທຸລະກິດ 25

4.7 ມາດຕະການສໍາລັບ ພາສີ-ອາກອນ ແລະ ດ້ານການເງິນ 26

5. ໝາກຜົນ ແລະ ຕົວຊີ້ວັດ 27

V. ມາດຕະການຈັດຕັ້ງປະຕິບັດ ແລະ ກົນໄກການປະສານງານ 31

1. ມາດຕະການຈັດຕັ້ງປະຕິບັດ 31

2. ກົນໄກການປະສານງານ 32

VI. ວິທີການຈັດຕັ້ງປະຕິບັດ 33

1. ການຜັນຂະຫຍາຍ 33

1.1 ເພີ່ມທະວີການປະສານງານ 33

1.2 ການກຳນົດແຫລ່ງທຶນ ແລະ ການຈັດສັນທຶນ 33

1.3 ການເພີ່ມທະວີການປະກອບສ່ວນຂອງພາກທຸລະກິດ ແລະ ພາກສ່ວນກ່ຽວຂ້ອງ 33

1.4 ການເຊື່ອມໂຍງກັບແຜນງານອື່ນໆຂອງລັດຖະບານ ແລະ ການດັດປັບຕາມຄວາມເໝາະສົມ 33

2. ຄວາມຮັບຜິດຊອບຂອງພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ແຜນພັດທະນາ ຈນກ 2021-2025 34

VII. ງົບປະມານ ແລະ ແຫລ່ງທຶນ 37

1. ຄາດຄະເນງົບປະມານ 37

2. ແຫລ່ງທຶນ 37

ເອກະສານຊ້ອນທ້າຍ 1: ຂົງເຂດນະໂຍບາຍ, ໝາກຜົນ ແລະ ມາດຕະການ 38

ເອກະສານຊ້ອນທ້າຍ 2: ພາກສ່ວນທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ແຜນພັດທະນາ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 44

# ຄຳຫຍໍ້

| | |
|---|---|
| ກສວ | ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ |
| ຄບທ | ເຄືອຂ່າຍຜູ້ໃຫ້ບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ |
| ຈນກ | ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ |
| ສບວ | ສູນບໍລິການວິສາຫະກິດຂະໜາດນ້ອຍ ແລະ ກາງ |
| ທສວ | ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ |
| ວນກ | ວິສາຫະກິດຂະໜາດນ້ອຍ ແລະ ກາງ |
| APO | ອົງການຜະລິດຕະພາບແຫ່ງອາຊີ |
| CIB | ຂໍ້ມູນສິນເຊື່ອບຸກຄົນ ຫລື ນິຕິບຸກຄົນ |
| Fintech | ເຕັກໂນໂລຊີທາງດ້ານການເງິນ |
| GAP | ການຜະລິດກະສິກຳທີ່ດີ |
| GI | ການຢັ້ງຢືນຖິ່ນກຳເນີດສິນຄ້າ |
| GMP/GHP | ການຜະລິດທີ່ດີ/ການຜະລິດສະອາດ |
| HACCP | ການວິເຄາະ ແລະ ຄວບຄຸມຈຸດວິກິດ ຄວາມປອດໄພການຜະລິດອາຫານ |
| ICT | ເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ |
| ISO | ມາດຕະຖານສາກົນ |
| MSME | ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ |
| ODOP | ໜຶ່ງເມືອງ ໜຶ່ງຜະລິດຕະພັນ |
| SME | ວິສາຫະກິດຂະໜາດນ້ອຍ ແລະ ກາງ |
| TQM | ການຄຸ້ມຄອງຄຸນນະພາບ |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 183 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 17.06.2022

# ດຳລັດ
# ວ່າດ້ວຍການຮັບຮອງ ແລະ ປະກາດນຳໃຊ້
# ແຜນພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 2021-2025.

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບປັບປຸງ, ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016.
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011.
- ອີງຕາມ ໜັງສືສະເໜີ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0688/ອຄ, ລົງວັນທີ 02 ມິຖຸນາ 2022.

ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 01** ຮັບຮອງ ແລະ ປະກາດໃຊ້ ແຜນພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 2021-2025.

**ມາດຕາ 02** ມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແຜນພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 2021-2025 ສະບັບນີ້ ໃນຂອບເຂດທົ່ວປະເທດ.

**ມາດຕາ 03** ບັນດາກະຊວງ, ອົງການ, ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້ ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີຜົນເປັນຢ່າງດີ.

**ມາດຕາ 04** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ

# ຄໍານໍາ

ແຜນພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 2021-2025 ແມ່ນແຜນຜັນຂະຫຍາຍ ນະໂຍບາຍສົ່ງເສີມ ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011 ທັງເປັນການຈັດຕັ້ງຜັນຂະຫຍາຍ ມະຕິ ກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ຂອງລັດຖະບານ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໄລຍະ 2021-2023 ບົນພື້ນຖານ ບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020 ແລະ ຕາມທ່າອ່ຽງການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງພາກພື້ນ ແລະ ສາກົນ, ກະຊວງອຸດ ສາຫະກໍາ ແລະ ການຄ້າ ເປັນແກນກາງໃນການຄົ້ນຄວ້າ ແລະ ສ້າງແຜນພັດທະນາສະບັບນີ້ແນໃສ່ພັດທະນາ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ເຕີບໃຫຍ່ຂະຫຍາຍຕົວໄປສູ່ຄຸນນະພາບໃໝ່, ມີຄວາມ ເຂັ້ມແຂງ ແລະ ສາມາດແຂ່ງຂັນໄດ້ໃນພາກພື້ນ ແລະ ສາກົນ, ເລັ່ງຟື້ນຟູ, ກະຕຸກຊຸກຍູ້ ແລະ ພັດທະນາ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ກັບມາມີຊີວິດຊີວາ ພາຍຫຼັງໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດ ໂຄວິດ-19.

ແຜນພັດທະນາ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 2021-2025 ສະບັບນີ້ ປະກອບມີ 7 ນະໂຍບາຍ, 58 ມາດຕະການ ຊຶ່ງເປັນການສືບຕໍ່ຈັດຕັ້ງຜັນຂະຫຍາຍ 7 ຂົງເຂດນະໂຍບາຍ ຕາມທີ່ໄດ້ກໍານົດໃນ ແຜນພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020 ໂດຍມີການຈັດລຽງບູລິມະສິດຄືນໃໝ່ ແລະ ເພີ່ມ ມາດຕະການຈໍານວນໜຶ່ງ ເພື່ອໃຫ້ແທດເໝາະກັບສະພາບການພັດທະນາເສດຖະກິດ-ສັງຄົມ ໃນປະຈຸບັນ, ສອດຄ່ອງກັບ ບັນດາຍຸດທະສາດຂອງຊາດ, ເປັນຕົ້ນ ວິໄສທັດ 2030 ແລະ ຍຸດທະສາດ ຮອດປີ 2025, ຍຸດທະສາດການເຕີບໂຕສີຂຽວ ແຫ່ງຊາດ 2030, ເປົ້າໝາຍການພັດທະນາແບບຍືນຍົງ (SDG) 2030, ອຸດສາຫະກໍາ 4.0, ແຜນພັດທະນາເສດຖະກິດ ດີຈີຕອນ ແຫ່ງຊາດ ໄລຍະ 5 ປີ ຄັ້ງທີ I (2021-2025) ແລະ ແຜນຍຸດທະສາດພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ກາງ ອາຊຽນ 2016-2025.

ກະຊວງອຸດສາຫະກໍາ ແລະ ການຄ້າ ຂໍສະແດງຄວາມຂອບໃຈ ມາຍັງບັນດາຂະແໜງການ, ອົງການປົກຄອງ ທ້ອງຖິ່ນ, ພາກທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ໃຫ້ການຮ່ວມມື, ສະໜັບສະໜູນ ແລະ ປະກອບຄໍາຄິດຄໍາເຫັນ ເຮັດໃຫ້ການສ້າງແຜນພັດທະນາສະບັບນີ້ ສໍາເລັດຕາມລະດັບຄາດໝາຍ. ພ້ອມນີ້, ກໍ່ສະແດງຄວາມຂອບໃຈ ມາຍັງ ຄູ່ຮ່ວມພັດທະນາ ໂດຍສະເພາະແມ່ນ ອົງການສະຫະປະຊາຊາດ (UN), ທະນາຄານໂລກ (World Bank), ທະນາຄານ ພັດທະນາອາຊີ (ADB), ອົງການພັດທະນາສາກົນຂອງປະເທດສະຫະລັດອາເມລິກາ (USAID), ກອງທຶນພິເສດແມ່ນໍ້າ ຂອງ-ແມ່ນໍ້າລ້ານຊ້າງ, ອົງການຜະລິດຕະພາບແຫ່ງອາຊີ (APO) ແລະ ປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນອື່ນໆ ທີ່ໄດ້ໃຫ້ການຊ່ວຍເຫຼືອທາງດ້ານທຶນຮອນ ແລະ ເຕັກນິກວິຊາການ ໃນການສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດ ຂະໜາດນ້ອຍ ແລະ ກາງ ຂອງ ສປປ ລາວ ຢ່າງຕໍ່ເນື່ອງ. ກະຊວງອຸດສາຫະກໍາ ແລະ ການຄ້າ ຫວັງຢ່າງຍິ່ງວ່າທຸກພາກສ່ວນ ຈະສືບຕໍ່ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດແຜນພັດທະນາດັ່ງກ່າວ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງ ຕົນ ພ້ອມທັງຍິນດີຮັບເອົາຄໍາຄິດຄໍາເຫັນ ແລະ ຄໍາສະເໜີ ເພື່ອປັບປຸງການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້ ເພື່ອເຮັດ ໃຫ້ການສົ່ງເສີມ ແລະ ພັດທະນາ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຄວາມເຂັ້ມແຂງ, ເຕີບໃຫຍ່ ຂະຫຍາຍຕົວ ແລະ ປະກອບສ່ວນສໍາຄັນ ແລະ ໜັກແໜ້ນ ຕໍ່ການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ.

ນະຄອນຫຼວງວຽງຈັນ, ວັນທີ 17 ສິງຫາ 2022

**ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ**

ມະໄລທອງ ກົມມະສິດ

# I. ພາກສະເໜີ



# I. ພາກສະເໜີ

## 1. ບົດບາດ ແລະ ຄວາມສຳຄັນຂອງ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈນກ) ຫລື Micro, Small and Medium Enterprise (MSME) ມີບົດບາດສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ, ປະກອບສ່ວນເຂົ້າໃນການສ້າງວຽກເຮັດງານທຳ, ສ້າງລາຍຮັບ ແລະ ຍົກສູງຊີວິດການເປັນຢູ່ຂອງປະຊາຊົນ ກໍ່ຄືການສ້າງປະຖົມປັດໃຈໃຫ້ແກ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເທື່ອລະກ້າວ, ເຮັດໃຫ້ເສດຖະກິດຂອງຊາດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ. ການພັດທະນາ ຈນກ ນອກຈາກຈະມີຕົ້ນທຶນທີ່ຕໍ່າແລ້ວ ຍັງເນັ້ນການນຳໃຊ້ທ່າແຮງຊັບພະຍາກອນພາຍໃນເປັນຫລັກ. ນອກຈາກນັ້ນ, ຈນກ ຍັງສາມາດປັບຕົວໄດ້ໄວກັບສະພາບການທີ່ມີການປ່ຽນແປງ, ໂດຍສະເພາະແມ່ນ ໃນເວລາເກີດມີວິກິດການທາງດ້ານເສດຖະກິດ ແລະ ການເງິນ.

ຍ້ອນເຫັນໄດ້ຄວາມສຳຄັນຂອງ ຈນກ, ບັນດາປະເທດສ່ວນໃຫຍ່ໃນໂລກ ໂດຍສະເພາະໃນພາກພື້ນອາຊຽນ ຈຶ່ງໄດ້ເອົາໃຈໃສ່ຕໍ່ການສົ່ງເສີມ ແລະ ພັດທະນາ ຈນກ ໂດຍໄດ້ວາງນະໂຍບາຍ, ຍຸດທະສາດ ແລະ ແຜນພັດທະນາ ທີ່ເປັນອັນສະເພາະເຈາະຈົງສຳລັບສົ່ງເສີມ ຈນກ, ລວມທັງການສ້າງໃຫ້ມີກົນໄກ ແລະ ສ້າງໜ່ວຍງານສະເພາະຂຶ້ນມາເພື່ອຮັບຜິດຊອບຢ່າງຈິງຈັງ ແລະ ເປັນລະບົບຕໍ່ເນື່ອງ. ໃນບັນດາປະເທດສະມາຊິກອາຊຽນ, ຈນກ ເປັນອົງປະກອບທີ່ສຳຄັນຂອງເສດຖະກິດ ຊຶ່ງກວມເຖິງ 97-99% ຂອງຈຳນວນວິສາຫະກິດທັງໝົດ, ສ້າງວຽກເຮັດງານທຳໄດ້ປະມານ 66,3%, ປະກອບສ່ວນເຂົ້າໃນການສົ່ງອອກ 10-30% ແລະ ປະກອບສ່ວນເຂົ້າໃນ GDP ປະມານ 15-69%.

ສຳລັບ ສປປ ລາວ, ຈນກ ມີບົດບາດສຳຄັນເປັນຢ່າງຍິ່ງໃນການສ້າງວຽກເຮັດງານທຳ ແລະ ການພັດທະນາເສດຖະກິດ-ສັງຄົມ ຂອງປະເທດ ເຊັ່ນດຽວກັບບັນດາປະເທດໃນພາກພື້ນ ແລະ ສາກົນ. ໂດຍອີງຕາມຜົນການສຳຫລວດເສດຖະກິດທົ່ວປະເທດ ຄັ້ງທີ III ປີ 2020 ເຫັນໄດ້ວ່າ ໃນຈຳນວນຫົວໜ່ວຍພື້ນຖານເສດຖະກິດທີ່ໄດ້ຂຶ້ນບັນຊີສຳຫລວດທັງໝົດແມ່ນ 133,997 ຫົວໜ່ວຍ. ອີງຕາມການຈັດແບ່ງຂະໜາດຂອງຫົວໜ່ວຍວິສາຫະກິດ ທີ່ມີແຮງງານ 99 ຄົນລົງມາ ແມ່ນສາມາດຈັດແບ່ງເປັນປະເພດ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 133,772 ຫົວໜ່ວຍ ຫລື ເທົ່າກັບ 99.8%. ໃນນີ້ ວິສາຫະກິດ ທີ່ມີຈຳນວນແຮງງານ 5 ຄົນລົງມາ (ຈຸນລະວິສາຫະກິດ)



ແມ່ນກວມເຖິງ 94.2%. ນອກຈາກນີ້, ຈນກ ຍັງປະກອບສ່ວນໃນການສ້າງວຽກເຮັດງານທຳໄດ້ຫລາຍກວ່າ 80% ຂອງຈຳນວນແຮງງານທັງໝົດໃນຂະແໜງການທຸລະກິດ.

## 2. ປະຫວັດຄວາມເປັນມາການສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ ສປປ ລາວ

ສປປ ລາວ ມີນິຕິກຳເພື່ອເປັນຂອບໃຫ້ແກ່ການສົ່ງເສີມ ຈນກ ແຕ່ປີ 2004 ເປັນຕົ້ນມາ ໂດຍລັດຖະບານໄດ້ອອກ ດຳລັດວ່າດ້ວຍການສົ່ງເສີມ ແລະ ພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ກາງ (ວນກ) ສະບັບເລກທີ 42/ນຍ, ລົງວັນທີ 20 ເມສາ 2004. ບົນພື້ນຖານດຳລັດດັ່ງກ່າວ ຫ້ອງການສົ່ງເສີມ ແລະ ພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຄະນະກຳມະການສົ່ງເສີມ ແລະ ພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຜະລິດຕະພາບ ໄດ້ຮັບການສ້າງຕັ້ງ. ພາຍຫລັງທີ່ ຫ້ອງການສົ່ງເສີມ ແລະ ພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ຮັບການສ້າງຕັ້ງຂຶ້ນແລ້ວ ກໍ່ໄດ້ສ້າງຍຸດທະສາດພັດທະນາ ວນກ ໄລຍະ 5 ປີ (2006-2010) ຊຶ່ງໄດ້ຖືກຮັບຮອງ ແລະ ປະກາດໃຊ້ໂດຍ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 157/ນຍ, ລົງວັນທີ 09 ກັນຍາ 2008 ຊຶ່ງຖືວ່າເປັນຍຸດທະສາດສະບັບທຳອິດ ຂອງ ສປປ ລາວ ໃນການສົ່ງເສີມ ຈນກ. ພາຍຫລັງລັດຖະບານໄດ້ອອກນິຕິກຳ ແລະ ຍຸດທະສາດພັດທະນາ ວນກ ກໍ່ສາມາດດຶງດູດການຮ່ວມມືຂອງສາກົນໃນການສະໜັບສະໜູນສ້າງຄວາມເຂັ້ມແຂງໃຫ້ ຫ້ອງການສົ່ງເສີມ ແລະ ພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ພາກສ່ວນກ່ຽວຂ້ອງ ພ້ອມທັງສະໜອງທຶນ ແລະ ຜູ້ຊ່ຽວຊານໃນການຈັດຕັ້ງປະຕິບັດແຜນຍຸດທະສາດດັ່ງກ່າວ.

ຜ່ານການຈັດຕັ້ງປະຕິບັດ ຍຸດທະສາດພັດທະນາ ວນກ 2006-2010 ສາມາດບັນລຸໄດ້ໝາກຜົນເບື້ອງຕົ້ນຈຳນວນໜຶ່ງ ແລະ ເປັນການສ້າງພື້ນຖານໃຫ້ແກ່ວຽກງານສົ່ງເສີມ ວນກ ຂອງປະເທດ. ໂດຍເຫັນໄດ້ຄວາມສຳຄັນຂອງການສົ່ງເສີມ ວນກ ແລະ ເພື່ອເພີ່ມປະສິດທິຜົນສຳລັບວຽກງານດັ່ງກ່າວ, ໃນປີ 2011 ລັດຖະບານ ໄດ້ຍົກລະດັບນິຕິກຳຈາກ ດຳລັດວ່າດ້ວຍການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ມາເປັນກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011 ຊຶ່ງໄດ້ເຮັດໃຫ້ ຫ້ອງການສົ່ງເສີມ ແລະ ພັດທະນາ ວນກ ກາຍມາເປັນ ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (ກສວ) ພ້ອມກັບການຍົກເລີກ ຄະນະກຳມະການສົ່ງເສີມ ແລະ ພັດທະນາ ວນກ ແລະ ຜະລິດຕະພາບ ໄປໃນໂຕ. ບົນພື້ນຖານຂອງກົດໝາຍສະບັບດັ່ງກ່າວ, ລັດຖະບານ ກໍ່ຄືກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ສືບຕໍ່ຜັນຂະຫຍາຍອອກເປັນນິຕິກຳໃຕ້ກົດໝາຍເພື່ອສົ່ງເສີມ ວນກ ລວມທັງກົນໄກການຈັດຕັ້ງວຽກງານດັ່ງກ່າວ ຄື: ດຳລັດວ່າດ້ວຍ ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 299/ລບ, ລົງວັນທີ 04 ກັນຍາ 2019 (ປັບປຸງຈາກ ດຳລັດວ່າດ້ວຍ ກອງທຶນສົ່ງເສີມ ແລະ ພັດທະນາ ວນກ ສະບັບເລກທີ 123/ນຍ, ລົງວັນທີ 03 ມີນາ 2010), ດຳລັດວ່າດ້ວຍການຈັດແບ່ງຂະໜາດ ວນກ ສະບັບເລກທີ 25/ລບ, ລົງວັນທີ 16 ມັງກອນ 2017, ແຜນພັດທະນາ ວນກ 2011-2015 ແລະ ແຜນພັດທະນາ ວນກ 2016 - 2020 ຊຶ່ງເປັນແຜນພັດທະນາສະບັບຫຼ້າສຸດ ໄດ້ຖືກຮັບຮອງ ແລະ ປະກາດໃຊ້ ຕາມດຳລັດສະບັບເລກທີ 253/ນຍ, ລົງວັນທີ 18 ສິງຫາ 2017 ໂດຍແຜນພັດທະນາດັ່ງກ່າວ ໄດ້ກາຍເປັນສ່ວນສຳຄັນໜຶ່ງຂອງ ແຜນພັດທະນາຂະແໜງອຸດສາຫະກຳ ແລະ ການຄ້າ ກໍ່ຄືແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VII ແລະ ຄັ້ງທີ VIII ຂອງລັດຖະບານຕາມລຳດັບ. ພ້ອມກັນນັ້ນ, ກໍ່ໄດ້ປັບປຸງພາລະບົດບາດຂອງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫລວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ໃຫ້ມີຄວາມຈະແຈ້ງ, ຊັດເຈນ ໂດຍໄດ້ກຳນົດວຽກງານສົ່ງເສີມ ວນກ ແລະ ວຽກງານສົ່ງເສີມການຄ້າ ເປັນຂະແໜງໜຶ່ງຂອງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫລວງ ຊຶ່ງເອີ້ນວ່າ ຂະແໜງສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ການຄ້າ.

ດ້ວຍຄວາມເອົາໃຈໃສ່ຂອງລັດຖະບານ ໃນການດຳເນີນນະໂຍບາຍສຳຄັນຕ່າງໆເພື່ອສົ່ງເສີມ ຈນກ, ຮອດປີ 2020 ສາມາດລະດົມທຶນຮອນ ແລະ ເຕັກນິກວິຊາການ ເຂົ້າໃນການສົ່ງເສີມ ແລະ ພັດທະນາ ວນກ ໄດ້ບໍ່ຕ່ຳກວ່າ 50 ລ້ານໂດລາສະຫະລັດ. ບັນດາຄູ່ຮ່ວມພັດທະນາ ແລະ ອົງການ ທີ່ໃຫ້ການສະໜັບສະໜູນຫລັກໃນໄລຍະຜ່ານມາ ປະກອບດ້ວຍ ທະນາຄານໂລກ, ທະນາຄານພັດທະນາອາຊີ (ADB), ອົງການຮ່ວມມືເຢຍລະມັນ (GIZ), ສະຫະພາບເອີຣົບ (EU), ຂອບການຮ່ວມມືແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ, ອົງການພັດທະນາສາກົນ ແຫ່ງສະຫະລັດອາເມລິກາ (USAID), ອົງການສະຫະປະຊາຊາດ (UN), ການຮ່ວມມືລະຫວ່າງລັດຖະບານ ແລະ ອົງການບໍ່ໄດ້ສັງກັດລັດຖະບານ ຈຳນວນໜຶ່ງ.

# II. ສະຫລຸບຕີລາຄາຜົນການຈັດຕັ້ງປະຕິບັດ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020



## II. ສະຫລຸບຕີລາຄາຜົນການຈັດຕັ້ງປະຕິບັດ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020

ໃນໄລຍະ 5 ປີ ຜ່ານມາ ໂດຍພາຍໃຕ້ການ ຊີ້ນຳ-ນຳພາ ຢ່າງໃກ້ຊິດຂອງລັດຖະບານ ຈຶ່ງເຮັດໃຫ້ ວນກ ມີຄວາມເຂັ້ມແຂງ ແລະ ມີທ່າກ້າວ ທີ່ດີຂຶ້ນສົມຄວນ ແລະ ປະສົບຜົນສຳເລັດໃນຫລາຍດ້ານຜ່ານ 7 ນະໂຍບາຍສົ່ງເສີມ ວນກ ຄື:

1. ການສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ;
2. ນະໂຍບາຍສົ່ງເສີມການເຂົ້າເຖິງແຫລ່ງທຶນ;
3. ການສົ່ງເສີມການເຂົ້າເຖິງການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ;
4. ການເຂົ້າເຖິງ ແລະ ຂະຫຍາຍຕະຫລາດ;
5. ການສ້າງ ແລະ ພັດທະນາຜູ້ປະກອບກິດຈະການໃໝ່;
6. ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງ ແລະ ດຳເນີນທຸລະກິດ;
7. ດ້ານພາສີ-ອາກອນ ແລະ ດ້ານການເງິນ.

ເນື່ອງຈາກວຽກງານສົ່ງເສີມ ແລະ ພັດທະນາ ວນກ ຕິດພັນກັບຫລາຍຂະແໜງການທັງພາກລັດ ແລະ ພາກທຸລະກິດ, ສະນັ້ນ ແຜນພັດທະນາ ວນກ 2016-2020 ຈຶ່ງກວມເອົາໜ້າວຽກຂອງຂະແໜງການຕ່າງໆ ໂດຍອີງຕາມຈຸດພິເສດຂອງການສົ່ງເສີມ ແລະ ພັດທະນາ ວນກ ຕາມສາຍຕັ້ງ ແລະ ສາຍຂວາງ ຊຶ່ງການຈັດຕັ້ງປະຕິບັດບັນດາມາດຕະການ ແລະ ກິດຈະກຳ ທີ່ລະບຸໄວ້ໃນແຜນພັດທະນາດັ່ງກ່າວ ຈຶ່ງມີຄວາມແຕກຕ່າງກັນໄປ. ບາງມາດຕະການ ແລະ ໂຄງການ ຖືກຈັດຕັ້ງປະຕິບັດໂດຍການຊ່ວຍເຫລືອທາງດ້ານວິຊາການ ຈາກການລະດົມໄດ້ພາຍໃຕ້ແຜນພັດທະນາດັ່ງກ່າວ, ແຕ່ວ່າມາດຕະການ ແລະ ໂຄງການສ່ວນໃຫຍ່ ແມ່ນຂະແໜງການກ່ຽວຂ້ອງເປັນເຈົ້າການຈັດຕັ້ງປະຕິບັດຕາມພາລະບົດບາດ ໂດຍນຳໃຊ້ງົບປະມານໃນຂອບເຂດວຽກງານຂອງຂະແໜງການຕົນເອງ ແລະ ຈາກແຫລ່ງງົບປະມານຈາກຄູ່ຮ່ວມພັດທະນາ.

### 1. ຜົນສຳເລັດຂອງການຈັດຕັ້ງປະຕິບັດວຽກງານ ຕາມ 7 ຂົງເຂດນະໂຍບາຍ

#### 1.1 ນະໂຍບາຍສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ

ວຽກງານຜະລິດຕະພາບ ມີການຈັດຕັ້ງປະຕິບັດທີ່ປະສົບຜົນສຳເລັດໃນຫລາຍດ້ານ ຊຶ່ງສາມາດສ້າງໂຮງງານຕົວແບບດ້ານເຟີນີເຈີ ແລະ ຍົກລະດັບສີມືແຮງງານຊ່າງໄມ້ໄດ້ຫລາຍກວ່າ 50 ຄົນ, ສະໜອງໃຫ້ຄຳປຶກສາດ້ານ ISO 9001 ໃຫ້ແກ່ 03 ຫົວໜ່ວຍ ວນກ ຄື: ໂຮງງານເກືອເວີນຄຳ, ບໍລິສັດວັນສົມ ນຳເຂົ້າ-ສົ່ງອອກ ແລະ ໂຮງງານຕັດຫຍິບດາວສະຫວັນ. ໃນນັ້ນ, ໂຮງງານເກືອເວີນຄຳ ສາມາດໄດ້ຮັບການຢັ້ງຢືນມາດຕະຖານ ISO 9001 ແລະ GMP. ຄຽງຄູ່ກັນນັ້ນ, ໄດ້ຊຸກຍູ້ສົ່ງເສີມ ໃຫ້ມີການປັບປຸງລະບົບຜະລິດ ທີ່ເນັ້ນໃສ່ຮັກສາຄຸນນະພາບທີ່ເປັນເອກະລັກແບບດັ້ງເດີມ ທີ່ຕິດພັນກັບການອະນຸລັກລະບົບນິເວດ ແລະ ວັດທະນະທຳທ້ອງຖິ່ນ ດ້ວຍການນຳໃຊ້ລະບົບການຢັ້ງຢືນຖິ່ນກຳເນີດສິນຄ້າໃນ 6 ສິນຄ້າຄື: ຊາກຳແມນ ແຂວງຜົ້ງສາລີ, ຊາປາກຊ່ອງ ແຂວງຈຳປາສັກ, ຜ້າໄໝຫລວງພະບາງ, ຜ້າໄໝຫົວພັນ, ກາເຟບໍລະເວນ ແລະ ເຂົ້າໄກ່ນ້ອຍ.

ສຳລັບວຽກງານການຝຶກອົບຮົມຍົກລະດັບຄວາມຮູ້ ແລະ ສີມືແຮງງານ, ສາມາດຝຶກອົບຮົມການກວດສອບ ແລະ ຢັ້ງຢືນມາດຕະຖານ ການຈັດຕັ້ງປະຕິບັດການຜະລິດທີ່ດີ ແລະ ລະບົບວິເຄາະ ແລະ ຄວບຄຸມຈຸດວິກິດ (GMP ແລະ HACCP) ໃຫ້ແກ່ຜູ້ປະກອບກິດຈະການ ແລະ ນັກວິຊາການ ດ້ານອາຫານ ໃນ 18 ແຂວງ, ການຝຶກອົບຮົມ

ດ້ານການຄຸ້ມຄອງຄຸນນະພາບ (TQM) ສໍາລັບ ວນກ ໃນຂະແໜງທຸລະກິດກາເຟ ຢູ່ 4 ແຂວງພາກໃຕ້ ຈໍານວນ 300 ຄົນ, ຝຶກອົບຮົມເຕັກນິກການເກັບກາເຟໝາກແດງ (ໝາກສຸກ) ຈໍານວນ 600 ຄົນ ແລະ ຝຶກອົບຮົມກ່ຽວກັບການຜະລິດກະສິກໍາເປັນສິນຄ້າ ໃຫ້ແກ່ 05 ແຂວງເປົ້າໝາຍຄື: ໄຊຍະບູລີ, ວຽງຈັນ, ນະຄອນຫລວງວຽງຈັນ, ບໍລິຄໍາໄຊ ແລະ ຄໍາມ່ວນ. ພ້ອມນັ້ນ, ໄດ້ສົ່ງພະນັກງານຈາກພາກລັດ ແລະ ພາກທຸລະກິດ ໄປຍົກລະດັບຄວາມຮູ້ໄລຍະສັ້ນຢູ່ຕ່າງປະເທດ ຈໍານວນ 103 ເທື່ອຄົນ ພາຍໃຕ້ການຮ່ວມມືກັບ ອົງການຜະລິດຕະພາບແຫ່ງອາຊີ (APO).

ສໍາລັບວຽກງານການຄົ້ນຄວ້າ ແລະ ພັດທະນາຄູ່ມື ໄດ້ສໍາເລັດການພັດທະນາ ແຜນແມ່ບົດຜະລິດຕະພາບແຫ່ງຊາດ ພາຍໃຕ້ການສະໜັບສະໜູນຂອງ ອົງການຜະລິດຕະພາບແຫ່ງອາຊີ ຊຶ່ງແຜນແມ່ບົດດັ່ງກ່າວ ແນໃສ່ສ້າງພື້ນຖານດ້ານນະໂຍບາຍ ແລະ ກົນໄກ ໃນການຂັບເຄື່ອນວຽກງານຜະລິດຕະພາບຂອງ ສປປ ລາວ ໃຫ້ດໍາເນີນໄປຢ່າງມີຈຸດສຸມ ແລະ ຍືນຍົງ. ພ້ອມນັ້ນ, ໄດ້ສໍາເລັດການສ້າງຄູ່ມືເຕັກນິກການຄຸ້ມຄອງຄຸນນະພາບກາເຟ, ການພັດທະນາຄູ່ມື GMP ແລະ HACCP ເພື່ອນໍາໃຊ້ເຂົ້າໃນການປັບປຸງ ແລະ ພັດທະນາໂຮງສີເຂົ້າ ໃຫ້ໄດ້ການຮັບຮອງມາດຕະຖານສາກົນ.

## 1.2 ນະໂຍບາຍສົ່ງເສີມການເຂົ້າເຖິງແຫຼ່ງທຶນ

ໃນໄລຍະຜ່ານມາ, ການປັບປຸງການເຂົ້າເຖິງແຫຼ່ງທຶນ ໄດ້ມີການພັດທະນາໃນຫລາຍດ້ານ ເຊັ່ນ: ຈໍານວນທຶນທີ່ສະໜອງໃຫ້ແກ່ ວນກ, ຮູບແບບການສະໜອງທຶນ, ການລະດົມທຶນຈາກແຫລ່ງຕ່າງໆ, ການຮ່ວມມືສາກົນ ແລະ ການຈັດຕັ້ງປະຕິບັດບັນດາໂຄງການວິຊາການ ທີ່ຕິດພັນການເຂົ້າເຖິງແຫຼ່ງທຶນ.

ສໍາລັບວຽກການສະໜອງສິນເຊື່ອ, ໃນໄລຍະປີ 2016 – 2020, ສາມາດສະໜອງສິນເຊື່ອໃຫ້ແກ່ ວນກ ທັງໝົດຈໍານວນ 71,529.89 ຕື້ກີບ ຫລື ເທົ່າກັບ 19,53% ຂອງການປ່ອຍກູ້ທີ່ວລະບົບທະນາຄານ. ການສະໜອງສິນເຊື່ອ ໄດ້ຈັດຕັ້ງປະຕິບັດດ້ວຍຫລາຍຮູບແບບ ເຊັ່ນ: ເງິນກູ້ອັດຕາດອກເບ້ຍຕໍ່າຜ່ານທະນາຄານທຸລະກິດ, ໂຄງການສິນເຊື່ອສໍາລັບຈຸນລະວິສາຫະກິດ ໂດຍຜ່ານສະຖາບັນການເງິນຈຸລະພາກ, ໂຄງການເຂົ້າເຖິງແຫຼ່ງທຶນຂອງ ວນກ ຮ່ວມມືກັບທະນາຄານໂລກ, ການບໍລິການເຊົ່າສິນເຊື່ອ, ໂຄງການສະໜອງສິນເຊື່ອໃຫ້ແກ່ນັກທຸລະກິດຍິງ ໂດຍການຮ່ວມມືລະຫວ່າງ IFC ແລະ ທະນາຄານ ລາວຝຣັ່ງ ຈໍາກັດ, ກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນໃນ ສປປ ລາວ (LARP), ໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດໂຄວິດ-19 ຂອງທະນາຄານແຫ່ງ ສປປ ລາວ ແລະ ອື່ນໆ. ນອກນັ້ນ, ໃນປີ 2020, ລັດຖະບານ ໄດ້ສະໜອງທຶນເພື່ອສົ່ງເສີມ ຈນກ ຈໍານວນ 200 ຕື້ກີບ. ໃນນີ້, ໄດ້ຈັດສັນທຶນຈໍານວນບໍ່ຫລຸດ 91% ສໍາລັບການສະໜອງສິນເຊື່ອ, ບໍ່ເກີນ 8% ສໍາລັບໂຄງການວິຊາການ ແລະ ບໍ່ເກີນ 1% ສໍາລັບຄ່າໃຊ້ຈ່າຍບໍລິຫານ.

ສໍາລັບວຽກງານນິຕິກໍາ, ໄດ້ມີການປັບປຸງດໍາລັດວ່າດ້ວຍກອງທຶນສົ່ງເສີມ ແລະ ພັດທະນາ ວນກ ສະບັບເລກທີ 123/ນຍ, ລົງວັນທີ 03 ມີນາ 2010 ມາເປັນ ດໍາລັດວ່າດ້ວຍກອງທຶນສົ່ງເສີມ ວນກ ສະບັບເລກທີ 299/ລບ, ລົງວັນທີ 04 ກັນຍາ 2019 ເພື່ອສ້າງຄວາມຄ່ອງຕົວໃຫ້ແກ່ການຈັດຕັ້ງເຄື່ອນໄຫວຂອງ ກອງທຶນສົ່ງເສີມ ວນກ ແລະ ການອອກຂໍ້ຕົກລົງວ່າດ້ວຍບໍລິສັດຄໍ້າປະກັນສິນເຊື່ອ ສະບັບເລກທີ 730/ທຫລ, ລົງວັນທີ 21 ທັນວາ 2020.

ສໍາລັບວຽກງານການສ້າງຄວາມເຂັ້ມແຂງໃນການສະໜອງສິນເຊື່ອ, ໄດ້ມີການຝຶກອົບຮົມໃຫ້ແກ່ພະນັກງານສິນເຊື່ອຂອງບັນດາທະນາຄານທຸລະກິດ ເພື່ອຍົກລະດັບຄວາມສາມາດຈັດຕັ້ງປະຕິບັດການປະເມີນສະໜອງສິນເຊື່ອໃຫ້ແກ່ ວນກ ໃນຫົວຂໍ້ຕ່າງໆ ເຊັ່ນ: ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ການປະເມີນຕະຫລາດ ວນກ, ການພັດທະນາຜະລິດຕະພັນການເງິນ, ການວິເຄາະຜູ້ກູ້ຢືມ, ການບໍລິຫານ ແລະ ຄວາມສ່ຽງສິນເຊື່ອ, ສ້າງແຜນຍຸດທະສາດສິນເຊື່ອ ຫລື ການທະນາຄານ ສໍາລັບ ວນກ ແລະ ອື່ນໆ. ວຽກງານສ້າງຄວາມເຂັ້ມແຂງດັ່ງກ່າວ ໄດ້ຮັບການສະໜັບສະໜູນຫລັກຈາກ ທະນາຄານໂລກ.

ການສະໜອງສິນເຊື່ອບ້ວງເງິນຂອງ ກອງທຶນສົ່ງເສີມ ວນກ, ສາມາດຈັດຕັ້ງປະຕິບັດໄດ້ການສະໜອງສິນເຊື່ອທັງໝົດ 323,77 ຕື້ກີບ. ການສະໜອງສິນເຊື່ອ ແມ່ນຈັດຕັ້ງປະຕິບັດຜ່ານທະນາຄານທຸລະກິດ ຈຳນວນ 06 ແຫ່ງ ຄື: ທະນາຄານພັດທະນາລາວ, ທະນາຄານໄຊງ່ອນເທືອງຕິ່ນລາວ, ທະນາຄານລາວຈີນ, ທະນາຄານ ST, ທະນາຄານຮ່ວມທຸລະກິດລາວ-ຫວຽດ ແລະ ທະນາຄານມາຣູຮານເຈແປນລາວ. ໃນນີ້, ສາມາດສະໜອງສິນເຊື່ອໃຫ້ແກ່ ຈນກ ໃນ 14 ແຂວງ, ຈຳນວນ ຈນກ ໄດ້ຮັບສິນເຊື່ອທັງໝົດຈຳນວນ 382 ຫົວໜ່ວຍ. ສຳລັບການສະໜອງສິນເຊື່ອ ຜ່ານສະຖາບັນການເງິນຈຸລະພາກ ສາມາດຈັດຕັ້ງປະຕິບັດໄດ້ 2,02 ຕື້ກີບ ຜ່ານ 04 ສະຖາບັນການເງິນຈຸລະພາກ ຄື: ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກປະຕູຄຳ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກເບັກ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກເພື່ອການພັດທະນາ ແລະ ສົ່ງເສີມທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກໄຊອຸດົມ.

ກອງທຶນສົ່ງເສີມ ວນກ ຍັງໄດ້ສະໜັບສະໜູນໂຄງການວິຊາການ ໃຫ້ແກ່ພາກລັດ ແລະ ພາກທຸລະກິດ ເພື່ອສົ່ງເສີມບັນດາກິດຈະກຳຂອງ ວນກ ເຊັ່ນ: ສະໜັບສະໜູນງານວາງສະແດງສິນຄ້າ, ການຝຶກອົບຮົມວາງແຜນທຸລະກິດ, ການເງິນ ແລະ ການບັນຊີ; ການສ້າງຕັ້ງກຸ່ມທຸລະກິດ, ການສົ່ງເສີມການສ້າງຜະລິດຕະພັນ ໜຶ່ງເມືອງ ໜຶ່ງຜະລິດຕະພັນ (ODOP), ການປັບປຸງຜະລິດຕະພັນຂອງ ວນກ ແລະ ອື່ນໆ ລວມທັງໝົດ 39 ໂຄງການ, ມູນຄ່າຈຳນວນ 3,2 ຕື້ກີບ ໃນ 12 ແຂວງທົ່ວປະເທດ.

## 1.3 ນະໂຍບາຍສົ່ງເສີມ ການເຂົ້າເຖິງການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ

ສຳເລັດການສ້າງສູນບໍລິການ ວນກ ຈຳນວນ 04 ແຫ່ງ ຢູ່ນະຄອນຫລວງວຽງຈັນ ໃນປີ 2017, ແຂວງຫລວງພະບາງ ແລະ ແຂວງຈຳປາສັກ ໃນປີ 2019 ແລະ ແຂວງສະຫວັນນະເຂດ ໃນປີ 2020 ພາຍໃຕ້ການສະໜັບສະໜູນຂອງອົງການ GIZ ເພື່ອສະໜອງການຝຶກອົບຮົມ ແລະ ໃຫ້ຄຳປຶກສາ ການພັດທະນາທຸລະກິດໃຫ້ແກ່ ວນກ ແລະ ສາມາດໃຫ້ການບໍລິການແກ່ ວນກ ຈຳນວນ 909 ຫົວໜ່ວຍ.

ດຳເນີນການສະໜອງທຶນສົມທົບເພື່ອສົ່ງເສີມທຸລະກິດ (BAF) ໃຫ້ແກ່ ວນກ ຈຳນວນ 667 ຫົວໜ່ວຍ ມູນຄ່າ 244,996 ໂດລາສະຫະລັດ ໂດຍການຮ່ວມມືກັບທະນາຄານໂລກ ໃນຂອບໂຄງການພັດທະນາການຄ້າໄລຍະ 2 (TDF2).

ສຳລັບວຽກງານພັດທະນາເຄືອຂ່າຍການສະໜອງບໍລິການພັດທະນາທຸລະກິດ (BDS), ມີບັນດາບໍລິສັດທີ່ປຶກສາ, ສະມາຄົມທຸລະກິດ, ສູນບໍລິການ ວນກ, ສະຖາບັນ ແລະ ຄະນະຕ່າງໆ ໃນມະຫາວິທະຍາໄລແຫ່ງຊາດທີ່ໄດ້ສະໜອງບໍລິການວິຊາການ ແກ່ ຈນກ ເຊັ່ນ: ບໍລິສັດທີ່ປຶກສາວິສາຫະກິດ EDC, ບໍລິສັດ TACDO, ສະມາຄົມສະຖາບັນການເງິນຈຸລະພາກ, ສູນພັດທະນາຜູ້ປະກອບກິດຈະການລາວ - ອິນເດຍ, ສະຖາບັນພັດທະນາຊັບພະຍາກອນມະນຸດ ລາວ - ຍີ່ປຸ່ນ ແລະ ພາກສ່ວນອື່ນໆ ໄດ້ໃຫ້ການຊ່ວຍເຫລືອ ແລະ ການບໍລິການວິຊາການແກ່ ວນກ ແລະ ມີແນວໂນ້ມຂະຫຍາຍຕົວໃນອະນາຄົດ ຊຶ່ງສາມາດສະໜອງການຝຶກອົບຮົມໄດ້ຈຳນວນ 51,549 ຫົວໜ່ວຍ.

## 1.4 ນະໂຍບາຍການເຂົ້າເຖິງຕະຫລາດ

ການສົ່ງເສີມການເຂົ້າເຖິງຕະຫລາດພາຍໃນ ແລະ ຕ່າງປະເທດ ໄດ້ຮັບການຈັດຕັ້ງປະຕິບັດຮ່ວມກັນລະຫວ່າງ ພາກລັດ ແລະ ພາກທຸລະກິດ ຜ່ານບັນດາໂຄງການ ແລະ ກິດຈະກຳ ຄື: ງານວາງສະແດງສິນຄ້າ, ການຈັບຄູ່ທຸລະກິດ ແລະ ຕະຫລາດນັດ ພາຍໃນຈຳນວນ 584 ຄັ້ງ ໂດຍມີວິສາຫະກິດເຂົ້າຮ່ວມທັງໝົດ 17,771 ຫົວໜ່ວຍ, ເຂົ້າຮ່ວມງານວາງສະແດງສິນຄ້າຢູ່ຕ່າງປະເທດຈຳນວນ 94 ຄັ້ງ ໂດຍມີວິສາຫະກິດເຂົ້າຮ່ວມທັງໝົດ 713

ຫົວໜ່ວຍ. ນອກນັ້ນ, ຍັງມີກິດຈະກຳ ແລະ ໂຄງການຊ່ວຍເຫລືອດ້ານວິຊາການ ຜ່ານກອງທຶນສົ່ງເສີມ ວນກ ຊຶ່ງຈັດຕັ້ງປະຕິບັດຮ່ວມກັບ ສະມາຄົມທຸລະກິດແມ່ຍິງລາວ, ສະມາຄົມຫັດຖະກຳລາວ ແລະ ອື່ນໆ.

ລັດຖະບານ ສົ່ງເສີມການເຂົ້າເຖິງຕະຫລາດຜ່ານລະບົບການຊື້ຂາຍອອນລາຍ (E-commerce) ໂດຍການສະໜັບສະໜູນຂອງ ADB ຊຶ່ງສຳເລັດການສ້າງ ແລະ ເປີດນຳໃຊ້ ເວັບໄຊການຄ້າເອເລັກໂຕຣນິກຂອງລັດ www.plaosme.com ຢ່າງເປັນທາງການ ຊຶ່ງມີຈຸດປະສົງເພື່ອຊ່ວຍໃຫ້ ວນກ ເຂົ້າເຖິງຕະຫລາດທັງພາຍໃນ ແລະ ຕ່າງປະເທດ ໂດຍມີ 1.648 ຜະລິດຕະພັນ ຈາກ 606 ຫົວໜ່ວຍ ວນກ ຈຳໜ່າຍຜ່ານເວັບໄຊດັ່ງກ່າວ. ພ້ອມນັ້ນ, ລະບົບການຂົນສົ່ງສິນຄ້າພາຍໃນ ກໍ່ໄດ້ຮັບການສົ່ງເສີມ ແລະ ພັດທະນາ ຈາກຂະແໜງການທີ່ກ່ຽວຂ້ອງ.

ສຳລັບວຽກງານພັດທະນາກາໝາຍສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ (ODOP), ສາມາດອອກໃບຢັ້ງຢືນ ODOP ໄດ້ທັງໝົດ 241 ຫົວໜ່ວຍ, ມີ 871 ຜະລິດຕະພັນ, ກວມເອົາ 234 ບ້ານ, 103 ເມືອງ ໃນຂອບເຂດທົ່ວປະເທດ. ສຳລັບວຽກງານການຂຶ້ນທະບຽນຖິ່ນກຳເນີດສິນຄ້າ (GI) ສາມາດຂຶ້ນທະບຽນ GI ໃຫ້ແກ່ 04 ຜະລິດຕະພັນ ຄື: ຊາກຳແພນ ແຂວງຜົ້ງສາລີ, ຊາປາກຊ່ອງ ແຂວງຈຳປາສັກ, ຜ້າໄໝຫລວງພະບາງ ແລະ ຜ້າໄໝຫົວພັນ. ການຂຶ້ນທະບຽນ GI ຈະເພີ່ມມູນຄ່າສິນຄ້າ ແລະ ຊ່ວຍໃຫ້ເຂົ້າເຖິງຕະຫລາດຕ່າງປະເທດ ໃຫ້ແກ່ຜະລິດຕະພັນດັ່ງກ່າວ.

ນອກນັ້ນ, ໄດ້ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ກຸ່ມທຸລະກິດເຂົ້າ ແລະ ກຸ່ມທຸລະກິດລ້ຽງໝູ ຈຳນວນ 400 ຫົວໜ່ວຍ ພາຍໃຕ້ໂຄງການຜະລິດເປັນສິນຄ້າ ແລະ ຄໍ້າປະກັນສະບຽງອາຫານ ເພື່ອໃຫ້ຜູ້ປະກອບກິດຈະການມີຄວາມເຂັ້ມແຂງທາງດ້ານວິຊາການຕ່າງໆ ແລະ ມີຄວາມເປັນເອກະພາບຕໍ່ຄວາມໝາຍ ແລະ ຄວາມສຳຄັນ ຂອງການຮ່ວມກຸ່ມທຸລະກິດ ວນກ ໂດຍຜ່ານຮູບແບບການຝຶກອົບຮົມ ແລະ ສຳມະນາ ເພື່ອສ້າງຄວາມເຂົ້າໃຈ ແລະ ແລກປ່ຽນບົດຮຽນໃນຫົວຂໍ້ຕ່າງໆ ເພື່ອກ້າວເປັນກຸ່ມທຸລະກິດຕົວແບບ. ພ້ອມນັ້ນ, ສຳເລັດການສ້າງຄູ່ມືການພັດທະນາຕ່ອງໂສ້ມູນຄ່າເພີ່ມ ສະບັບພາສາອັງກິດ ພາຍໃຕ້ການສະໜັບສະໜູນຂອງໂຄງການ GIZ-RELATED.

ສຳລັບການສົ່ງອອກສິນຄ້າ, ໄດ້ເພີ່ມການອຳນວຍຄວາມສະດວກດ້ານການຄ້າໃຫ້ ວນກ ໃນການນຳເຂົ້າ ແລະ ສົ່ງອອກສິນຄ້າ ໂດຍການອະນຸຍາດໃຫ້ ວນກ ອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າດ້ວຍຕົນເອງ ຊຶ່ງສາມາດປະຢັດເວລາ ແລະ ຕົ້ນທຶນ. ພ້ອມນັ້ນ, ໄດ້ມີການປະຊຸມປຶກສາຫາລື ທົບທວນວຽກງານອຳນວຍຄວາມສະດວກທາງດ້ານການຄ້າຢ່າງເປັນປະຈຳ ເພື່ອສືບຕໍ່ປັບປຸງການອຳນວຍຄວາມສະດວກວຽກງານດັ່ງກ່າວໃຫ້ແກ່ພາກທຸລະກິດ.

## 1.5 ນະໂຍບາຍສ້າງ ແລະ ພັດທະນາຜູ້ປະກອບກິດຈະການໃໝ່

ການພັດທະນາຜູ້ປະກອບກິດຈະການ ໄດ້ຮ່ວມຈັດຕັ້ງໂດຍຫລາຍພາກສ່ວນ ທັງພາກລັດ, ພາກທຸລະກິດ ແລະ ສະຖາບັນການສຶກສາຕ່າງໆ ຊຶ່ງມີຜົນສຳເລັດໃນຫລາຍດ້ານ ເຊັ່ນ: ການນຳເອົາຫລັກສູດວິຊາທຸລະກິດເຂົ້າໃນໂຮງຮຽນມັດທະຍົມປາຍ ມ5 ແລະ ມ6 ໃນໂຮງຮຽນສາມັນກິນນອນຊົນເຜົ່າທົ່ວປະເທດ, ຈັດຝຶກອົບຮົມຫລັກສູດການສຳຫລວດຕະຫລາດໃຫ້ແກ່ຄູໂຮງຮຽນອາຊີວະ 07 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດ 208 ຄົນ, ຝຶກອົບຮົມຫົວຂໍ້ "ການປະກອບກິດຈະການ" ໃຫ້ແກ່ຄູສອນທັງ 08 ວິທະຍາໄລເຕັກນິກວິຊາຊີບເປົ້າໝາຍ ແລະ ຝຶກອົບຮົມຫົວຂໍ້ "ການສ້າງ ແລະ ພັດທະນາແຜນທຸລະກິດ" ໃຫ້ແກ່ຄູສອນໂຮງຮຽນເຕັກນິກວິຊາຊີບທົ່ວປະເທດ. ພ້ອມນັ້ນ, ໄດ້ຈັດຝຶກອົບຮົມໄລຍະສັ້ນ ເພື່ອຊ່ວຍຜູ້ປະກອບກິດຈະການໃໝ່ ຈຳນວນ 70 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດ 855 ຄົນ, ສ້າງເວທີໃນການແລກປ່ຽນລະຫວ່າງຜູ້ປະກອບກິດຈະການ (Business Café) ຈຳນວນ 19 ຄັ້ງ ມີຜູ້ເຂົ້າຮ່ວມ 322 ຄົນ.

ສຳລັບການສົ່ງເສີມທຸລະກິດແບບສະຕາດອັບ, ສຳເລັດການຮ່ວມຈັດການແຂ່ງຂັນປະກວດການເລີ່ມຕົ້ນທຸລະກິດແບບສະຕາດອັບ ໃນປະເພດຕ່າງໆ ເຊັ່ນ: Hackathon, Ecothon, Startup Weekend ແລະ ອື່ນໆ

ໂດຍຮ່ວມກັບ ກະຊວງໄປສະນີ, ໂທລະຄົມ ແລະ ການສື່ສານ, ອົງການຈັດຕັ້ງສາກົນ ແລະ ພາກທຸລະກິດ ໂດຍມີຈຸດປະສົງໃນການສົ່ງເສີມໃຫ້ເກີດມີຜູ້ປະກອບກິດຈະການໃໝ່ແບບສະຕາດອັບເພີ່ມຂຶ້ນ ຊຶ່ງມີຜູ້ສະໝັກເຂົ້າແຂ່ງຂັນທັງໝົດ 600 ຫົວໜ່ວຍ ໂດຍນໍາໃຊ້ງົບປະມານທັງໝົດ 70.000 ໂດລາສະຫະລັດ ແລະ ໄດ້ສົ່ງຕົວແທນທຸລະກິດແບບສະຕາດອັບ 07 ຫົວໜ່ວຍ ເຂົ້າຮ່ວມແຂ່ງຂັນໃນງານ Startup Festival ທີ່ ສ. ເກົາຫລີ. ພ້ອມນັ້ນ, ໄດ້ເຊັນສັນຍາຮ່ວມມືສົ່ງເສີມສະຕາດອັບ ແລະ ນະວັດຕະກໍາ ລະຫວ່າງ ກະຊວງອຸດສາຫະກໍາ ແລະ ການຄ້າ ແຫ່ງ ສປປ ລາວ ແລະ ກະຊວງ SME ແລະ ສະຕາດອັບ ແຫ່ງ ສ. ເກົາຫລີ.

## 1.6 ນະໂຍບາຍສ້າງສະພາບແວດລ້ອມທີ່ເອື້ອອໍານວຍ ໃຫ້ແກ່ການສ້າງຕັ້ງ ແລະ ດໍາເນີນທຸລະກິດ

ສໍາເລັດການສະໜອງເຄື່ອງອຸປະກອນປັບປຸງລະບົບການຂຶ້ນທະບຽນ ແລະ ຈັດຝຶກອົບຮົມການນໍາໃຊ້ລະບົບດັ່ງກ່າວ ທັງໝົດ 167 ຈຸດ ໃນທົ່ວປະເທດ. ໃນນັ້ນ, ມີ 01 ຫ້ອງການຢູ່ກະຊວງອຸດສາຫະກໍາ ແລະ ການຄ້າ, ພະແນກອຸດສາຫະກໍາ ແລະ ການຄ້າ 17 ແຂວງ ແລະ ນະຄອນຫລວງ ແລະ ຫ້ອງການອຸດສາຫະກໍາ ແລະ ການຄ້າ 148 ເມືອງ. ພ້ອມນັ້ນ, ກໍ່ໄດ້ປັບປຸງເວັບໄຊທະບຽນວິສາຫະກິດ www.erm.gov.la ມາເປັນຖານຂໍ້ມູນວິສາຫະກິດແຫ່ງຊາດ www.ned.moic.gov.la ເພື່ອສະໜອງຂໍ້ມູນ ແລະ ນິຕິກໍາທີ່ກ່ຽວຂ້ອງກັບການຂຶ້ນທະບຽນວິສາຫະກິດໄດ້ຢ່າງຄົບຖ້ວນ ແລະ ທັນສະໄໝຍິ່ງຂຶ້ນ ພາຍໃຕ້ການສະໜັບສະໜູນຂອງ ADB.

ຈາກການປັບປຸງດັ່ງກ່າວ ໄດ້ຊ່ວຍໃຫ້ສາມາດຫລຸດຂັ້ນຕອນການຂຶ້ນທະບຽນວິສາຫະກິດຈາກ 10 ຂັ້ນຕອນ ທີ່ໃຊ້ເວລາສະເລ່ຍ 174 ວັນ ມາເປັນ 03 ຂັ້ນຕອນ ແລະ ໃຊ້ເວລາສະເລ່ຍພຽງ 17 ວັນ ແລະ ສາມາດເຊື່ອມໂຍງລະບົບການຂຶ້ນທະບຽນວິສາຫະກິດ ແລະ ທະບຽນອາກອນ ພ້ອມກັບຜ່ານລະບົບຂໍ້ມູນຂ່າວສານຄຸ້ມຄອງລາຍຮັບສ່ວຍສາອາກອນ (TaxRIS) ແລະ ມີແຜນເຊື່ອມໂຍງລະບົບການຂຶ້ນທະບຽນວິສາຫະກິດ ກັບຂະແໜງການກ່ຽວຂ້ອງກັບການອອກໃບອະນຸຍາດດໍາເນີນທຸລະກິດໃນທົ່ວປະເທດ. ນອກນັ້ນ,ໄດ້ຈັດການຝຶກອົບຮົມວຽກງານປະເມີນຜົນກະທົບທາງດ້ານນິຕິກໍາ ໃຫ້ແກ່ບັນດາກະຊວງ ແລະ ອົງການຈັດຕັ້ງພາກລັດ ແລະ ພາກທຸລະກິດ ໃນ 18 ແຂວງ ທົ່ວປະເທດ.

ກະຊວງອຸດສາຫະກໍາ ແລະ ການຄ້າ ໄດ້ເປັນເຈົ້າການຜັນຂະຫຍາຍເນື້ອໃນຈິດໃຈຂອງຄໍາສັ່ງ ສະບັບເລກທີ 03/ນຍ ວ່າດ້ວຍການປັບປຸງວຽກງານບໍລິການການອອກໃບອະນຸຍາດລົງທຶນ ແລະ ການອອກໃບອະນຸຍາດດໍາເນີນທຸລະກິດ ໃຫ້ມີຄວາມສະດວກວ່ອງໄວ ແລະ ໃຫ້ສອດຄ່ອງກັບບົດຮຽນທີ່ດີຂອງສາກົນ ໂດຍກໍານົດການອອກໃບອະນຸຍາດດໍາເນີນທຸລະກິດຕາມຄວາມສ່ຽງຂອງກິດຈະການ ແລະ ສ້າງກົນໄກການຄຸ້ມຄອງທີ່ເຂັ້ມແຂງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດດັ່ງກ່າວມີປະສິດທິພາບ ຊຶ່ງປະຈຸບັນ ກໍາລັງສັງລວມລາຍການທີ່ຕ້ອງການອອກອະນຸຍາດດໍາເນີນທຸລະກິດ ທັງກິດຈະການທີ່ຢູ່ໃນ ແລະ ນອກບັນຊີຄວບຄຸມ.

## 1.7 ນະໂຍບາຍພາສີ - ອາກອນ ແລະ ດ້ານການເງິນ

ລັດຖະບານ ໄດ້ຈັດສັນງົບປະມານ 200 ຕື້ກີບ ຕໍ່ປີ ເພື່ອເປັນແຫລ່ງທຶນໃຫ້ແກ່ ກອງທຶນສົ່ງເສີມ ວນກ ເພື່ອສະໜອງສິນເຊື່ອໃຫ້ ວນກ ໃນອັດຕາດອກເບ້ຍຕໍ່າ ໂດຍຜ່ານທະນາຄານທຸລະກິດ ແລະ ນໍາໃຊ້ເຂົ້າໃນໂຄງການວິຊາການ. ພາຍໃຕ້ບ້ວງເງິນດັ່ງກ່າວນີ້, ໄດ້ຈັດສັນງົບປະມານຈໍານວນ 91% ຫລື 182 ຕື້ກີບ ເພື່ອນໍາໃຊ້ສໍາລັບສິນເຊື່ອ ແລະ 8% ຫລື 16 ຕື້ກີບ ສໍາລັບໂຄງການວິຊາການ. ພ້ອມນັ້ນ, ໄດ້ມີການສະໜອງທຶນໃນອັດຕາດອກເບ້ຍຕໍ່າຈາກທະນາຄານໂລກຈໍານວນ 10 ລ້ານໂດລາ ແລະ ຊ່ວຍເຫລືອລ້າ 05 ລ້ານໂດລາ ເພື່ອສະໜອງສິນເຊື່ອໃຫ້ແກ່ ວນກ. ສະເພາະໃນໄລຍະຂອງການລະບາດຂອງພະຍາດໂຄວິດ-19, ທະນາຄານແຫ່ງ ສປປ ລາວ ໄດ້ອະນຸມັດເງິນກູ້ຈໍານວນ 1800 ຕື້ກີບ ເພື່ອສະໜອງສິນເຊື່ອໃຫ້ແກ່ ວນກ ຜ່ານທະນາຄານທຸລະກິດຈໍານວນໜຶ່ງ.

ກົມສ່ວຍສາອາກອນ, ກະຊວງການເງິນ ໄດ້ກຳນົດການຍົກເວັ້ນອາກອນມູນຄ່າເພີ່ມ ຈຳນວນ 40 ລາຍການ ເພື່ອສົ່ງເສີມທຸລະກິດ ແລະ ຫລຸດຜ່ອນຕົ້ນທຶນຂອງວິສາຫະກິດ ຕາມກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018 ແລະ ຍົກເວັ້ນສຳລັບການສົ່ງອອກໃນອັດຕາ 0%. ນອກນັ້ນ, ໄດ້ປະຕິບັດຕາມ ກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 08 ມິຖຸນາ 2019 ຊຶ່ງໄດ້ກຳນົດລາຍຮັບຂອງຈຸນລະວິສາຫະກິດ 50 ລ້ານລົງມາແມ່ນໃຫ້ຍົກເວັ້ນການເສຍອາກອນ ແລະ ຈຸນລະວິສາຫະກິດທີ່ມີລາຍຮັບແຕ່ 50 ລ້ານ ເຖິງ 400 ລ້ານ, ຂະແໜງການຜະລິດແມ່ນນຳໃຊ້ອັດຕາອາກອນ 1%, ການຄ້າ 2% ແລະ ການບໍລິການ ໃນອັດຕາ 3%.

## 2. ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້

ຜ່ານການຈັດຕັ້ງປະຕິບັດ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016 – 2020 ສາມາດສັງລວມໄດ້ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້ ດັ່ງນີ້:

### 2.1 ຂໍ້ສະດວກ

ທິດຊີ້ນຳຂອງສູນກາງພັກ ກ່ຽວກັບນະໂຍບາຍສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ກຳນົດໃນມະຕິ 4 ສະໄໝທີ X ຂອງ ພັກປະຊາຊົນ ປະຕິວັດລາວ ໄດ້ເປັນບ່ອນອີງໃຫ້ແກ່ລັດຖະບານ ໃນການສ້າງແຜນພັດທະນາ ວນກ ແລະ ຊີ້ນຳບັນດາຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນຕ່າງໆ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຢ່າງມີຈຸດສຸມ. ຢູ່ຂັ້ນສູນກາງ ແລະ ບັນດາແຂວງ ໄດ້ຜັນຂະຫຍາຍເປັນແຜນພັດທະນາ ວນກ ທີ່ເປັນອັນສະເພາະຂອງຕົນ ໂດຍໄດ້ຮັບການຮັບຮອງ ແລະ ປະກາດໃຊ້ຢ່າງເປັນທາງການ ເພື່ອຈັດຕັ້ງປະຕິບັດ ແລະ ລະດົມການສະໜັບສະໜູນ ຈາກພາກສ່ວນຕ່າງໆທັງພາຍໃນ ແລະ ຕ່າງປະເທດ ໄດ້ເປັນຢ່າງດີ.

ສປປ ລາວ ມີນິຕິກຳຈຳນວນໜຶ່ງ ທີ່ໄດ້ກຳນົດຫລັກການ, ມາດຕະການ ແລະ ວິທີການ ທີ່ເປັນພື້ນຖານໃຫ້ແກ່ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແຜນພັດທະນາ ວນກ ໃນແຕ່ລະໄລຍະ ເຊັ່ນ: ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011; ດຳລັດຂອງລັດຖະບານວ່າ ດ້ວຍການຈັດແບ່ງຂະໜາດວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 25/ລບ, ລົງວັນທີ 16 ມັງກອນ 2017 ແລະ ດຳລັດວ່າດ້ວຍກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 299/ລບ, ລົງວັນທີ 04 ກັນຍາ 2019.

ສປປ ລາວ ສາມາດຮຽນຮູ້ບົດຮຽນທີ່ດີ ແລະ ວິທີການທີ່ມີປະສິດທິຜົນ ໃນການສົ່ງເສີມ ວນກ ໃນພາກພື້ນ ແລະ ສາກົນ ໂດຍສະເພາະແມ່ນບົດຮຽນຂອງປະເທດສະມາຊິກອາຊຽນ ຊຶ່ງມີກົນໄກໃນການຮ່ວມມືດ້ານການສົ່ງເສີມ ວນກ ຢູ່ແລ້ວຄື: ຄະນະກຳມະການປະສານງານຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງອາຊຽນ (ACCMSME) ຊຶ່ງມີການເຄື່ອນໄຫວຢ່າງປົກກະຕິ ໂດຍມີການປະຊຸມກັນ 02 ຄັ້ງຕໍ່ປີ ເພື່ອແລກປ່ຽນບົດຮຽນກ່ຽວກັບ ນະໂຍບາຍ, ແຜນພັດທະນາ ແລະ ວິທີການ ໃນການສົ່ງເສີມ ວນກ. ນອກຈາກນັ້ນ, ໃນເວທີກອງປະຊຸມຄະນະກຳມະການດັ່ງກ່າວ ຍັງໄດ້ເຮັດໜ້າທີ່ເປັນເວທີແລກປ່ຽນບົດຮຽນ ແລະ ຍາດແຍ່ງການຮ່ວມມືກັບບັນດາປະເທດຄູ່ເຈລະຈາຂອງອາຊຽນ ເຊັ່ນ: ຍີ່ປຸ່ນ, ສ.ເກົາຫລີ, ຈີນ, ອົດສະຕາລີ, ສະຫະລັດອາເມລິກາ ແລະ ປະເທດອື່ນໆ.

## 2.2 ຂໍ້ຫຍຸ້ງຍາກ

ຂາດກົນໄກຊີ້ນຳ ແລະ ປະສານງານ ເພື່ອເຮັດໜ້າທີ່ໃນການຊຸກຍູ້ການຈັດຕັ້ງປະຕິບັດ ແຜນພັດທະນາ ວນກ ເນື່ອງຈາກວ່າການພັດທະນາ ວນກ ກວມເອົາວິສາຫະກິດໃນທຸກຂະແໜງເສດຖະກິດ. ການພັດທະນາ ວນກ ວຽກສ່ວນໃຫຍ່ແມ່ນການສຸມໃສ່ແກ້ໄຂບັນຫາທີ່ຕິດພັນກັບຫລາຍຂະແໜງການ ແລະ ຫລາຍພາກສ່ວນ (Cross Cutting Issues) ເພື່ອຫລຸດຜ່ອນສິ່ງກີດຂວາງ ແລະ ສ້າງບັນດາເງື່ອນໄຂທີ່ຈຳເປັນໃຫ້ ວນກ ເກີດຂຶ້ນຢ່າງແຜ່ຫລາຍ ແລະ ມີຄວາມຍືນຍົງ ເຊັ່ນ: ຖ້າຢາກແກ້ໄຂບັນຫາທີ່ເປັນອຸປະສັກໃຫ້ແກ່ການສ້າງຕັ້ງທຸລະກິດໃໝ່ ຕ້ອງແກ້ໄຂລະບົບການຂຶ້ນທະບຽນໃນຂະແໜງອຸດສາຫະກຳ ແລະ ການຄ້າ, ການຂຶ້ນທະບຽນອາກອນນຳຂະແໜງການເງິນ, ການຂໍກາປະທັບຈາກຂະແໜງປ້ອງກັນຄວາມສະຫງົບ ແລະ ການຂໍອະນຸຍາດດຳເນີນກິດຈະການກັບຂະແໜງການກ່ຽວຂ້ອງ. ສະນັ້ນ, ຫລາຍປະເທດ ຈຶ່ງມີການຈັດຕັ້ງຄະນະກຳມະການລະດັບຊາດທີ່ມີນາຍົກລັດຖະມົນຕີ ຫລື ຮອງນາຍົກລັດຖະມົນຕີ ເປັນປະທານ ເພື່ອອອກນະໂຍບາຍ, ຮັບຮອງແຜນພັດທະນາ ວນກ ແລະ ເປັນກົນໄກໃນການປະສານງານໃນການຈັດຕັ້ງປະຕິບັດ ແຜນພັດທະນາ ວນກ ໃນແຕ່ລະໄລຍະ.

ຂາດພະນັກງານຄຸ້ມຄອງ ທາງດ້ານປະລິມານ ແລະ ຄຸນນະພາບ ໃນລະດັບຕ່າງໆ ບໍ່ວ່າຈະເປັນໃນລະດັບການຄົ້ນຄວ້ານະໂຍບາຍ, ການຄຸ້ມຄອງໂຄງການ, ການຕິດຕາມ ແລະ ປະເມີນຜົນ ແລະ ການລາຍງານ. ຂາດຜູ້ຊ່ຽວຊານໃນບັນດາດ້ານທີ່ ວນກ ມີຄວາມຕ້ອງການ. ການຊ່ວຍເຫລືອດ້ານວິຊາການໃນໄລຍະຜ່ານມາ ສ່ວນໃຫຍ່ແມ່ນການບໍລິການດ້ານວິຊາການແບບທົ່ວໄປ ເຊັ່ນ: ການຝຶກອົບຮົມດ້ານຕ່າງໆ, ການບໍລິຫານທຸລະກິດ, ການໃຫ້ການປຶກສາແນະນຳແບບທົ່ວໄປເທົ່ານັ້ນ. ສຳລັບການສະໜອງການບໍລິການຈາກຜູ້ຊ່ຽວຊານ ທີ່ມີຄວາມຊຳນານສະເພາະດ້ານແມ່ນຍັງຈຳກັດ ຊຶ່ງສ່ວນໃຫຍ່ຍັງອີງໃສ່ຊ່ຽວຊານຕ່າງປະເທດ ເຊັ່ນ: ການບໍລິຫານເພື່ອປັບປຸງຄຸນນະພາບຜະລິດຕະພັນ ແລະ ການບໍລິການ, ເຕັກໂນໂລຊີການຜະລິດ, ເຕັກນິກໃນການປູກຝັງ, ລ້ຽງສັດ, ການປຸງແຕ່ງ ແລະ ຖະໜອມອາຫານ, ການພັດທະນາຊ໊ອບແວ ແລະ ອື່ນໆ.

ທີ່ຕັ້ງ ແລະ ພາລະບົດບາດຂອງກົງຈັກການຈັດຕັ້ງ ທີ່ເປັນແກນກາງໃນການຄົ້ນຄວ້ານະໂຍບາຍ, ການວາງແຜນ, ການຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ໃນການຈັດຕັ້ງປະຕິບັດແຜນພັດທະນາ ວນກ ຍັງມີຂໍ້ຈຳກັດ ເຮັດໃຫ້ການເຄື່ອນໄຫວ ແລະ ການປະສານງານ ບໍ່ທັນມີປະສິດຕິພາບ ແລະ ປະສິດທິຜົນ ເທົ່າທີ່ຄວນ.

## 2.3 ບົດຮຽນທີ່ຖອດຖອນໄດ້

ແຜນພັດທະນາ ວນກ ແຕ່ 2016 – 2020 ໄດ້ກຳນົດຂົງເຂດນະໂຍບາຍທີ່ເປັນຈຸດສຸມໃນການພັດທະນາ ແລະ ບັນດາມາດຕະການ, ໂຄງການ ແລະ ກິດຈະກຳໃນການສົ່ງເສີມ ວນກ ໃນແຕ່ລະຂົງເຂດນະໂຍບາຍແມ່ນຫລາຍເກີນໄປ ເຫັນວ່າເກີນກັບຄວາມອາດສາມາດຕົວຈິງຂອງຊັບພະຍາກອນທີ່ເຮົາມີ ເຊັ່ນ: ພະນັກງານ, ງົບປະມານ, ວິທີການ, ຄວາມຮູ້ເຮັດ ແລະ ອື່ນໆ. ສະນັ້ນ ການສ້າງແຜນພັດທະນາ ວນກ ແຕ່ 2021 – 2025 ຄວນກຳນົດຂົງເຂດນະໂຍບາຍທີ່ເປັນຈຸດສຸມໃນການພັດທະນາ ວນກ ພ້ອມກັບການກຳນົດບຸລິມະສິດຂອງບັນດາກິດຈະກຳ ແລະ ໂຄງການ ໃນການຈັດຕັ້ງປະຕິບັດ.

ການນຳໃຊ້ພາກທຸລະກິດເພື່ອໃຫ້ການຊ່ວຍເຫລືອ ວນກ ເຫັນວ່າມີປະສິດທິຜົນ, ມີຄວາມຄ່ອງຕົວ ແລະ ສະດຸ້ງໄວຕໍ່ຄວາມຕ້ອງການ ຈນກ ເນື່ອງຈາກວ່າບໍ່ຕິດຂັດແບບລະບົບລັດຖະການ. ສະນັ້ນ ໃນການຈັດຕັ້ງປະຕິບັດແຜນພັດທະນາ ວນກ ໃນຕໍ່ໜ້າ ຄວນເພີ່ມທະວີນຳໃຊ້ ແລະ ສະໜັບສະໜູນພາກທຸລະກິດ ເຮັດໜ້າທີ່ສົ່ງເສີມ ແລະ ໃຫ້ການຊ່ວຍເຫລືອ ວນກ ໃຫ້ຫລາຍຂຶ້ນ.

ຜົນການສຳຫລວດເສດຖະກິດທົ່ວປະເທດ ຄັ້ງທີ III (2020) ໄດ້ສະແດງໃຫ້ເຫັນວ່າ ຈຸນລະວິສາຫະກິດ ທີ່ມີແຮງງານຕ່ຳກວ່າ 05 ຄົນ ກວມເອົາຫລາຍກວ່າ 90% ຂອງວິສາຫະກິດທົ່ວປະເທດ. ສະນັ້ນ, ເພື່ອເຮັດໃຫ້ການພັດທະນາວິສາຫະກິດໃນຕໍ່ໜ້າ ມີຈຸດສຸມ, ລົງເລິກ ແລະ ທົ່ວເຖິງຂຶ້ນຕື່ມ, ແຜນພັດທະນາ ວນກ 2021-2025 ຈະກຳນົດເອົາ ຈຸນລະວິສາຫະກິດ ເຂົ້າໃນແຜນພັດທະນາດັ່ງກ່າວ ໂດຍກາຍເປັນ ແຜນພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 2021 – 2025.

# III. ອຸປະສັກ ແລະ ສິ່ງທ້າທາຍ ຂອງຈຸນລະວິສາຫະກິດ, ວິສາຫະກິດ ຂະໜາດນ້ອຍ ແລະ ກາງ



## III. ອຸປະສັກ ແລະ ສິ່ງທ້າທາຍ ຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ




ຜົນສຳຫລວດເສດຖະກິດທົ່ວປະເທດ ຄັ້ງທີ III (2020) ໄດ້ສະແດງໃຫ້ເຫັນໂຄງປະກອບສ້າງຂອງບັນດາວິສາຫະກິດໃນທົ່ວປະເທດ ຊຶ່ງຈຳນວນຈຸນລະວິສາຫະກິດກວມເອົາເຖິງ 94,2%, ວິສາຫະກິດຂະໜາດນ້ອຍ 4,9% ແລະ ວິສາຫະກິດຂະໜາດກາງ 0,7%. ບັນດາວິສາຫະກິດເຫລົ່ານີ້ ເຄື່ອນໄຫວໃນຂະແໜງການຄ້າເປັນສ່ວນໃຫຍ່ ຊຶ່ງກວມເອົາ 63,8%, ການບໍລິການ 20,4% ແລະ ການຜະລິດພຽງແຕ່ 15,8%. ໃນຈຳນວນບັນດາວິສາຫະກິດທົ່ວປະເທດເຫລົ່ານີ້, ມີພຽງແຕ່ 30,4% ຂຶ້ນທະບຽນວິສາຫະກິດຢ່າງເປັນທາງການ ແລະ 22% ມີໃບອະນຸຍາດດຳເນີນທຸລະກິດ. ອັດຕາການຂຶ້ນທະບຽນວິສາຫະກິດ ແລະ ມີໃບອະນຸຍາດດຳເນີນທຸລະກິດ ມີຈຳນວນໜ້ອຍ ເນື່ອງຈາກວ່າອັດຕາສ່ວນຂອງຈຸນລະວິສາຫະກິດທີ່ມີແຮງງານ 1-5 ຄົນ ຊຶ່ງສ່ວນໃຫຍ່ແມ່ນທຸລະກິດແບບເອກະເທດ ຫລື ເປັນທຸລະກິດແບບຄອບຄົວ ຊຶ່ງເປັນສາເຫດໃຫ້ມີອັດຕາສ່ວນວິສາຫະກິດນອກລະບົບສູງ.

ການດຳເນີນທຸລະກິດຂອງຈຸນລະວິສາຫະກິດ ທີ່ກວມອັດຕາສ່ວນຫລາຍ ແລະ ສ່ວນໃຫຍ່ແມ່ນນອນໃນຂະແໜງການຄ້າ ເຮັດໃຫ້ການດຳເນີນກິດຈະກຳທາງທຸລະກິດມີມູນຄ່າຕ່ຳ, ອັດຕາມູນຄ່າເພີ່ມໜ້ອຍ, ຂາດການນຳໃຊ້ເຕັກນິກວິທະຍາສາດ ແລະ ຂາດການພັດທະນາດ້ານນະວັດຕະກຳໃໝ່ ຊຶ່ງສະພາບດັ່ງກ່າວເຮັດໃຫ້ກະທົບຕໍ່ກັບການຈ້າງງານ, ການສ້າງມູນຄ່າເພີ່ມຕໍ່ກັບເສດຖະກິດ ແລະ ຖານລາຍຮັບຂອງລັດຖະບານ ເນື່ອງຈາກຂາດແຄນທຸລະກິດຂະໜາດກາງ ທີ່ມີທ່າແຮງກວ່າ.

### 1. ດ້ານການພັດທະນາຜູ້ປະກອບກິດຈະການ




ຈາກຜົນສຳຫລວດເສດຖະກິດທົ່ວປະເທດ ຄັ້ງທີ III (2020) ໄດ້ສະແດງໃຫ້ເຫັນວ່າ ຈຳນວນປະຊາກອນທຸລະກິດຢູ່ ສປປ ລາວ ແມ່ນມີຈຳນວນໜ້ອຍ, ກວມເອົາພຽງແຕ່ 1,9% ຂອງພົນລະເມືອງ, ຫລຸດລົງຈາກ 2% ໃນການສຳຫລວດເສດຖະກິດທົ່ວປະເທດ ຄັ້ງທີ II (2013) ທຽບໃສ່ມາເລເຊຍ 2,8%, ໄທ 3,6% ແລະ ສິງກະໂປ 4,8%. ສາເຫດທີ່ ສປປ ລາວ ມີຈຳນວນປະຊາກອນທຸລະກິດໜ້ອຍ ແມ່ນຍ້ອນແນວຄິດການເປັນຜູ້ປະກອບກິດຈະການຂອງປະຊາກອນຍັງບໍ່ທັນກວ້າງຂວາງ, ຫລັກສູດການສຶກສາທີ່ຕິດພັນກັບການສ້າງຜູ້ປະກອບກິດຈະການຍັງບໍ່ທັນລົງເລິກ ແລະ ສະພາບແວດລ້ອມການສົ່ງເສີມດຳເນີນທຸລະກິດຍັງມີຂໍ້ຈຳກັດຫລາຍຢ່າງ ເຊັ່ນ: ລະບົບໂຄງລ່າງພື້ນຖານ, ການພັດທະນາຊັບພະຍາກອນມະນຸດ ແລະ ນິຕິກຳ ທີ່ກ່ຽວຂ້ອງ.

ຫລັກສູດການສຶກສາໃນປະຈຸບັນ ຍັງແມ່ນຫລັກສູດທີ່ເນັ້ນໜັກໃສ່ຂະແໜງການສະເພາະ. ພ້ອມນັ້ນ, ການສົ່ງເສີມການສຶກສາໃນລະດັບວິຊາຊີບ ຍັງບໍ່ທັນປະສົບຜົນສຳເລັດເທົ່າທີ່ຄວນ ເຖິງວ່າພາກສ່ວນທີ່ກ່ຽວຂ້ອງຈະມີໂຄງການ ຫລື ກິດຈະກຳເພື່ອດຶງດູດນັກຮຽນແລ້ວກໍ່ຕາມ. ສຳລັບຫລັກສູດທີ່ກ່ຽວຂ້ອງກັບການເປັນຜູ້ປະກອບກິດຈະການ ຍັງເນັ້ນໜັກໃສ່ຫລັກສູດບໍລິຫານທຸລະກິດ, ເປັນຕົ້ນໃນລະດັບປະລິນຍາຕີ ຊຶ່ງຍັງບໍ່ທັນຕອບສະໜອງ

ໄດ້ ໃນການສ້າງແນວຄວາມຄິດໃນການຫັນເປັນຜູ້ປະກອບກິດຈະການ ຂອງນັກຮຽນ, ນັກສຶກສາ. ນອກນັ້ນ, ກິດຈະກຳສິ່ງເສີມການເປັນຜູ້ປະກອບກິດຈະການ ຍັງບໍ່ທັນມີຄວາມຫລາກຫລາຍ ແລະ ຍັງບໍ່ທັນເຂົ້າເຖິງກຸ່ມເປົ້າໝາຍ.

## 2. ດ້ານການເຂົ້າເຖິງແຫລ່ງທຶນ

ການເຂົ້າເຖິງແຫລ່ງທຶນ ຍັງເປັນໜຶ່ງໃນຂໍ້ຫຍຸ້ງຍາກສຳລັບ ຈນກ. ອີງຕາມບົດສຳຫລວດ Lao Economic Monitor August 2019: Doing business for Small and Medium enterprises ຈາກທະນາຄານໂລກ ໄດ້ຊີ້ໃຫ້ເຫັນວ່າ ອັດຕາດອກເບ້ຍເງິນກູ້ຂອງສະຖາບັນການເງິນໃຫ້ແກ່ ຈນກ ຍັງມີອັດຕາສູງ ເນື່ອງຈາກການສະໜອງສິນເຊື່ອສ່ວນໃຫຍ່ ແມ່ນນຳໃຊ້ແຫລ່ງທຶນຈາກການລະດົມເງິນຝາກຈາກສັງຄົມເປັນຕົ້ນຕໍ ຊຶ່ງເປັນແຫລ່ງທຶນທີ່ມີຕົ້ນທຶນສູງ ແລະ ມີໄລຍະສັ້ນ.




ບັນດາສະຖາບັນການເງິນ ແບກຮັບຄວາມສ່ຽງຈາກການສະໜອງສິນເຊື່ອໃຫ້ແກ່ ຈນກ. ສະນັ້ນ, ສະຖາບັນການເງິນ ຈຶ່ງຮຽກຮ້ອງຫລັກຊັບຄ້ຳປະກັນ ແລະ ເອກະສານທີ່ກ່ຽວຂ້ອງຈຳນວນຫລາຍເພື່ອປະເມີນອະນຸມັດສິນເຊື່ອ. ນອກນັ້ນ, ການຈັດສັນແຫລ່ງທຶນໃນການສະໜອງສິນເຊື່ອໃຫ້ແກ່ ຈນກ ແມ່ນຍັງຈຳກັດ ຖ້າທຽບໃສ່ການປ່ອຍກູ້ໃຫ້ແກ່ບໍລິສັດຂະໜາດໃຫຍ່. ຜະລິດຕະພັນສິນເຊື່ອສຳລັບ ຈນກ ແມ່ນຍັງບໍ່ມີຄວາມຫລາກຫລາຍ, ຍັງຮຽກຮ້ອງຊັບສິນຄົງທີ່ ເປັນຫລັກຊັບຄ້ຳປະກັນຫລັກ ຊຶ່ງເປັນຂໍ້ຈຳກັດສຳລັບການຂໍສິນເຊື່ອເພື່ອຂະຫຍາຍທຸລະກິດ ແລະ ເປັນອຸປະສັກຕໍ່ກັບບັນດາຜູ້ປະກອບກິດຈະການໃໝ່, ເປັນຕົ້ນແມ່ນຜູ້ປະກອບກິດຈະການປະເພດທຸລະກິດແບບສະຕາດອັບ. ການພັດທະນາ ແລະ ຈັດຕັ້ງປະຕິບັດ ລະບົບການຄ້ຳປະກັນສິນເຊື່ອຍັງບໍ່ທັນສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການໂຕຈິງ.

ຈາກຜົນການສຳຫລວດເສດຖະກິດທົ່ວປະເທດ (2020) ໄດ້ຊີ້ໃຫ້ເຫັນວ່າ 96,2% ຂອງບັນດາວິສາຫະກິດໃນທົ່ວປະເທດບໍ່ມີການຖືບັນຊີ ຊຶ່ງໃນນັ້ນ 96,8% ຂອງຈຸນລະວິສາຫະກິດ ແລະ 79,3% ຂອງວິສາຫະກິດຂະໜາດນ້ອຍບໍ່ຖືບັນຊີ. ນອກນັ້ນ, ຈນກ ສ່ວນໃຫຍ່ຍັງບໍ່ມີແຜນດຳເນີນທຸລະກິດ ແລະ ບົດລາຍງານການເງິນທີ່ລະອຽດ ຊຶ່ງເປັນອຸປະສັກໃນການພິຈາລະນາປ່ອຍກູ້ຈາກສະຖາບັນການເງິນ.

## 3. ດ້ານຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ

ຈາກການສຳຫລວດ ຂອງອົງການຜະລິດຕະພາບແຫ່ງອາຊີ (2020) ຜະລິດຕະພາບດ້ານແຮງງານຂອງ ສປປ ລາວ ສາມາດຜະລິດມູນຄ່າໄດ້ 14.200 ໂດລາສະຫະລັດ/ຄົນ/ປີ, ເພີ່ມຂຶ້ນ 5.200 ໂດລາສະຫະລັດ ຈາກການສຳຫລວດໃນປີ 2014. ເຖິງແນວໃດກໍ່ຕາມ, ໂຕເລກດັ່ງກ່າວເຫັນວ່າຍັງຕ່ຳກວ່າຫລາຍປະເທດໃນພາກພື້ນ ເປັນຕົ້ນແມ່ນ ສິງກະໂປ ທີ່ສາມາດຜະລິດມູນຄ່າໄດ້ 149.100 ໂດລາສະຫະລັດ, ມາເລເຊຍ 55.400 ໂດລາສະຫະລັດ ແລະ ໄທ 30.800 ໂດລາສະຫະລັດ/ຄົນ/ປີ. ນອກນັ້ນ, ຈຳນວນຊ່ຽວຊານທີ່ໃຫ້ຄຳແນະນຳດ້ານການປັບປຸງຜະລິດຕະພາບ ແລະ ຄຸນນະພາບ ແມ່ນຍັງມີຈຳກັດ.




ຈນກ ຍັງມີຂໍ້ຈຳກັດດ້ານຄວາມຮູ້ ແລະ ທຶນ ໃນການນຳໃຊ້ເຕັກໂນໂລຊີເຂົ້າໃນກິດຈະກຳທຸລະກິດ ທັງການຜະລິດ, ການບໍລິຫານ ແລະ ການເຂົ້າສູ່ຕະຫລາດ. ເນື່ອງຈາກວິສາຫະກິດສ່ວນໃຫຍ່ແມ່ນຈຸນລະວິສາຫະກິດ ຊຶ່ງດຳເນີນການໃນຮູບແບບທຸລະກິດຄອບຄົວ ຊຶ່ງມີຂໍ້ຈຳກັດດ້ານທຶນຮອນເພື່ອຈັດຊື້ເຕັກໂນໂລຊີສຳລັບການຜະລິດ. ນອກນັ້ນ, ຈນກ ສ່ວນໃຫຍ່ ຮັບຮູ້ການນຳໃຊ້ເຕັກໂນຊີໃນລະດັບພື້ນຖານ ເຊັ່ນ: ການນຳໃຊ້ Microsoft office, ອີເມວ, ຄອມພິວເຕີ, ສື່ສັງຄົມອອນລາຍ ຫລື ໂທລະສັບທັນສະໄໝ ຊຶ່ງບັນດາເຕັກໂນໂລຊີເຫລົ່ານີ້ ຍັງບໍ່ທັນຕອບສະໜອງໄດ້ພຽງພໍ ຕໍ່ກັບປະສິດທິພາບການດຳເນີນຜະລິດທຸລະກິດ ຈນກ.

ການຮ່ວມມືສົ່ງເສີມການພັດທະນານະວັດຕະກຳລະຫວ່າງ ພາກລັດ ແລະ ພາກທຸລະກິດ ຍັງບໍ່ທັນມີກົນໄກທີ່ມີປະສິດທິພາບ. ລັດຖະບານຍັງບໍ່ທັນສະໜອງງົບປະມານທີ່ພຽງພໍສຳລັບການຄົ້ນຄວ້າດ້ານນະວັດຕະກຳ ຊຶ່ງມີພຽງແຕ່ 0,04% ຂອງ GDP ໃນປີ 2020, ທຽບໃສ່ຫວຽດນາມ 0,53% ແລະ ສິງກະໂປ 1,95%. ນອກນັ້ນ, ຈາກສະຖິຕິຂອງອົງການຊັບສິນປັນຍາໂລກ ສະແດງໃຫ້ເຫັນວ່າ ໃນປີ 2018-2019, ໄດ້ມີການອອກທະບຽນ ສິດທິບັດ ຈຳນວນ 05 ສິ່ງປະດິດ, ແບບອຸດສາຫະກຳ ຈຳນວນ 89 ແບບ, ເຄື່ອງໝາຍການຄ້າ ຈຳນວນ 5,323 ເຄື່ອງໝາຍ ແລະ ອອກໃບຢັ້ງຢືນການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຈຳນວນ 130 ຜົນງານ. ທຽບໃສ່ປະເທດຟີລິບປິນ ແລະ ຫວຽດນາມ ທີ່ມີການຂຶ້ນທະບຽນປົກປ້ອງຊັບສິນທາງປັນຍາ 674 ແລະ 838 ລາຍການ ແລະ ຂຶ້ນທະບຽນເຄື່ອງໝາຍການຄ້າ 36,628 ແລະ 84,547 ລາຍການ ຕາມລຳດັບ.




## 4. ດ້ານການເຂົ້າເຖິງການບໍລິການວິຊາການເພື່ອພັດທະນາທຸລະກິດ

ສູນບໍລິການ ວນກ ທີ່ຂຶ້ນກັບ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໄດ້ເຕົ້າໂຮມເອົາບັນດາວິສາຫະກິດ ແລະ ສະຖາບັນ ເພື່ອສ້າງເປັນເຄືອຂ່າຍຜູ້ສະໜອງການບໍລິການວິຊາການເພື່ອພັດທະນາທຸລະກິດ ແລະ ໄດ້ສະໜອງການຝຶກອົບຮົມໃຫ້ແກ່ ຈນກ ໃນບາງຂົງເຂດ ເຊັ່ນ: ການບໍລິຫານ-ຈັດການ, ການຕະຫລາດ, ການຂຽນແຜນທຸລະກິດ ແລະ ການຄຸ້ມຄອງການເງິນ ຊຶ່ງການຝຶກອົບຮົມດັ່ງກ່າວ ແມ່ນໄດ້ດຳເນີນໃນສູນກາງ ແລະ ທ້ອງຖິ່ນ. ເຖິງແນວໃດກໍ່ຕາມ, ຊ່ຽວຊານສະເພາະດ້ານ ຍັງມີຄວາມຈຳກັດດ້ານປະລິມານ ແລະ ຄຸນນະພາບ, ຫົວຂໍ້ໃນການຝຶກອົບຮົມ ຍັງບໍ່ທັນຕອບສະໜອງໄດ້ໃນການພັດທະນາ ຈນກ ເປັນຕົ້ນແມ່ນການປັບປຸງຄຸນນະພາບຂອງສິນຄ້າ ແລະ ບໍລິການ ຂອງ ຈນກ. ພ້ອມນັ້ນ, ຈນກ ຍັງຂາດຄວາມຮັບຮູ້ກ່ຽວກັບຂໍ້ມູນຂອງບັນດາການຝຶກອົບຮົມໃນຫົວຂໍ້ຕ່າງໆ ແລະ ຍັງບໍ່ທັນຮັບຮູ້ເຖິງຄວາມສຳຄັນຂອງການຊ່ວຍເຫລືອວິຊາການ ໂດຍການນຳໃຊ້ບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ.

ການສົ່ງເສີມ ຈນກ ໃນລະດັບອາຊຽນ ໄດ້ມີໂຄງການ SME Academy ໂດຍການສັງລວມເອົາບັນດາຫລັກການດ້ານການບໍລິຫານ, ການເຂົ້າເຖິງຕະຫລາດ ແລະ ບົດຮຽນຈາກບັນດາບໍລິສັດຂະໜາດໃຫຍ່ ຊຶ່ງ ຈນກ ສາມາດເຂົ້າເຖິງຂໍ້ມູນເຫລົ່ານັ້ນໄດ້ໂດຍບໍ່ເສຍຄ່າໃຊ້ຈ່າຍ. ເຖິງແນວໃດກໍ່ຕາມ, ຂໍ້ຈຳກັດດ້ານພາສາຕ່າງປະເທດຂອງ ຈນກ ເປັນສາເຫດໃຫ້ມີການນຳໃຊ້ຂໍ້ມູນຈາກໂຄງການດັ່ງກ່າວພຽງເລັກນ້ອຍ ທຽບໃສ່ປະເທດອື່ນໃນຂົງເຂດ.

## 5. ດ້ານການເຂົ້າເຖິງ ແລະ ຂະຫຍາຍຕະຫລາດ

**MSME ພຽງແຕ່**

**6.07%**

**ສົ່ງອອກສິນຄ້າ**

ຈນກ ຍັງເນັ້ນໜັກໃນການເຂົ້າເຖິງຕະຫລາດພາຍໃນປະເທດເປັນສ່ວນໃຫຍ່ ໂດຍດຳເນີນການຜະລິດ ແລະ ການບໍລິການໃນລະດັບນ້ອຍ, ບໍ່ຕໍ່ເນື່ອງ, ບໍ່ພຽງພໍຕໍ່ກັບຄວາມຕ້ອງການ ເພື່ອສະໜອງໃຫ້ແກ່ຕະຫລາດພາຍໃນປະເທດ. ການເຂົ້າເຖິງຕະຫລາດພາຍໃນ ແມ່ນດຳເນີນຜ່ານຫລາຍຮູບການດັ້ງເດີມ ເຊັ່ນ: ການຕັ້ງສາຂາທຸລະກິດ, ການເຂົ້າຮ່ວມງານວາງສະແດງສິນຄ້າ ແລະ ຕະຫລາດນັດ ຕາມບັນດາເທດສະການຂອງແຕ່ລະທ້ອງຖິ່ນ. ນອກນັ້ນ, ຄຸນນະພາບ ແລະ ມາດຕະຖານຂອງສິນຄ້າ ແລະ ບໍລິການ ຍັງບໍ່ສູງ ທຽບໃສ່ກັບສິນຄ້ານຳເຂົ້າ. ຂະແໜງການກ່ຽວຂ້ອງ ຍັງບໍ່ທັນມີການເຄື່ອນໄຫວລົງເລິກ ແລະ ທົ່ວເຖິງ ຕໍ່ກັບວຽກງານພັດທະນາຕ່ອງໂສ້ມູນຄ່າເພີ່ມ (Value Chain) ແລະ ການຮ່ວມກຸ່ມທຸລະກິດ (Cluster) ສຳລັບຜະລິດຕະພັນທີ່ມີທ່າແຮງ.

ເຖິງວ່າລັດຖະບານ ຈະສົ່ງເສີມການເຂົ້າເຖິງຕະຫລາດຜ່ານການຄ້າເອເລັກໂຕຣນິກ ໂດຍການສ້າງຕະຫລາດຊື້ຂາຍອອນລາຍ www.plaosme.com ແລ້ວກໍ່ຕາມ, ຈຳນວນ ຈນກ ທີ່ນຳໃຊ້ເວັບໄຊດັ່ງກ່າວ ຍັງມີຈຳນວນບໍ່ຫລາຍເທົ່າທີ່ຄວນ. ພ້ອມນັ້ນ, ເວັບໄຊດັ່ງກ່າວ ຍັງບໍ່ທັນມີຄວາມສົມບູນ ໂດຍສະເພາະແມ່ນລະບົບຊຳລະອອນລາຍ (payment gateway) ທີ່ຍັງບໍ່ທັນເຊື່ອມຕໍ່ກັບລະບົບທະນາຄານ.

ຈນກ ມີການສົ່ງອອກໄປຕ່າງປະເທດພຽງແຕ່ 6,07% ທຽບໃສ່ຈຳນວນ ຈນກ ໃນທົ່ວປະເທດ. ສາເຫດຫລັກຂອງຂໍ້ຈຳກັດໃນການເຂົ້າເຖິງຕະຫລາດຕ່າງປະເທດ ແມ່ນ ຂາດຄວາມຮູ້ກ່ຽວກັບການຫັນເປັນສາກົນ, ຄວາມເຂັ້ມແຂງທາງການເງິນ ແລະ ຂາດຄູ່ຄ້າຢູ່ຕະຫລາດຕ່າງປະເທດ.

## 6. ດ້ານສະພາບແວດລ້ອມການດຳເນີນທຸລະກິດ

ໃນປີ 2020, ສປປ ລາວ ໄດ້ຮັບການຈັດອັນດັບຄວາມງ່າຍດາຍໃນການເລີ່ມຕົ້ນທຸລະກິດໃນລຳດັບທີ 154 ຈາກ 190 ປະເທດ/ເຂດເສດຖະກິດ, ຫລຸດລົງຈາກອັນດັບທີ 136 ໃນປີ 2016. ຄວາມຫຍຸ້ງຍາກໃນການເລີ່ມຕົ້ນທຸລະກິດມາຈາກຫລາຍສາເຫດ ເຊັ່ນ: ຂັ້ນຕອນໃນການຂໍອະນຸຍາດ, ຈຳນວນມື້ໃນການຂໍອະນຸຍາດ ແລະ ຄ່າໃຊ້ຈ່າຍໃນການຂໍອະນຸຍາດດຳເນີນທຸລະກິດ. ເຖິງວ່າລະບົບການຂຶ້ນທະບຽນທຸລະກິດ ແລະ ການຂຶ້ນທະບຽນອາກອນ ໄດ້ຮັບການເຊື່ອມໂຍງລະບົບ ແລະ ປັບປຸງແລ້ວກໍ່ຕາມ, ແຕ່ການສະເໜີຂໍອະນຸຍາດດຳເນີນທຸລະກິດຈາກຂະແໜງການຄຸ້ມຄອງ ແມ່ນຍັງມີຄວາມຫຍຸ້ງຍາກ. ນອກນັ້ນ, ຂັ້ນຕອນການຊຳລະອາກອນ ແມ່ນມີຄວາມຫຍຸ້ງຍາກເນື່ອງຈາກຫລາຍຂັ້ນຕອນ ແລະ ນຳໃຊ້ເວລາ. ຈາກບັນຫາດັ່ງກ່າວ ຈຶ່ງເຮັດໃຫ້ມີວິສາຫະກິດບໍ່ຖືທະບຽນວິສາຫະກິດສູງເຖິງ 69,6% ແລະ ບໍ່ມີໃບອະນຸຍາດດຳເນີນທຸລະກິດສູງເຖິງ 78%.

## 7. ດ້ານພາສີ, ອາກອນ ແລະ ດ້ານການເງິນ

ໃນໄລຍະຜ່ານມາ, ພາກສ່ວນກ່ຽວຂ້ອງໄດ້ຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ມາດຕະການ ດ້ານພາສີ ແລະ ອາກອນ ເພື່ອສົ່ງເສີມພາກທຸລະກິດ ເຊັ່ນ: ຍົກເວັ້ນພາສີຂາເຂົ້າສຳລັບວັດຖຸດິບຮັບໃຊ້ການຜະລິດ ແລະ ພາສີຂາອອກສຳລັບບາງໝວດສິນຄ້າ, ຫລຸດອັດຕາພາສີມູນຄ່າເພີ່ມ ແລະ ກຳນົດລາຍລະອຽດນະໂຍບາຍອາກອນສຳລັບ ຈນກ. ເຖິງແນວໃດກໍ່ຕາມ, ນະໂຍບາຍ ແລະ ມາດຕະການ ຊ່ວຍເຫລືອທາງດ້ານການເງິນອື່ນ ນອກເໜືອຈາກການເຂົ້າເຖິງແຫລ່ງທຶນ ແລະ ທຶນສົມທົບດ້ານວິຊາການ ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ ເຊັ່ນ: ທຶນສົມທົບໃນການຍົກລະດັບເຕັກໂນໂລຊີການຜະລິດ ແລະ ທຶນສົມທົບສຳລັບການສົ່ງເສີມການສົ່ງອອກຂອງ ຈນກ ເປັນຕົ້ນ. ຕົວຢ່າງ: ທຶນສົມທົບ (BAF) ຍັງເນັ້ນແຕ່ການຊ່ວຍເຫລືອດ້ານທີ່ປຶກສາ ຊຶ່ງສ່ວນໃຫຍ່ແມ່ນວິສາຫະກິດຂະໜາດກາງ ແລະ ຂະໜາດໃຫຍ່ ໄດ້ຮັບຜົນປະໂຫຍດຈາກທຶນສົມທົບດັ່ງກ່າວ ເນື່ອງຈາກບັນດາວິສາຫະກິດເຫລົ່ານັ້ນ ມີຄວາມພ້ອມທາງດ້ານການເງິນເພື່ອຍົກລະດັບການດຳເນີນທຸລະກິດ ພາຍຫລັງໄດ້ຮັບຄຳປຶກສາ ເປັນຕົ້ນແມ່ນການຈັດຊື້ເຕັກໂນໂລຊີ.

ຫລາຍປະເທດໃນພາກພື້ນ ແລະ ສາກົນ ໄດ້ມີການສ້າງຕັ້ງກອງທຶນ ຫລື ລະບົບການຊ່ວຍເຫລືອໃນຮູບແບບທຶນສົມທົບທີ່ຫລາກຫລາຍ ເຊັ່ນ: ປະເທດໄທ, ຫວຽດນາມ ແລະ ສິງກະໂປ.

## 8. ອຸປະສັກ ແລະ ສິ່ງທ້າທາຍອື່ນ

ເວທີປຶກສາຫາລືລະຫວ່າງ ພາກລັດ ແລະ ພາກທຸລະກິດ ຍັງມີຈຳກັດ ຊຶ່ງມີພຽງແຕ່ກອງປະຊຸມທຸລະກິດລາວທີ່ຈັດຂຶ້ນປີລະໜຶ່ງຄັ້ງກອງປະຊຸມດັ່ງກ່າວໄດ້ດຳເນີນແຕ່ສະເພາະຢູ່ນະຄອນຫລວງວຽງຈັນ ຊຶ່ງເຮັດໃຫ້ ຈນກ ຈຳນວນຫລາຍ, ໂດຍສະເພາະ ຈນກ ທີ່ຢູ່ໃນຂັ້ນທ້ອງຖິ່ນ ຍັງບໍ່ສາມາດຍົກບັນຫາທີ່ຕິດພັນກັບການດຳເນີນທຸລະກິດຂອງຕົນເພື່ອສະເໜີຕໍ່ພາກລັດໄດ້ຢ່າງທົ່ວເຖິງ. ນອກນັ້ນ, ບັນຫາທີ່ ຈນກ ຫລື ພາກທຸລະກິດສະເໜີ ຍັງບໍ່ໄດ້ຮັບການແກ້ໄຂທັນກັບສະພາບເທົ່າທີ່ຄວນ.

ການຮ່ວມມືລະຫວ່າງ ຈນກ ແລະ ທຸລະກິດຂະໜາດໃຫຍ່ ຍັງບໍ່ທັນໄດ້ຮັບການສົ່ງເສີມຢ່າງເປັນລະບົບ ແລະ ລົງເລິກ ເຊັ່ນ: ການຈັດຊື້ສິນຄ້າຂອງ ຈນກ, ການສ້າງໂອກາດໃຫ້ແກ່ຜູ້ມີລາຍຮັບຕ່ຳຢູ່ທ້ອງຖິ່ນ ມີໂອກາດໃນການເປັນຜູ້ສະໜອງ ແລະ ນະໂຍບາຍສົ່ງເສີມການຖ່າຍທອດຄວາມຮູ້ ແລະ ເຕັກໂນໂລຊີ ລະຫວ່າງ ບໍລິສັດລົງທຶນຕ່າງປະເທດ ແລະ ຈນກ ເປັນຕົ້ນ.

ການຫັນທຸລະກິດເຂົ້າສູ່ການຜະລິດສີຂຽວ ຕາມທິດທາງຂອງລັດຖະບານ ໂດຍສະເພາະການຜັນຂະຫຍາຍຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ 2030 ຍັງມີຄວາມຊັກຊ້າ ແລະ ຫຍຸ້ງຍາກ. ລັດຖະບານ ໄດ້ມີຍຸດທະສາດການຫັນສູ່ການເຕີບໂຕສີຂຽວ ແລະ ຍືນຍົງ ໂດຍການສົ່ງເສີມໃຫ້ພາກທຸລະກິດ ຫັນການຜະລິດເປັນສີຂຽວ, ຫລຸດຜ່ອນ ແລະ ລົບລ້າງການທຳລາຍສິ່ງແວດລ້ອມ, ນຳໃຊ້ວັດຖຸດິບໝູນວຽນ ແລະ ຍືນຍົງ. ການຫັນເປັນສີຂຽວ ຍັງຊ່ວຍໃຫ້ ຈນກ ສາມາດເຂົ້າເຖິງຕະຫລາດຂອງສາກົນໄດ້ສະດວກຍິ່ງຂຶ້ນ. ເຖິງແນວໃດກໍ່ຕາມ, ຈນກ ຍັງຂາດທຶນຮອນ, ເຕັກນິກ ແລະ ຄວາມຮູ້ ໃນການຫັນການຜະລິດ ແລະ ບໍລິການ ເປັນສີຂຽວຕາມທິດທາງຂອງລັດຖະບານ ແລະ ແນວໂນ້ມຂອງສາກົນ.




ສະພາບການລະບາດຂອງພະຍາດໂຄວິດ-19 ໄດ້ສົ່ງຜົນກະທົບອັນຮ້າຍແຮງໃຫ້ແກ່ການດຳເນີນທຸລະກິດຂອງ ຈນກ, ໂດຍສະເພາະໃນຂະແໜງການບໍລິການ ແລະ ການທ່ອງທ່ຽວ. ໃນໄລຍະຂອງການລະບາດຂອງພະຍາດໂຄວິດ-19, ຄວາມຕ້ອງການສິນຄ້າ ແລະ ບໍລິການຂອງ ຈນກ ຫລຸດລົງ 40%, ປິດກິດຈະການຊົ່ວຄາວ 60%

ແລະ ມີອັດຕາການຈ້າງງານຫລຸດລົງ 42%. ຜົນກະທົບດັ່ງກ່າວ ຈະລົບກວນຕ່ອງໂສ້ການຜະລິດຂອງບັນດາວິສາຫະກິດ ແລະ ຈະທຳລາຍສະພາບແວດລ້ອມການດຳເນີນທຸລະກິດຂອງ ຈນກ ໃນໄລຍະຍາວ. ຈາກຂໍ້ມູນຂອງທະນາໂລກ (ສິງຫາ 2021), ການລະບາດຂອງໂຄວິດ-19 ຮອບທີ 2 ຢູ່ ສປປ ລາວ ເຮັດໃຫ້ການຈ້າງງານຫລຸດລົງຈຳນວນຫລາຍ, ປະມານໜຶ່ງສ່ວນສາມຂອງຈຸນລະວິສາຫະກິດໄດ້ປິດຊົ່ວຄາວ ແລະ ຈຳນວນທຸລະກິດທີ່ຍັງຄົງດຳເນີນຢູ່ ມີລາຍໄດ້ຫລຸດລົງ.

# IV. ແຜນພັດທະນາ ຈຸນລະວິສາຫະກິດ, ວິສາຫະກິດ ຂະໜາດນ້ອຍ ແລະ ກາງ 2021-2025



# IV. ແຜນພັດທະນາ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 2021-2025

ເພື່ອເປັນພື້ນຖານໃຫ້ແກ່ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃນໄລຍະ 2021-2023 ແລະ ແຜນພັດທະນາອຸດສາຫະກໍາປຸງແຕ່ງ ແລະ ການຄ້າ 2021-2025 ໃຫ້ສໍາເລັດຕາມລະດັບຄາດໝາຍ. ສະນັ້ນ, ແຜນພັດທະນາ ຈນກ 2021-2025 ຈະສຸມໃສ່ເພື່ອສືບຕໍ່ຜັນຂະຫຍາຍ 13 ກິດຈະການສົ່ງເສີມ ວນກ ຕາມທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມ ວນກ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011 ໂດຍສະເພາະແມ່ນສືບຕໍ່ຜັນຂະຫຍາຍ 7 ຂົງເຂດນະໂຍບາຍ ທີ່ກໍານົດໃນ ແຜນພັດທະນາ ວນກ 2016-2020 ແຕ່ມີການຈັດລຽງບຸລິມະສິດຄືນໃໝ່ ແລະ ເພີ່ມມາດຕະການຈຸດສຸມ ເພື່ອໃຫ້ແທດເໝາະກັບສະພາບປະຈຸບັນ ແລະ ສອດຄ່ອງກັບບັນດາຍຸດທະສາດຂອງຊາດ ເປັນຕົ້ນແມ່ນ ຍຸດທະສາດ ຮອດປີ 2025 ແລະ ວິໄສທັດ 2030, ຍຸດທະສາດການເຕີບໂຕສີຂຽວ ແຫ່ງຊາດ 2030, ເປົ້າໝາຍການພັດທະນາແບບຍືນຍົງ (SDG) 2030, ອຸດສາຫະກໍາ 4.0, ແຜນພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 5 ປີ ຄັ້ງທີ I (2021-2025), ແຜນພັດທະນາ ວນກ ຂອງອາຊຽນ 2016-2025 ແລະ ຕາມທ່າອ່ຽງການສົ່ງເສີມ ວນກ ຂອງພາກພື້ນ ແລະ ສາກົນ, ແນໃສ່ພັດທະນາ ຈນກ ໄປສູ່ຄຸນນະພາບໃໝ່ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ.

## 1. ວິໄສທັດ

ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນພາກສ່ວນທີ່ສໍາຄັນ ໃນການປະກອບສ່ວນເຂົ້າໃນເສດຖະກິດຂອງຊາດ, ມີຄວາມສາມາດເຊື່ອມຕົວເຂົ້າຮ່ວມການຜະລິດ, ການບໍລິການ ແລະ ແລກປ່ຽນສິນຄ້າຢູ່ໃນພາກພື້ນ ແລະ ສາກົນ, ດໍາເນີນທຸລະກິດພາຍໃຕ້ສະພາບແວດລ້ອມທີ່ເອື້ອອໍານວຍ, ມີນິຕິກໍາ ແລະ ກົນໄກສະໜັບສະໜູນຢ່າງມີປະສິດທິພາບ.

## 2. ຈຸດປະສົງ

ເພື່ອສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການເຄື່ອນໄຫວທຸລະກິດ ແລະ ສ້າງເງື່ອນໄຂໃຫ້ ຈນກ ໄດ້ຟື້ນຟູຕົນເອງຈາກຜົນກະທົບຂອງໂຄວິດ-19, ປັບປຸງຕົນເອງ ແລະ ເພີ່ມຄວາມສາມາດໃນການແຂ່ງຂັນ ເພື່ອຄວາມຄົງຕົວ ແລະ ເຕີບໃຫຍ່ຂະຫຍາຍຕົວ ພາຍໃຕ້ເງື່ອນໄຂຂອງການເປີດເສລີທາງການຄ້າ ແລະ ການປ່ຽນແປງຢ່າງກ້າວກະໂດດຂອງເຕັກໂນໂລຊີ, ນະວັດຕະກໍາ ແລະ ຂໍ້ມູນຂ່າວສານ.

## 3. ນະໂຍບາຍສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 2021-2025

### 3.1 ນະໂຍບາຍພັດທະນາຜູ້ປະກອບກິດຈະການ

3.1.1 ສົ່ງເສີມການບັນຈຸວິຊາຮຽນດ້ານທຸລະກິດ ເຂົ້າໃນຫລັກສູດການຮຽນ - ການສອນ ໃນລະດັບຊັ້ນມັດທະຍົມສຶກສາຕອນປາຍ, ອາຊີວະສຶກສາ ແລະ ຫລັກສູດການຝຶກສີມືແຮງງານ ໂດຍການປັບປຸງຫລັກສູດຕາມມາດຕະຖານຫລັກສູດແຫ່ງຊາດ;

3.1.2 ສືບຕໍ່ສົ່ງເສີມການຫັນເປັນຜູ້ປະກອບກິດຈະການ ເປັນຕົ້ນແມ່ນໃນໄວໜຸ່ມ ແລະ ແມ່ຍິງ ໂດຍການປະກອບສ່ວນຂອງ ຈນກ ແລະ ວິສາຫະກິດຂະໜາດໃຫຍ່ ທີ່ປະສົບຜົນສໍາເລັດ;

3.1.3 ສົ່ງເສີມການທົດລອງລິເລີ່ມທຸລະກິດໃນສະຖາບັນການສຶກສາ ກ່ອນການນຳເອົາສິນຄ້າ ແລະ ບໍລິການ ອອກສູ່ຕະຫລາດ ໂດຍມີກົນໄກສະໜັບສະໜູນທີ່ດີຂອງສະຖາບັນການສຶກສາ ແລະ ການມີສ່ວນຮ່ວມຂອງພາກທຸລະກິດ;

3.1.4 ສົ່ງເສີມໃຫ້ມະຫາວິທະຍາໄລທີ່ມີຄວາມພ້ອມ ໄດ້ສ້າງສູນບົ່ມເພາະຜູ້ປະກອບກິດຈະການ ຫລື ດຳເນີນກິດຈະການແບບສະຕາບອັບ;

3.1.5 ສົ່ງເສີມການແຂ່ງຂັນການລິເລີ່ມທຸລະກິດໃນປະເພດທຸລະກິດ ຈນກ ທົ່ວໄປ ແລະ ທຸລະກິດແບບສະຕາດອັບ ພ້ອມທັງສະໜັບສະໜູນເຂົ້າຮ່ວມແຂ່ງຂັນໃນລະດັບພາກພື້ນ ແລະ ສາກົນ;

3.1.6 ສ້າງຄວາມເຂັ້ມແຂງໃຫ້ແກ່ຄູ, ອາຈານ ຫລື ຄູຝຶກ ເພື່ອຖ່າຍທອດຄວາມຮູ້ໃຫ້ທັນກັບກະແສທຸລະກິດໃນແຕ່ລະໄລຍະ;

3.1.7 ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ປະກອບກິດຈະການທີ່ມີໃນປະຈຸບັນ ໃຫ້ສາມາດດຳເນີນທຸລະກິດໄດ້ຢ່າງມີປະສິດທິຜົນ ແລະ ແຂ່ງຂັນໄດ້ໃນຕະຫລາດ.

## 3.2 ນະໂຍບາຍສົ່ງເສີມການເຂົ້າເຖິງແຫລ່ງທຶນ

3.2.1 ສົ່ງເສີມການສ້າງຄວາມເຂັ້ມແຂງໃຫ້ແກ່ ກອງທຶນສົ່ງເສີມ ຈນກ ໃຫ້ສາມາດເຄື່ອນໄຫວພາລະບົດບາດຂອງຕົນໄດ້ຢ່າງແຂງແຮງ, ຮັບປະກັນຄວາມຍືນຍົງໃນການນຳໃຊ້ທຶນ ແລະ ຄວາມພຽງພໍຂອງທຶນເພື່ອສະໜອງໃຫ້ແກ່ ຈນກ;

3.2.2 ສົ່ງເສີມການພັດທະນາຜະລິດຕະພັນການເງິນສຳລັບ ຈນກ ໃຫ້ມີຄວາມຫລາກຫລາຍ, ແທດເໝາະກັບຄວາມຕ້ອງການຂອງ ຈນກ ໃນແຕ່ລະໄລຍະ ແລະ ໃນແຕ່ລະທ້ອງຖິ່ນ;

3.2.3 ສົ່ງເສີມການນຳໃຊ້ຂໍ້ມູນສິນເຊື່ອບຸກຄົນ ຫລື ນິຕິບຸກຄົນ (CIB) ເພື່ອນຳໃຊ້ເປັນບ່ອນອີງໃນການອະນຸມັດການປ່ອຍກູ້ຂອງບັນດາສະຖາບັນການເງິນ;

3.2.4 ສົ່ງເສີມການສະໜອງຜະລິດຕະພັນການເງິນສະເພາະ ເພື່ອຮັບໃຊ້ໃຫ້ແກ່ການສະໜອງທຶນເພື່ອການດຳເນີນທຸລະກິດສະເພາະຂອງ ຈນກ ເຊັ່ນ: ການດຳເນີນທຸລະກິດສີຂຽວ (Green Financing);

3.2.5 ສົ່ງເສີມການຄົ້ນຄວ້າເຕັກໂນໂລຊີທາງການເງິນ (Fintech) ໂດຍການຮ່ວມມືລະຫວ່າງພາກລັດ ແລະ ພາກທຸລະກິດ ເພື່ອຊ່ວຍສະໜອງທຶນໃຫ້ແກ່ ຈນກ;

3.2.6 ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາສະຖາບັນການເງິນ ເພື່ອຍົກລະດັບປະສິດທິພາບການປ່ອຍກູ້ໃຫ້ແກ່ ຈນກ;

3.2.7 ສະໜັບສະໜູນການຊ່ວຍເຫລືອ ຈນກ ເພື່ອສ້າງຄວາມເຂັ້ມແຂງສຳລັບການເຂົ້າເຖິງແຫລ່ງທຶນ ແລະ ການນຳໃຊ້ທຶນຢ່າງມີປະສິດທິພາບ ແລະ ປະສິດທິຜົນ ເພື່ອຮັບປະກັນການໝູນໃຊ້ທຶນໃນລະບົບເສດຖະກິດ.

## 3.3 ນະໂຍບາຍສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ

3.3.1 ສົ່ງເສີມສ້າງຄວາມເຂັ້ມແຂງ ໃຫ້ແກ່ອົງການຜະລິດຕະພາບແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງ ເພື່ອນຳພາການພັດທະນາວຽກງານຜະລິດຕະພາບ;

3.3.2 ສົ່ງເສີມການປັບປຸງຍົກລະດັບປະສິດທິພາບ ໃນການຄຸ້ມຄອງການຜະລິດ ແລະ ການບໍລິການ, ປັບປຸງຄຸນນະພາບ ແລະ ມາດຕະຖານ ຂອງຜະລິດຕະພັນຂອງ ຈນກ;

3.3.3 ສົ່ງເສີມການພັດທະນາຊັບພະຍາກອນມະນຸດ ເພື່ອຮອງຮັບເຕັກນິກ-ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່;

3.3.4 ສົ່ງເສີມການຫັນເປັນດີຈີຕອນ (Digitalisation) ເພື່ອຍົກລະດັບປະສິດທິພາບການດຳເນີນທຸລະກິດ;

3.3.5 ສົ່ງເສີມການຮ່ວມມືລະຫວ່າງພາກລັດ, ສະຖາບັນການສຶກສາ ແລະ ພາກທຸລະກິດ ໃນການຄົ້ນຄ້ວາ, ພັດທະນາ ແລະ ຖ່າຍທອດ ເຕັກໂນໂລຊີ ໃຫ້ແທດເໝາະກັບຄວາມຕ້ອງການຂອງ ຈນກ ພ້ອມທັງເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ນັກຄົ້ນຄວ້າ;

3.3.6 ສົ່ງເສີມໃຫ້ມີລະບົບຍ້ອງຍໍແກ່ ບຸກຄົນ ແລະ ຈນກ ທີ່ມີຜົນງານດີເດັ່ນໃນການສ້າງນະວັດຕະກໍາ ໃນດ້ານຕ່າງໆ ເຊັ່ນ: ການອອກແບບ ແລະ ພັດທະນາສິນຄ້າທີ່ມີຄວາມໂດດເດັ່ນທາງດ້ານຄຸນນະພາບ, ການປັບປຸງດ້ານເຕັກໂນໂລຊີທີ່ມີຄວາມທັນສະໄໝ, ການປະຢັດພະລັງງານ ແລະ ເປັນມິດຕໍ່ສິ່ງແວດລ້ອມ, ແບບຈໍາລອງທຸລະກິດທີ່ຍືນຍົງ, ການນໍາໃຊ້ວັດຖຸດິບໝູນວຽນ ແລະ ອື່ນໆ;

3.3.7 ສົ່ງເສີມການຂຶ້ນທະບຽນ ເພື່ອປົກປ້ອງສິດທາງດ້ານຊັບສິນທາງປັນຍາ ຈນກ;

3.3.8 ເພີ່ມທະວີການຮ່ວມມືກັບອົງການຈັດຕັ້ງສາກົນ ທີ່ ສປປ ລາວ ເປັນສະມາຊິກ ໂດຍສະເພາະອົງການຜະລິດຕະພາບແຫ່ງອາຊີ (APO) ເພື່ອຍາດແຍ່ງເອົາບົດຮຽນ ແລະ ຄວາມຮູ້ ໃນການສົ່ງເສີມຍົກລະດັບເຕັກໂນໂລຊີ, ການເພີ່ມຜະລິດຕະພາບ, ຜະລິດຕະພາບຂຽວ ແລະ ສົ່ງເສີມການສ້າງນະວັດຕະກໍາດ້ານຕ່າງໆ ຂອງການດໍາເນີນທຸລະກິດ.

## 3.4 ນະໂຍບາຍສົ່ງເສີມການເຂົ້າເຖິງການບໍລິການວິຊາການເພື່ອພັດທະນາທຸລະກິດ

3.4.1 ສ້າງຄູຝຶກ ແລະ ຜູ້ຊ່ຽວຊານສະເພາະດ້ານ ເພື່ອຊ່ວຍ ຈນກ ໃນການປັບປຸງການຜະລິດທຸລະກິດ, ເປັນຕົ້ນການຍົກລະດັບຜະລິດຕະພາບ ແລະ ຄຸນນະພາບ ແລະ ອື່ນໆ;

3.4.2 ສົ່ງເສີມການສະໜອງການບໍລິການດ້ານວິຊາການໃຫ້ມີຄວາມຫລາກຫລາຍ ແລະ ສອດຄ່ອງຕາມຄວາມຕ້ອງການຕົວຈິງຂອງ ຈນກ ໃນແຕ່ລະໄລຍະ;

3.4.3 ຍົກລະດັບຄວາມສາມາດຂອງຜູ້ປະກອບກິດຈະການດ້ານຕ່າງໆ, ເປັນຕົ້ນແມ່ນ ຄວາມຊໍານານໃນການຄຸ້ມຄອງທຸລະກິດ, ການວາງແຜນທຸລະກິດ, ການວາງແຜນຍຸດທະສາດດ້ານການຕະຫລາດ, ດ້ານການບັນຊີການເງິນ, ດ້ານກົດໝາຍ, ການປັບປຸງຜະລິດຕະພາບ ແລະ ຄຸນນະພາບ ແລະ ອື່ນໆ;

3.4.4 ສົ່ງເສີມການສ້າງຄວາມເຂັ້ມແຂງ ໃຫ້ແກ່ເຄືອຂ່າຍຜູ້ສະໜອງບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ (ຄບທ) ໃນການສະໜອງການບໍລິການທີ່ມີຄວາມຫລາກຫລາຍ ແລະ ມີຄຸນນະພາບໃຫ້ແກ່ ຈນກ ພ້ອມທັງຂະຫຍາຍເຄືອຂ່າຍດັ່ງກ່າວ;

3.4.5 ສົ່ງເສີມການສ້າງຄວາມເຂັ້ມແຂງ ຂອງສູນບໍລິການວິສາຫະກິດຂະໜາດນ້ອຍ ແລະ ກາງ (ສບວ) ໃນການສະໜອງການບໍລິການທີ່ມີຄຸນນະພາບໃຫ້ແກ່ ຈນກ;

3.4.6 ຊຸກຍູ້ການສະໜອງບໍລິການດ້ານເຕັກນິກ ແລະ ວິຊາການ ຂອງບັນດາສູນ, ສະຖາບັນວິຊາການຂອງຂະແໜງການ ລວມທັງມະຫາວິທະຍາໄລ ແລະ ບັນດາວິທະຍາໄລຕ່າງໆ ທີ່ຕົນເອງມີບົດບາດ ໃຫ້ແກ່ການຜະລິດ ແລະ ທຸລະກິດ ຂອງ ຈນກ ເຊັ່ນ: ເຕັກນິກການປູກຝັງລ້ຽງສັດ, ການຜະລິດ, ການປຸງແຕ່ງ, ການຖ່າຍທອດເຕັກໂນໂລຊີ ດັ່ງນີ້ເປັນຕົ້ນ.

## 3.5 ນະໂຍບາຍສົ່ງເສີມການເຂົ້າເຖິງ ແລະ ຂະຫຍາຍ ຕະຫລາດ

3.5.1 ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ ຈນກ ເຂົ້າເຖິງຕະຫລາດທັງພາຍໃນ ແລະ ຕ່າງປະເທດ ໂດຍຜ່ານຫລາຍຮູບການ;

3.5.2 ສົ່ງເສີມ ແລະ ສ້າງເງື່ອນໄຂ ໃຫ້ເກີດການຮ່ວມກຸ່ມຂອງ ຈນກ, ການເຂົ້າຮ່ວມໃນຕ່ອງໂສ້ມູນຄ່າເພີ່ມຂອງບັນດາສິນຄ້າ ຫລື ຜະລິດຕະພັນທີ່ເປັນທ່າແຮງ, ການສົ່ງເສີມທຸລະກິດແບບທົ່ວເຖິງ (Inclusive Business);

3.5.3 ສົ່ງເສີມການເຂົ້າເຖິງການຢັ້ງຢືນດ້ານເຕັກນິກຕ່າງໆ ເພື່ອເຂົ້າເຖິງຕະຫລາດ ເຊັ່ນ: ການຢັ້ງຢືນມາດຕະຖານ ແລະ ຄຸນນະພາບ, ສຸຂະອານາໄມພືດ ແລະ ສັດ, ມາດຕະຖານຄວາມປອດໄພອາຫານ, ການຢັ້ງຢືນຖິ່ນກຳເນີດສິນຄ້າ (GI) ແລະ ອື່ນໆ;

3.5.4 ສົ່ງເສີມວິສາຫະກິດຂະໜາດໃຫຍ່ ຫລື ວິສາຫະກິດລົງທຶນໂດຍກົງຈາກຕ່າງປະເທດ, ເປັນຕົ້ນແມ່ນ ບັນດາວິສາຫະກິດທີ່ຢູ່ພາຍໃນເຂດເສດຖະກິດພິເສດ ນໍາໃຊ້ຜະລິດຕະພັນ ແລະ ການບໍລິການ ທີ່ສະໜອງໂດຍ ຈນກ;

3.5.5 ສົ່ງເສີມ ແລະ ສ້າງເງື່ອນໄຂ ໃຫ້ ຈນກ ໄດ້ເຂົ້າຮ່ວມໃນການ ຈັດຊື້-ຈັດຈ້າງ ຂອງລັດ;

3.5.6 ສົ່ງເສີມດ້ານວິຊາການໃຫ້ແກ່ ຈນກ ຢູ່ບັນດາແຂວງ ໃຫ້ໄດ້ຮັບເຄື່ອງໝາຍ ODOP;

3.5.7 ປັບປຸງຖານຂໍ້ມູນຂ່າວສານດ້ານຕະຫລາດທັງພາຍໃນ ແລະ ຕ່າງປະເທດ ຢ່າງເປັນປະຈໍາ ເພື່ອສະໜອງຂໍ້ມູນທີ່ທັນການໃຫ້ແກ່ ຈນກ.

## 3.6 ນະໂຍບາຍສ້າງສະພາບແວດລ້ອມທີ່ເອື້ອອໍານວຍ ໃຫ້ແກ່ການສ້າງຕັ້ງ ແລະ ດໍາເນີນທຸລະກິດ

3.6.1 ສືບຕໍ່ປັບປຸງລະບຽບການ ແລະ ວິທີການຄຸ້ມຄອງລັດ ຕໍ່ການເຄື່ອນໄຫວທຸລະກິດ ໃຫ້ມີຄວາມທັນສະໄໝ, ໂປ່ງໃສ, ກະທັດຮັດ, ຫລຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍ ໃນການປະຕິບັດລະບຽບການຕ່າງໆທີ່ລັດວາງອອກ ເພື່ອເຮັດໃຫ້ການຈັດອັນດັບກ່ຽວກັບຄວາມສະດວກໃນ ການດໍາເນີນທຸລະກິດໃນ ສປປ ລາວ ຂອງທະນາຄານໂລກ ໃຫ້ດີກວ່າເກົ່າ;

3.6.2 ເພີ່ມທະວີການນໍາໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ ໃນການຄຸ້ມຄອງລັດບໍ່ວ່າຈະເປັນລະບົບຂຶ້ນທະບຽນວິສາຫະກິດ, ການຂຶ້ນທະບຽນອາກອນ, ການຊໍາລະອາກອນ ແລະ ການອອກອະນຸຍາດຂະແໜງການຕ່າງໆ;

3.6.3 ສົ່ງເສີມການນໍາໃຊ້ກົນໄກ ການປະເມີນຜົນກະທົບທາງດ້ານນິຕິກໍາ (RIA) ກ່ອນການອອກລະບຽບການ ແລະ ນິຕິກໍາຂອງລັດ ໃນການຄຸ້ມຄອງລັດ ຕໍ່ການເຄື່ອນໄຫວທຸລະກິດຕ່າງໆ;

3.6.4 ສືບຕໍ່ໃຫ້ການສະໜັບສະໜູນເວທີປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ ເພື່ອຮ່ວມກັນແກ້ໄຂບັນຫາທີ່ມີຜົນກະທົບຕໍ່ພາກທຸລະກິດໃນ ສປປ ລາວ.

## 3.7 ນະໂຍບາຍພາສີ-ອາກອນ ແລະ ດ້ານການເງິນ

3.7.1 ປັບປຸງກົນໄກ ແລະ ກໍານົດນະໂຍບາຍເພື່ອຊຸກຍູ້ໃຫ້ຫົວໜ່ວຍທຸລະກິດ ເຂົ້າສູ່ລະບົບອາກອນມູນຄ່າເພີ່ມ, ອາກອນລາຍໄດ້ ແລະ ອາກອນອື່ນໆ ໃນຂອບເຂດທົ່ວປະເທດ;

3.7.2 ຄົ້ນຄວ້າກໍານົດນະໂຍບາຍພາສີນໍາເຂົ້າ ສໍາລັບປັດໃຈການຜະລິດທີ່ຈໍາເປັນ ແລະ ນະໂຍບາຍພິເສດອື່ນໆ ນອກຈາກທີ່ໄດ້ກໍານົດໄວ້ໃນກົດໝາຍສົ່ງເສີມການລົງທຶນ ແລະ ກົດໝາຍທີ່ກ່ຽວຂ້ອງ ສໍາລັບ ຈນກ. ຈນກ ທີ່ດໍາເນີນກິດຈະການໃນຂະແໜງທີ່ເປັນຍຸດທະສາດ ເຊັ່ນ: ກິດຈະການທີ່ຮັບໃຊ້ຄວາມໝັ້ນຄົງດ້ານສະບຽງອາຫານ, ກິດຈະການທີ່ປະກອບສ່ວນໃນການລຶບລ້າງຄວາມທຸກຍາກ ແລະ ກິດຈະການອື່ນທີ່ເຫັນ

ສົມຄວນ ທີ່ຮັບໃຊ້ແນວທາງ ແລະ ນະໂຍບາຍຂອງພັກ ແລະ ລັດຖະບານ (ລັດຖະບານຈະສ້າງເປັນບັນຊີຕ່າງຫາກ);

3.7.3 ຄົ້ນຄວ້າກຳນົດນະໂຍບາຍຕ່າງໆ ເປັນຕົ້ນແມ່ນນະໂຍບາຍອາກອນມູນຄ່າເພີ່ມ ແລະ ອາກອນກຳໄລ ສຳລັບ ຈນກ ແບບສະຕາດອັບ (Startup) ແລະ ບັນດາທຸລະກິດທີ່ຢູ່ໃນເຂດເສດຖະກິດພິເສດ;

3.7.4 ສະໜອງທຶນໃຫ້ແກ່ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ເພື່ອປ່ອຍສິນເຊື່ອໄລຍະຍາວໃຫ້ແກ່ ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ເພື່ອນຳໃຊ້ເຂົ້າໃນການສ້າງຕັ້ງ ແລະ ການຂະຫຍາຍທຸລະກິດ ໃນອັດຕາດອກເບ້ຍເໝາະສົມ;

3.7.5 ສະໜອງທຶນສົມທົບໃຫ້ແກ່ ຈນກ ເພື່ອປັບປຸງ ແລະ ປ່ຽນຖ່າຍເຕັກໂນໂລຊີ (Matching Grant for Technology Transfer and Upgrading) ແລະ ເປັນຄ່າໃຊ້ຈ່າຍສຳລັບການສະໜອງບໍລິການໃຫ້ຄຳປຶກສາຈາກຜູ້ຊ່ຽວຊານ ເພື່ອປັບປຸງທຸລະກິດໃນດ້ານຕ່າງໆ ເຊັ່ນ: ການອອກແບບ ແລະ ພັດທະນາຜະລິດຕະພັນ, ການປັບປຸງ ແລະ ຢັ້ງຢືນດ້ານຄຸນນະພາບ, ມາດຕະຖານ, ການວາງແຜນຍຸດທະສາດດ້ານການຕະຫລາດ, ການເຂົ້າເຖິງຕະຫລາດ ແລະ ການຝຶກອົບຮົມດ້ານວິຊາການອື່ນໆ.

# 4. ບັນດາມາດຕະການ ໃນແຕ່ລະຂົງເຂດນະໂຍບາຍ

## 4.1 ມາດຕະການສຳລັບການພັດທະນາຜູ້ປະກອບກິດຈະການ

4.1.1 ພັດທະນາຫລັກສູດວິຊາທຸລະກິດທີ່ເປັນພື້ນຖານ ເພື່ອບັນຈຸເຂົ້າໃນລະບົບ ການຮຽນ-ການສອນ ໃນຊັ້ນມັດທະຍົມຕອນປາຍ ເພື່ອປູກຈິດສຳນຶກການເປັນຜູ້ປະກອບກິດຈະການ ເຊັ່ນ: ການເຂົ້າໃຈຜູ້ບໍລິໂພກ ແລະ ຕະຫລາດ, ການບໍລິຫານການເງິນຂັ້ນພື້ນຖານ ເປັນຕົ້ນ;

4.1.2 ພັດທະນາວິຊາທຸລະກິດທີ່ເປັນພື້ນຖານສະເພາະ ສຳລັບນັກຮຽນເຕັກນິກ - ວິຊາຊີບ ຄຽງຄູ່ກັບບັນດາວິຊາເຕັກນິກຫລັກ ເພື່ອເຮັດໃຫ້ບັນດານັກຮຽນເຫລົ່ານີ້ ສາມາດເລີ່ມຕົ້ນທຸລະກິດໄດ້ ພາຍຫລັງສຳເລັດຫລັກສູດ ເຊັ່ນ: ການຕະຫລາດ, ການຂາຍ ແລະ ການບໍລິຫານການເງິນ ເປັນຕົ້ນ;

4.1.3 ສ້າງໂຄງການຕໍ່ເນື່ອງໃນບັນດາສະຖາບັນການສຶກສາ ໃນລະດັບສາມັນສຶກສາ, ອາຊີວະສຶກສາ, ການສຶກສາຊັ້ນສູງ ແລະ ການພັດທະນາສີມືແຮງງານ ເພື່ອກະຕຸກຊຸກຍູ້ການຫັນເປັນຜູ້ປະກອບກິດຈະການ ໂດຍການຮ່ວມມືລະຫວ່າງພາກລັດ ແລະ ພາກທຸລະກິດ;

4.1.4 ສ້າງສູນກໍ່ສ້າງຜູ້ປະກອບກິດຈະການ (Business Incubation Centre) ໃນບັນດາສະຖາບັນການສຶກສາຕ່າງໆທີ່ມີເງື່ອນໄຂ ເພື່ອເປັນບ່ອນທົດລອງການຄົ້ນຄວ້າ ແລະ ພັດທະນາສິນຄ້າ ແລະ ການບໍລິການເປັນຕົ້ນໃນປະເພດທຸລະກິດທີ່ມີມູນຄ່າສູງ (high value business) ເຊັ່ນ: ວິສະວະກຳສາດ, ເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ (ICT), ການຄ້າເອເລັກໂຕຣນິກ, ເຕັກໂນໂລຊີກະສິກຳ, ເຕັກໂນໂລຊີອາຫານ, ເຕັກໂນໂລຊີທາງການເງິນ ແລະ ອື່ນໆ;

4.1.5 ຄົ້ນຄວ້າສ້າງຍຸດທະສາດການພັດທະນາ ສູນກໍ່ສ້າງຜູ້ປະກອບກິດຈະການ ເພື່ອຮັບປະກັນຄວາມເຂັ້ມແຂງ ແລະ ຍືນຍົງຂອງບັນດາສູນຕ່າງໆ;

4.1.6 ຄົ້ນຄວ້າສ້າງໂຄງການການແຂ່ງຂັນແນວຄວາມຄິດ ແລະ ແຜນທຸລະກິດ ສຳລັບນັກຮຽນ, ນັກສຶກສາ ແລະ ບຸກຄົນທົ່ວໄປ ທີ່ສົນໃຈໃນການເລີ່ມຕົ້ນທຸລະກິດໃນຮູບແບບ ຈນກ ແລະ ທຸລະກິດແບບສະຕາດອັບ ໂດຍການຮ່ວມມືລະຫວ່າງພາກລັດ ແລະ ພາກທຸລະກິດ. ພ້ອມນັ້ນ, ສະໜັບສະໜູນທຶນຮອນໃນການເຂົ້າຮ່ວມການແລກປ່ຽນ ແລະ ແຂ່ງຂັນໃນລະດັບພາກພື້ນ ແລະ ສາກົນ;

4.1.7 ຄົ້ນຄວ້າສ້າງກອງທຶນຮ່ວມລົງທຶນ (Venture Capital) ເພື່ອສະໜັບສະໜູນການເລີ່ມຕົ້ນ ແລະ ພັດທະນາທຸລະກິດແບບສະຕາດອັບ ເພື່ອດຶງດູດການປະກອບທຶນຈາກ ລັດຖະບານ, ພາກທຸລະກິດ, ນັກລົງທຶນພາຍໃນ ແລະ ສາກົນ ແລະ ອົງການຈັດຕັ້ງສາກົນຕ່າງໆ;

4.1.8 ສ້າງແຜນພັດທະນາຜູ້ປະກອບກິດຈະການແບບສະຕາດອັບ ໂດຍແນໃສ່ສ້າງສະພາບແວດລ້ອມທຸລະກິດ ເພື່ອເລີ່ມຕົ້ນ ແລະ ຂະຫຍາຍທຸລະກິດປະເພດດັ່ງກ່າວ;

4.1.9 ປະສານງານກັບອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາຕ່າງໆ ເພື່ອສົ່ງບັນດາຄູ, ອາຈານ ແລະ ຄູຝຶກເຂົ້າຮ່ວມຝຶກອົບຮົມ ສ້າງຄວາມເຂັ້ມແຂງໃນດ້ານຕ່າງໆ ໃນແຕ່ລະໄລຍະ ເຊັ່ນ: ການຝຶກສຳລັບຄູຝຶກ, ການພັດທະນາແບບຈຳລອງທຸລະກິດ, ການຄົ້ນຄວ້ານະໂຍບາຍ ການສົ່ງເສີມຜູ້ປະກອບກິດຈະການ;

4.1.10 ສະໜອງການຝຶກອົບຮົມໃຫ້ແກ່ຜູ້ປະກອບກິດຈະການ ໃນດ້ານຕ່າງໆ ເຊັ່ນ: ການນຳໃຊ້ເຄື່ອງມືເຕັກໂນໂລຊີ, ເຄື່ອງມືດິຈິຕອນ, ການຄຸ້ມຄອງການເງິນ, ການບັນຊີ, ການບໍລິຫານ ແລະ ອື່ນໆ.

## 4.2 ມາດຕະການສຳລັບສົ່ງເສີມການເຂົ້າເຖິງແຫລ່ງທຶນ

4.2.1 ຄົ້ນຄວ້າກິດຈະການຂອງກອງທຶນສົ່ງເສີມ ຈນກ ເພື່ອຂະຫຍາຍແຫລ່ງລາຍຮັບ ສຳລັບການຂະຫຍາຍຕົວຂອງກອງທຶນ ເຊັ່ນ: ການລົງທຶນຜ່ານກອງທຶນຮ່ວມລົງທຶນ ໃນທຸລະກິດແບບສະຕາດອັບ ຫລື ກິດຈະການທີ່ມີທ່າແຮງອື່ນ ເພື່ອເປັນການຂະຫຍາຍທຶນຂອງກອງທຶນ ນອກຈາກການປະກອບທຶນຂອງລັດຖະບານ ແລະ ອັດຕາດອກເບ້ຍຈາກການປ່ອຍກູ້;

4.2.2 ລະດົມແຫລ່ງທຶນຕ່າງໆ ພ້ອມທັງກົນໄກ ແລະ ກິດຈະການ ການເຄື່ອນໄຫວຂອງ ກອງທຶນສົ່ງເສີມ ຈນກ ເພື່ອຮັບປະກັນການຂະຫຍາຍໂຕຂອງກອງທຶນໃນໄລຍະຍາວ;

4.2.3 ຄົ້ນຄວ້າ ການຈັດສັນທຶນສະເພາະ ສຳລັບບາງປະເພດກິດຈະການ ເຊັ່ນ: ການສົ່ງອອກຂອງ ຈນກ, ທຸລະກິດທີ່ເປັນມິດຕໍ່ກັບສິ່ງແວດລ້ອມ ແລະ ສັງຄົມ, ທຸລະກິດແບບທົ່ວເຖິງ (Inclusive Business) ເປັນຕົ້ນ;

4.2.4 ຄົ້ນຄວ້າ ແລະ ພັດທະນາ ຜະລິດຕະພັນການເງິນສຳລັບ ຈນກ ແລະ ຜູ້ເລີ່ມຕົ້ນທຸລະກິດໃໝ່ ເຊັ່ນ: ການຄໍ້າປະກັນສິນເຊື່ອ, Fintech ແລະ ການຄໍ້າປະກັນດ້ວຍສັງຫາລິມະຊັບ ເພື່ອຊ່ວຍໃນການເຂົ້າເຖິງສິນເຊື່ອຂອງ ຈນກ;

4.2.5 ຄົ້ນຄວ້າເພື່ອສະໜອງຜະລິດຕະພັນທາງການເງິນສຳລັບ ຈນກ ໃນແຕ່ລະໄລຍະ ແລະ ເຫດການສຸກເສີນ ເພື່ອຊ່ວຍໃຫ້ ຈນກ ສາມາດສືບຕໍ່ການດຳເນີນທຸລະກິດ ເຊັ່ນ: ໄພພິບັດ, ການລະບາດຂອງພະຍາດ ແລະ ວິກິດການເສດຖະກິດ; ສະໜອງທຶນສຳລັບການຝຶກອົບຮົມ ສ້າງຄວາມເຂັ້ມແຂງໃຫ້ແກ່ ຈນກ ແລະ ຜູ້ເລີ່ມຕົ້ນທຸລະກິດໃໝ່ ໃນຫົວຂໍ້ຕ່າງໆ ທີ່ຕິດພັນກັບການເຂົ້າເຖິງແຫລ່ງທຶນ ເຊັ່ນ: ແຜນການເງິນ, ການຖືບັນຊີ, ການພັດທະນາແຜນທຸລະກິດ, ປະຊາສຶກສາທາງດ້ານການເງິນ ແລະ ອື່ນໆ;

4.2.6 ພັດທະນາກົນໄກ ການປະສານງານກັບບັນດາຄູ່ຮ່ວມທຸລະກິດ, ອົງການຈັດຕັ້ງສາກົນຕ່າງໆ ໃນການລະດົມທຶນເພື່ອສະໜອງທຶນໃຫ້ ຈນກ ຜ່ານກອງທຶນສົ່ງເສີມ ຈນກ, ສະຖາບັນການເງິນ ແລະ ທະນາຄານທຸລະກິດຕ່າງໆ.

## 4.3 ມາດຕະການສຳລັບການສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ

4.3.1 ຍົກລະດັບ ຄວາມອາດສາມາດຂອງ ອົງການຜະລິດຕະພາບແຫ່ງຊາດ ເຊັ່ນ: ດ້ານການຈັດຕັ້ງເຄື່ອນໄຫວ, ດ້ານການພັດທະນາບຸກຄະລາກອນ, ກົນໄກປະສານງານ, ເຄື່ອງມືຜະລິດຕະພາບ ແລະ ອື່ນໆ;

4.3.2 ຍົກລະດັບຄວາມອາດສາມາດໃຫ້ແກ່ພາກສ່ວນກ່ຽວຂ້ອງ ໃນວຽກງານປັບປຸງຜະລິດຕະພາບ ແລະ ຄຸນນະພາບ;

4.3.3 ສ້າງຄວາມຮັບຮູ້ກ່ຽວກັບການຍົກລະດັບ ຜະລິດຕະພາບ ແລະ ຄຸນນະພາບ ໃຫ້ແກ່ ຈນກ ດ້ວຍຫລາຍຮູບການ;

4.3.4 ສະໜອງທຶນສົມທົບໃນການເຂົ້າເຖິງບໍລິການທີ່ປຶກສາ ພັດທະນາຜະລິດຕະພາບ ແລະ ຄຸນນະພາບ;

4.3.5 ສ້າງຜູ້ຊ່ຽວຊານສະເພາະດ້ານ ເພື່ອຊ່ວຍປັບປຸງຜະລິດຕະພາບໃຫ້ແກ່ ຈນກ ໃນຫົວຂໍ້ຕ່າງໆ ເຊັ່ນ: GMP/GHP, HACCP, TQM, ISO ແລະ ອື່ນໆ;

4.3.6 ປັບປຸງຫລັກສູດສີມືແຮງງານ ເພື່ອຍົກລະດັບສີມືແຮງງານໃຫ້ສາມາດຮອງຮັບການຫັນເປັນດິຈິຕອນ;

4.3.7 ສະໜອງທຶນສົມທົບ ເພື່ອຍົກລະດັບເຕັກໂນໂລຊີໃນການຜະລິດ ແລະ ການບໍລິການ, ແນໃສ່ປັບປຸງຄຸນນະພາບ ແລະ ມາດຕະຖານ ຂອງຜະລິດຕະພັນ;

4.3.8 ສ້າງກົນໄກການຮ່ວມມື ລະຫວ່າງ ຈນກ, ບໍລິສັດຂະໜາດໃຫຍ່ ແລະ ສະຖາບັນການສຶກສາ ໂດຍນໍາໃຊ້ສິ່ງອໍານວຍຄວາມສະດວກຂອງສະຖາບັນການສຶກສາ ສໍາລັບການຄົ້ນຄວ້ານະວັດຕະກໍາ ແລະ ເຕັກໂນໂລຊີ;

4.3.9 ສ້າງລະບົບການຍ້ອງຍໍ ແລະ ດໍາເນີນການມອບລາງວັນດ້ານຕ່າງໆ ໃຫ້ແກ່ບຸກຄົນ ແລະ ຈນກ ທີ່ມີຜົນງານດີເດັ່ນ;

4.3.10 ສະໜັບສະໜູນການສ້າງຄວາມເຂັ້ມແຂງ ແລະ ອໍານວຍຄວາມສະດວກໃນການຈົດທະບຽນປົກປ້ອງສິດທາງດ້ານຊັບສິນທາງປັນຍາຂອງ ຈນກ ພ້ອມທັງເຜີຍແຜ່ວຽກງານດັ່ງກ່າວ;

4.3.11 ປະສານງານກັບອົງການ APO ແລະ ອົງການຈັດຕັ້ງສາກົນອື່ນ ເພື່ອຈັດຕັ້ງປະຕິບັດໂຄງການໃນຫົວຂໍ້ທີ່ແທດເໝາະກັບການຍົກລະດັບຜະລິດຕະພາບ ແລະ ຄຸນນະພາບ ໃຫ້ແກ່ ຈນກ.

## 4.4 ມາດຕະການສໍາລັບການສົ່ງເສີມການເຂົ້າເຖິງ ການບໍລິການວິຊາການເພື່ອພັດທະນາທຸລະກິດ

4.4.1 ສ້າງຄູຝຶກ (TOT) ໃນຫົວຂໍ້ສະເພາະດ້ານ ຜ່ານຮູບແບບຕ່າງໆ ເຊັ່ນ: ເຂົ້າຮ່ວມຝຶກອົບຮົມສາກົນ, ທັດສະນະສຶກສາ, ຮຽນຮູ້ກັບທີ່ ແລະ ຮູບແບບອື່ນໆ ທີ່ມີປະສິດທິຜົນ ເພື່ອສະໜອງການບໍລິການທີ່ມີຄຸນນະພາບໃຫ້ແກ່ ຈນກ;

4.4.2 ສະໜອງການບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ ໃນຫົວຂໍ້ສະເພາະ ເຊັ່ນ: 5ສ (5S), ໄຄເຊັນ (KAIZEN), ການຜະລິດທີ່ດີ (GMP), ການຜະລິດກະສິກໍາທີ່ດີ (GAP), ມາດຕະຖານສາກົນ (ISO), ການວິເຄາະ ແລະ ຄວບຄຸມຈຸດວິກິດຄວາມປອດໄພການຜະລິດອາຫານ (HACCP), ການນໍາໃຊ້ເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ (ICT) ແລະ ອື່ນໆ;

4.4.3 ສະໜອງການຝຶກອົບຮົມເພື່ອພັດທະນາທຸລະກິດ ໃນຫົວຂໍ້ຕ່າງໆ ເຊັ່ນ: ແຜນທຸລະກິດ, ການບັນຊີ, ການຕະຫລາດ, ການເງິນ, ການບໍລິຫານ ແລະ ອື່ນໆ ໃນຮູບແບບຕ່າງໆ;

4.4.4 ຍົກລະດັບຄຸນນະພາບ ສະມາຊິກຂອງ ຄບທ ໃຫ້ສາມາດສະໜອງການບໍລິການໃຫ້ມີຄຸນນະພາບ;

4.4.5 ປັບປຸງກົນໄກການຈັດຕັ້ງເຄື່ອນໄຫວຂອງ ຄບທ ໃຫ້ມີຄຸນນະພາບ ແລະ ສາມາດຂະຫຍາຍສະມາຊິກໃຫ້ຫລາກຫລາຍ ເພື່ອຄວາມຍືນຍົງໃນການສະໜອງການບໍລິການ;

4.4.6 ຄົ້ນຄວ້າປັບປຸງຍຸດທະສາດການຈັດຕັ້ງເຄື່ອນໄຫວຂອງສູນບໍລິການ ວນກ ໃຫ້ສາມາດດໍາເນີນງານໄດ້ຢ່າງມີປະສິດທິຜົນ;

4.4.7 ຊຸກຍູ້ການຂະຫຍາຍສູນບໍລິການ ວນກ ໃນບັນດາແຂວງທີ່ມີເງື່ອນໄຂ ເພື່ອຂະຫຍາຍການບໍລິການໃຫ້ທົ່ວເຖິງ;

4.4.8 ເພີ່ມທະວີການຮ່ວມມື ລະຫວ່າງພາກລັດ, ສະຖາບັນວິຊາການ, ສະຖາບັນການສຶກສາ ແລະ ພາກທຸລະກິດ ໃນການສະໜອງບໍລິການພັດທະນາທຸລະກິດໃຫ້ແກ່ ຈນກ.

## 4.5 ມາດຕະການສຳລັບການສົ່ງເສີມການເຂົ້າເຖິງ ແລະ ຂະຫຍາຍຕະຫລາດ

4.5.1 ພາກລັດ ແລະ ພາກທຸລະກິດ ຮ່ວມມືສ້າງເວທີໃນການເຂົ້າເຖິງຕະຫລາດ ເຊັ່ນ: ງານວາງສະແດງສິນຄ້າ, ຕະຫລາດນັດ ແລະ ການຈັບຄູ່ທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ;

4.5.2 ເຜີຍແຜ່ວຽກງານການຄ້າທາງເອເລັກໂຕຣນິກ ເພື່ອສົ່ງເສີມໃຫ້ ຈນກ ນຳໃຊ້ຊ່ອງທາງດັ່ງກ່າວເຂົ້າເຖິງຕະຫລາດພາຍໃນ ແລະ ຕ່າງປະເທດ ຫລາຍຂຶ້ນ;

4.5.3 ສ້າງຄວາມເຂັ້ມແຂງໃຫ້ແກ່ພາກລັດ ແລະ ພາກທຸລະກິດ ໃຫ້ຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບຄວາມສຳຄັນຂອງການຮ່ວມກຸ່ມທຸລະກິດ, ຕ່ອງໂສ້ມູນຄ່າເພີ່ມ ແລະ ທຸລະກິດແບບທົ່ວເຖິງ (Inclusive Business);

4.5.4 ຊຸກຍູ້ ຈນກ ໃຫ້ເກີດການຮ່ວມກຸ່ມທຸລະກິດ ໃຫ້ສາມາດຮ່ວມມືກັນ ແລະ ແບ່ງງານກັນໃນການຜະລິດ ເພື່ອເຮັດໃຫ້ຕົ້ນທຶນຕ່ຳ ທັງເພີ່ມອຳນາດການຕໍ່ລອງດ້ານຕະຫລາດ ແລະ ຜູ້ສະໜອງປັດໄຈການຜະລິດ;

4.5.5 ພັດທະນາຂອດຕ່າງໆຂອງການຄ້າ ແລະ ການຜະລິດສິນຄ້າ ແລະ ການບໍລິການທີ່ມີທ່າແຮງ ເພື່ອປັບປຸງຜະລິດຕະພາບ ແລະ ຄຸນນະພາບ ຜະລິດຕະພັນ ແລະ ບໍລິການ ໃຫ້ສາມາດແຂ່ງຂັນ ແລະ ສອດຄ່ອງກັບຄວາມຕ້ອງການຂອງຕະຫລາດ;

4.5.6 ສ້າງກົນໄກເຜີຍແຜ່ ແລະ ສົ່ງເສີມທຸລະກິດແບບທົ່ວເຖິງ (Inclusive) ເພື່ອໃຫ້ຜູ້ມີລາຍຮັບຕ່ຳ ມີສ່ວນຮ່ວມໃນການສະໜອງສິນຄ້າ ແລະ ບໍລິການ ໃຫ້ຂອດການຜະລິດ;

4.5.7 ຄົ້ນຄວ້າທຶນສົມທົບ ເພື່ອຊ່ວຍເຫລືອ ຈນກ ເຂົ້າເຖິງການຢັ້ງຢືນດ້ານເຕັກນິກຕ່າງໆ ເຊັ່ນ: ການຢັ້ງຢືນມາດຕະຖານ ແລະ ຄຸນນະພາບ, ສຸຂະອານາໄມພືດ ແລະ ສັດ, ມາດຕະຖານຄວາມປອດໄພອາຫານ, ການຢັ້ງຢືນຖິ່ນກຳເນີດສິນຄ້າ (GI) ແລະ ອື່ນໆ;

4.5.8 ສ້າງເວທີພົບປະ ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ຈັບຄູ່ທຸລະກິດ ລະຫວ່າງ ວິສາຫະກິດຂະໜາດໃຫຍ່ ຫລື ວິສາຫະກິດລົງທຶນໂດຍກົງຈາກຕ່າງປະທດ ແລະ ຈນກ;

4.5.9 ເປີດເຜີຍແຜນການ ຈັດຊື້-ຈັດຈ້າງ ສຳລັບໂຄງການຂອງລັດໃຫ້ແກ່ ຈນກ ຮັບຊາບຢ່າງເປັນປະຈຳ;

4.5.10 ສະໜອງການຝຶກອົບຮົມ, ສຳມະນາ ເພື່ອປັບປຸງຄຸນນະພາບຂອງສິນຄ້າ ຕາມມາດຕະຖານ, ເງື່ອນໄຂ ໃນການຢັ້ງຢືນເຄື່ອງໝາຍ ODOP;

4.5.11 ປັບປຸງຖານຂໍ້ມູນຂ່າວສານດ້ານຕະຫລາດທັງພາຍໃນ ແລະ ຕ່າງປະເທດ ຢ່າງເປັນປະຈຳ ເພື່ອສະໜອງຂໍ້ມູນທີ່ທັນການໃຫ້ແກ່ ຈນກ.

## 4.6. ມາດຕະການສຳລັບການສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດ

4.6.1 ປັບປຸງລະບຽບ ແລະ ພັດທະນາ ລະບົບການຂຶ້ນທະບຽນວິສາຫະກິດແບບເອເລັກໂຕຣນິກ ເພື່ອຄວາມສະດວກ ແລະ ວ່ອງໄວ;

4.6.2 ປັບປຸງລະບົບການຊຳລະອາກອນໃຫ້ກະທັດຮັດ, ສະດວກ ແລະ ວ່ອງໄວ;

4.6.3 ປັບປຸງວິທີການຄົ້ນຄວ້າ ແລະ ພິຈາລະນາ ເພື່ອອອກໃບອະນຸຍາດດຳເນີນທຸລະກິດໃຫ້ວ່ອງໄວ ແລະ ຮັບປະກັນຄວາມຖືກຕ້ອງຕາມລະບຽບຫລັກການ ເພື່ອຫລຸດຜ່ອນໄລຍະເວລາ ແລະ ຄ່າສິ້ນເປືອງຕ່າງໆໃຫ້ພາກທຸລະກິດ ໂດຍສະເພາະແມ່ນ ຈນກ;

4.6.4 ຂະຫຍາຍໂອກາດໃນການປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ ທັງສູນກາງ ແລະ ທ້ອງຖິ່ນ ໃຫ້ຫລາຍຂຶ້ນເພື່ອເປີດໂອກາດໃຫ້ ຈນກ, ໂດຍສະເພາະ ຈນກ ຂັ້ນທ້ອງຖິ່ນສາມາດສະເໜີບັນຫາ ທີ່ຕິດພັນກັບການດຳເນີນທຸລະກິດຂອງຕົນ ຕໍ່ພາກລັດໄດ້ຢ່າງທົ່ວເຖິງ ແລະ ສາມາດແກ້ໄຂໄດ້ທັນກັບສະພາບການ;

4.6.5 ສ້າງໂອກາດໃຫ້ມີການປຶກສາຫາລື ລະຫວ່າງ ວິສາຫະກິດຂະໜາດໃຫຍ່ ຫລື ວິສາຫະກິດທີ່ເປັນການລົງທຶນຂອງຕ່າງປະເທດ ກັບ ຈນກ;

4.6.6 ປັບປຸງຂອດບໍລິການ ອອກໃບອະນຸຍາດລົງທຶນ ແລະ ໃບອະນຸຍາດດຳເນີນທຸລະກິດ ໃຫ້ມີຄວາມສະດວກ ວ່ອງໄວ ແລະ ໃຫ້ສອດຄ່ອງກັບບົດຮຽນທີ່ດີຂອງສາກົນ ໂດຍກຳນົດການອອກໃບອະນຸຍາດດຳເນີນທຸລະກິດ ຕາມຄວາມສ່ຽງຂອງກິດຈະການ ແລະ ສ້າງກົນໄກການຄຸ້ມຄອງທີ່ເຂັ້ມແຂງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດດັ່ງກ່າວມີປະສິດທິພາບ;

4.6.7 ກຳນົດລະບົບການບັນຊີເປັນອັນສະເພາະທີ່ເໝາະສົມ ສຳລັບ ຈນກ ແຕ່ລະຂະໜາດ.

## 4.7 ມາດຕະການສຳລັບ ພາສີ-ອາກອນ ແລະ ດ້ານການເງິນ

4.7.1 ຄົ້ນຄວ້າ ແລະ ກຳນົດບັນດາກິດຈະການ ແລະ ຂະແໜງການບຸລິມະສິດທີ່ຈະໄດ້ຮັບນະໂຍບາຍທາງດ້ານພາສີ-ອາກອນ ແລະ ການເງິນ;

4.7.2 ຄົ້ນຄວ້າ ແລະ ກຳນົດບັນດາເງື່ອນໄຂສຳລັບ ຈນກ ແບບສະຕາດອັບເພື່ອໃຫ້ ໄດ້ຮັບການຍົກເວັ້ນອາກອນມູນຄ່າເພີ່ມ ແລະ ອາກອນກຳໄລ;

4.7.3 ຈັດສັນງົບປະມານ ແລະ ແຫລ່ງທຶນທີ່ເປັນໄປໄດ້ເພື່ອສະໜອງສິນເຊື່ອໃຫ້ແກ່ ຈນກ;

4.7.4 ສ້າງ ແລະ ດຳເນີນໂຄງການທຶນສົມທົບໃຫ້ແກ່ ຈນກ ໃນການປັບປຸງ ແລະ ປ່ຽນຖ່າຍເຕັກໂນໂລຊີ ແລະ ການຊອກຫາຕະຫລາດ ທັງພາຍໃນ ແລະ ຕ່າງປະເທດ;

4.7.5 ສ້າງ ແລະ ດຳເນີນ ໂຄງການທຶນສົມທົບໃຫ້ແກ່ ຈນກ ເພື່ອເປັນຄ່າໃຊ້ ຈ່າຍສຳລັບການສະໜອງບໍລິການໃຫ້ຄຳປຶກສາຈາກຜູ້ຊ່ຽວຊານ ເພື່ອປັບປຸງທຸລະກິດດ້ານຕ່າງໆ.

## 5. ໝາກຜົນ ແລະ ຕົວຊີ້ວັດ

ໝາກຜົນ ແລະ ຕົວຊີ້ວັດ ຂອງການຈັດຕັ້ງປະຕິບັດ 07 ນະໂຍບາຍ ທີ່ໄດ້ກຳນົດໃນ ແຜນພັດທະນາ ຈນກ 2021-2025 ໄດ້ຄາດຄະເນໄວ້ ດັ່ງນີ້:

| | ຂົງເຂດນະໂຍບາຍ | ໝາກຜົນ | ຕົວຊີ້ວັດຮອດປີ 2025 | ພາກສ່ວນຮັບຜິດຊອບ |
|---|---|---|---|---|
| 1 | ນະໂຍບາຍພັດທະນາຜູ້ປະກອບກິດຈະການ | ຈຳນວນສູນຜູ້ປະກອບກິດຈະການເພີ່ມຂຶ້ນ | 03 ສູນ | ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງສຶກສາທິການ ແລະ ກິລາ |
| 2 | ນະໂຍບາຍພັດທະນາຜູ້ປະກອບກິດຈະການ | ຈຳນວນຜູ້ປະກອບກິດຈະການແບບສະຕາດອັບເພີ່ມຂຶ້ນ | 1000 ຫົວໜ່ວຍ | ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງເຕັກໂນໂລຊີ ແລະ ການສື່ສານ |
| 3 | ນະໂຍບາຍພັດທະນາຜູ້ປະກອບກິດຈະການ | ຈຳນວນຜູ້ປະກອບກິດຈະການເພີ່ມຂຶ້ນ | ຈຳນວນຜູ້ປະກອບກິດຈະການເພີ່ມຂຶ້ນປີລະ 2% | ກະຊວງອຸດສະຫະກຳ ແລະ ການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງ. |
| 4 | ນະໂຍບາຍພັດທະນາຜູ້ປະກອບກິດຈະການ | ທຸລະກິດແບບສະຕາດອັບໄດ້ຮັບການສົ່ງເສີມຢ່າງເປັນລະບົບ | ສຳເລັດການສ້າງນະໂຍບາຍສົ່ງເສີມທຸລະກິດແບບສະຕາດອັບ, ກອງທຶນລົງທຶນຮ່ວມ ໄດ້ຮັບການສ້າງຕັ້ງ ແລະ ດຳເນີນງານ | ກະຊວງອຸດສະຫະກຳ ແລະ ການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງ. |
| 5 | ນະໂຍບາຍສົ່ງເສີມການເຂົ້າເຖິງແຫລ່ງທຶນ | ຜະລິດຕະພັນສິນເຊື່ອສຳລັບ SME ເພີ່ມຂຶ້ນ | ອັດຕາສິນເຊື່ອສະໜອງທີ່ວລະບົບກວມເອົາ 35% ຂອງ ຈນກ ໃນປີ 2023 | ທະນາຄານແຫ່ງ ສປປ ລາວ ທະນາຄານທຸລະກິດ |
| 6 | ນະໂຍບາຍສົ່ງເສີມການເຂົ້າເຖິງແຫລ່ງທຶນ | ການເພີ່ມຂຶ້ນຂອງທຶນ ທສວ | ທຶນຂອງ ທສວ ເພີ່ມຂຶ້ນຢ່າງໜ້ອຍ 1300 ຕື້ກີບ | ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ |
| 7 | ນະໂຍບາຍສົ່ງເສີມການເຂົ້າເຖິງແຫລ່ງທຶນ | ຄົ້ນຄວ້າ ແລະ ສ້າງ ຜະລິດຕະພັນທາງດ້ານການເງິນສຳລັບ ຈນກ | ກອງທຶນຄ້ຳປະກັນສິນເຊື່ອ ໄດ້ຮັບການຈັດຕັ້ງປະຕິບັດ ພາຍໃນປີ 2025 | ທະນາຄານແຫ່ງ ສປປ ລາວ |

| | | | | |
|---|---|---|---|---|
| 8 | ນະໂຍບາຍສົ່ງເສີມການເຂົ້າເຖິງແຫລ່ງທຶນ | ຄົ້ນຄວ້າກົນໄກການປ່ອຍກູ້ໃຫ້ແກ່ ຈນກ ຜ່ານສະຖາບັນການເງິນຈຸລະພາກ | ສະໜອງທຶນຈາກກອງທຶນສົ່ງເສີມ ວນກ ແລະ ຈາກແຫລ່ງອື່ນໆຈຳນວນໜຶ່ງ ໃຫ້ສະຖາບັນການເງິນຈຸລະພາກ ເພື່ອ ນຳໄປປ່ອຍກູ້ເປັນການສະເພາະ ໃຫ້ຈຸນລະວິສາຫະກິດ ແລະ ກຸ່ມຜູ້ຜະລິດກະສິກຳຂະໜາດນ້ອຍ ແລະ ກາງ ດ້ວຍການດັດສົມອັດຕາດອກເບ້ຍ ຈາກປົກກະຕິ 3% ຕໍ່ເດືອນ ຫລື 36% ຕໍ່ປີ ໃຫ້ຢູ່ໃນລະດັບ 1% ຕໍ່ເດືອນ ຫລື 12% ຕໍ່ປີ. | ກະຊວງອຸດສະຫະກຳ ແລະ ການຄ້າ; ກະຊວງແຜນການ ແລະ ການລົງທຶນ; ທະນາຄານແຫ່ງ ສປປ ລາວ, ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ. |
| 9 | ນະໂຍບາຍສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ | ຜະລິດຕະພາບ ແລະ ຄຸນນະພາບ ໄດ້ຮັບການຍົກລະດັບ | ຜະລິດຕະພາບແຮງງານແຫ່ງຊາດ ເພີ່ມຂຶ້ນເປັນ 21.000 ໂດລາສະຫະລັດ ໃນປີ 2025 | ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສຶກສາທິການ ແລະ ກິລາ |
| 10 | ນະໂຍບາຍສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ | ສີມືແຮງງານໄດ້ຮັບການປັບປຸງ ແລະ ພັດທະນາ, ສາມາດເຂົ້າຮ່ວມໃນກິດຈະກຳຂອງການຜະລິດເສດຖະກິດດິຈິຕອນ | ຫລັກສູດສີມືແຮງງານໄດ້ຮັບການປັບປຸງ, ສາມາດຝຶກອົບຮົມຍົກລະດັບສີມືແຮງງານຈຳນວນ 15.000 ຄົນ ແລະ ທົດສອບສີມືແຮງງານແຫ່ງຊາດໃຫ້ໄດ້ 1.700 ຄົນ. | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສຶກສາທິການ ແລະ ກິລາ |
| 11 | ນະໂຍບາຍສົ່ງເສີມການເຂົ້າເຖິງການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ | ຂະຫຍາຍສູນບໍລິການ ວນກ ຢູ່ບັນດາແຂວງທີ່ມີທ່າແຮງ | ຂະຫຍາຍສູນບໍລິການ ວນກ ໃຫ້ໄດ້ຕື່ມອີກຢ່າງໜ້ອຍ 12 ແຂວງ | ກະຊວງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ |

| | | | | |
|---|---|---|---|---|
| 12 | ນະໂຍບາຍສົ່ງເສີມການເຂົ້າເຖິງການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ | SME ໄດ້ຮັບການຝຶກອົບຮົມ ແລະ ການແນະນຳກ່ຽວກັບການສ້າງແຜນທຸລະກິດ, ການວາງແຜນການເງິນ ແລະ ການຖືບັນຊີຢູ່ທຸກແຂວງ ໃນຂອບເຂດທົ່ວປະເທດ | ສາມາດສະໜອງການຝຶກອົບຮົມໃຫ້ແກ່ ຈນກ ໄດ້ຢ່າງໜ້ອຍ 5.000 ຫົວໜ່ວຍ | ກະຊວງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ |
| 13 | ນະໂຍບາຍສົ່ງເສີມການເຂົ້າເຖິງ ແລະ ຂະຫຍາຍຕະຫລາດ | ຈນກ ນຳໃຊ້ການຄ້າທາງເອເລັກໂຕຣນິກໃນການເຂົ້າເຖິງຕະຫລາດ | ຈຳນວນຜະລິດຕະພັນ ຈນກ ຢູ່ບັນດາຕະຫລາດເອເລັກໂຕຣນິກ ເພີ່ມຂຶ້ນປີລະ 10% | ກະຊວງອຸດສະຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວແລະ ພາກສ່ວນທີ່ກ່ຽວຂ້ອງ. |
| 14 | ນະໂຍບາຍສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດ | ຫລຸດຂັ້ນຕອນການເລີ່ມຕົ້ນທຸລະກິດ ຫລືຂໍອະນຸຍາດຈາກຂະແໜງການ | ຮັບປະກັນການເລີ່ມຕົ້ນທຸລະກິດ ຫລືຂໍອະນຸຍາດດຳເນີນທຸລະກິດຂອງບັນດາຂະແໜງການ ຈາກ 9 ຂັ້ນຕອນໃຫ້ເຫລືອ 3 ຂັ້ນຕອນ ແລະ ຫລຸດເວລາ ຈາກ 174 ວັນມາເປັນ 17 ວັນລັດຖະການ ແລະ ໃຫ້ທະນາຄານໂລກຮັບຮອງ | ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງແຜນການ ແລະ ການລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ |
| 15 | ນະໂຍບາຍສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດ | ລະບົບການຂຶ້ນທະບຽນວິສາຫະກິດໄດ້ຮັບການປັບປຸງໃຫ້ດີຂຶ້ນກວ່າເກົ່າ | ສ້າງລະບົບການຂຶ້ນທະບຽນວິສາຫະກິດແບບເອເລັກໂຕຣນິກ | ກະຊວງອຸດສາຫະກຳ ແລະ ການຄ້າ |
| 16 | ນະໂຍບາຍສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດ | ນິຕິກຳທີ່ຮັບໃຊ້ໃຫ້ແກ່ການສົ່ງເສີມ ຈນກ ໄດ້ຮັບການປັບປຸງ ເພື່ອສາມາດເຄື່ອນໄຫວວຽກງານສົ່ງເສີມ ຈນກ ໄດ້ຄ່ອງຕົວກວ່າເກົ່າ | ປັບປຸງກົດໝາຍວ່າດ້ວຍການສົ່ງເສີມ ວນກ ສະບັບເລກທີ 11/ສພຊ, ດຳລັດວ່າດ້ວຍການຈັດແບ່ງຂະໜາດ ວນກ ສະບັບເລກທີ 25/ລບ ແລະ ປັບປຸງດຳລັດວ່າດ້ວຍກອງທຶນສົ່ງເສີມ | ກະຊວງອຸດສາຫະກຳ ແລະ ການຄ້າ |

| | | | | |
|---|---|---|---|---|
| | | | ວນກ ສະບັບເລກທີ 299/ລບ ໃຫ້ສຳເລັດ | |
| 17 | ນະໂຍບາຍສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດ | ຈຳນວນຂອງການຂຶ້ນທະບຽນວິສາຫະກິດເພີ່ມຂຶ້ນໃນແຕ່ລະປີ | ເພີ່ມອັດຕາການຈົດທະບຽນໃຫມ່ຂອງ ຈນກ ໃຫ້ເພີ່ມຂຶ້ນປີລະ 8% | ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງ |
| 18 | ນະໂຍບາຍພາສີ-ອາກອນ ແລະ ດ້ານການເງິນ | ຄົ້ນຄວ້າບັນດານິຕິກຳ ເພື່ອສົ່ງເສີມ ຈນກ ໂດຍການໄດ້ຮັບນະໂຍບາຍຕ່າງໆ | ທຸລະກິດແບບສະຕາດອັບ ໄດ້ຮັບນະໂຍບາຍດ້ານພາສີ-ອາກອນ | ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງ |
| 19 | ນະໂຍບາຍພາສີ-ອາກອນ ແລະ ດ້ານການເງິນ | ຄົ້ນຄວ້າກົນໄກທຶນສົມທົບດ້ານການຍົກລະດັບເຕັກໂນໂລຊີ | ສ້າງຕັ້ງທຶນ ແລະ ເຄື່ອນໄຫວທຶນສົມທົບ ໂດຍສາມາດລະດົມທຶນຈາກພາກສ່ວນຕ່າງໆ ເພື່ອຊ່ວຍເຫລືອ ຈນກ ຍົກລະດັບເຕັກໂນໂລຊີການຜະລິດ | ກະຊວງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວແລະ ພາກສ່ວນທີ່ກ່ຽວຂ້ອງ |

# V. ມາດຕະການຈັດຕັ້ງປະຕິບັດ ແລະ ກົນໄກການປະສານງານ



# V. ມາດຕະການຈັດຕັ້ງປະຕິບັດ ແລະ ກົນໄກການປະສານງານ

## 1. ມາດຕະການຈັດຕັ້ງປະຕິບັດ

ເພື່ອເຮັດໃຫ້ ແຜນພັດທະນາ ຈນກ 2021-2025 ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະ ບັນລຸຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້ ຕ້ອງໄດ້ສຸມໃສ່ບັນດາມາດຕະການຕົ້ນຕໍ ດັ່ງນີ້:

1.1 ລັດຖະບານອອກດຳລັດຈັດຕັ້ງປະຕິບັດ ແຜນພັດທະນາ ຈນກ 2021-2025 ໂດຍມອບໃຫ້ ກະຊວງ ອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຜັນຂະຫຍາຍແຜນພັດທະນາສະບັບດັ່ງກ່າວ;

1.2 ເຜີຍແຜ່ ແຜນພັດທະນາ ຈນກ 2021-2025 ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງທັງພາກລັດ ແລະ ພາກທຸລະກິດ ທັງສູນກາງ ແລະ ທ້ອງຖິ່ນ ເພື່ອເປັນເອກະພາບ ແລະ ຮ່ວມມືກັນ ໃນການຈັດຕັ້ງປະຕິບັດບັນດາມາດຕະການ ຫລື ໂຄງການຕ່າງໆໃນການສົ່ງເສີມ ຈນກ ຕາມພາລະບົດບາດຂອງແຕ່ລະຂະແໜງການ;

1.3 ບັນດາກະຊວງ, ຂະແໜງການ ແລະ ອຳນາດການປົກຄອງທ້ອງຖິ່ນ ຈະຕ້ອງບັນຈຸເອົາ ແຜນພັດທະນາ ຈນກ ດັ່ງກ່າວເຂົ້າໃນ ແຜນພັດທະນາເສດຖະກິດ-ສັງຄົມ ຂອງຕົນ ແລະ ຜັນຂະຫຍາຍບັນດານະໂຍບາຍອອກເປັນແຜນງານ ແລະ ໂຄງການລະອຽດ ສອດຄ່ອງກັບວຽກງານຂອງຂະແໜງການ ແລະ ທ້ອງຖິ່ນຂອງຕົນ, ພ້ອມທັງຈັດສັນງົບປະມານທີ່ເໝາະສົມ ເພື່ອຈັດຕັ້ງປະຕິບັດກິດຈະກຳສົ່ງເສີມ ຈນກ ໂດຍປະສານສົມທົບ ແລະ ຮ່ວມມືກັນກັບພາກສ່ວນກ່ຽວຂ້ອງ;

1.4 ເພີ່ມທະວີຄວາມເປັນເຈົ້າການຂອງອົງການຈັດຕັ້ງຂອງພາກລັດ ແລະ ພາກທຸລະກິດ ເຊັ່ນ: ບັນດາແຂວງ, ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ, ບັນດາສະມາຄົມ, ຜູ້ສະໜອງບໍລິການຝຶກອົບຮົມ ແລະ ກຸ່ມທຸລະກິດໃນຂະແໜງຕ່າງໆ ເພື່ອຈັດຕັ້ງປະຕິບັດໂຄງການ ແລະ ກິດຈະກຳສົ່ງເສີມ ຈນກ ບໍ່ວ່າຈະເປັນການຊ່ວຍເຫລືອດ້ານວິຊາການ, ການຝຶກອົບຮົມ, ການສະໜອງຂໍ້ມູນຂ່າວສານດ້ານທຸລະກິດ ແລະ ກິດຈະກຳອື່ນໆ ທີ່ເປັນການກະຕຸກຊຸກຍູ້ ການພັດທະນາ ຈນກ;

1.5 ດຳເນີນການທົບທວນ ແລະ ປັບປຸງນິຕິກຳ ທີ່ເອື້ອອຳນວຍໃຫ້ແກ່ວຽກງານສົ່ງເສີມ ແລະ ພັດທະນາ ຈນກ ຕາມແຜນການສ້າງ ແລະ ປັບປຸງກົດໝາຍຂອງສະພາແຫ່ງຊາດ ຊຸດທີ IX (2021-2025) ໂດຍສະເພາະແມ່ນການປັບປຸງ ກົດໝາຍວ່າດ້ວຍການສົ່ງເສີມ ວນກ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011; ວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄລຍະ 2021-2023 ເປັນຕົ້ນແມ່ນ ການປັບປຸງດຳລັດວ່າດ້ວຍກອງທຶນສົ່ງເສີມ ວນກ ສະບັບເລກທີ 299/ລບ, ລົງວັນທີ 04 ກັນຍາ 2019, ດຳລັດວ່າດ້ວຍການຈັດແບ່ງຂະໜາດ ວນກ ສະບັບເລກທີ 25/ລບ, ລົງວັນທີ 16 ມັງກອນ 2017 ແລະ ຕາມທິດທາງນະໂຍບາຍຂອງລັດຖະບານໃນແຕ່ລະໄລຍະ. ພ້ອມກັນນັ້ນ ກໍ່ຄົ້ນຄວ້າອອກນິຕິກຳລຸ່ມກົດໝາຍ ເພື່ອກຳນົດຫລັກການ, ວິທີການ ແລະ ລະບຽບການ ໃນການໃຫ້ບຸລິມະສິດດ້ານຕ່າງໆໃຫ້ແກ່ ຈນກ ໃນຂະແໜງການທີ່ມີລັກສະນະຍຸດທະສາດ ເຊັ່ນ: ການປະກອບສ່ວນລຶບລ້າງຄວາມທຸກຍາກ, ການແກ້ໄຂວຽກເຮັດງານທຳ, ການອະນຸລັກວິຊາຊີບທີ່ເປັນມູນເຊື້ອຂອງຊາດ, ການແກ້ໄຂບັນຫາສັງຄົມ ແລະ ອື່ນໆ ຕາມການເຫັນດີຂອງລັດຖະບານ;

1.6 ອອກນະໂຍບາຍໄນ້ງືດໃຫ້ ຈນກ ແລະ ພາກສ່ວນທີ່ຍັງບໍ່ໄດ້ຂຶ້ນທະບຽນ ຫັນມາຂຶ້ນທະບຽນເພື່ອໃຫ້ໄດ້ຮັບການຊ່ວຍເຫລືອດ້ານການເງິນ ແລະ ດ້ານວິຊາການ ຈາກພາກສ່ວນຕ່າງໆ.

## 2. ກົນໄກການປະສານງານ

2.1 ສ້າງກົນໄກປະສານງານເພື່ອ ຊີ້ນຳ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດແຜນພັດທະນາ ຈນກ ໃນລະດັບຊາດ ແລະ ລະດັບທ້ອງຖິ່ນ ແລະ ສ້າງລະບົບການຈັດຕັ້ງທີ່ມີປະສິດທິພາບ ໃຫ້ໃກ້ຄຽງກັບປະເທດສະມາຊິກອາຊຽນ ຫລື ປະເທດທີ່ມີປະສົບການ ແລະ ມີຜົນສຳເລັດໃນການສົ່ງເສີມ ຈນກ ຢູ່ໃນລະດັບຊາດ ແລະ ລະດັບທ້ອງຖິ່ນ;

2.2 ພັດທະນາລະບົບການຕິດຕາມປະເມີນຜົນໃນການຈັດຕັ້ງປະຕິບັດແຜນພັດທະນາ ຈນກ ຂອງລັດຖະບານ ແລະ ສ້າງລະບົບຕິດຕາມປະເມີນຜົນ ແຜນພັດທະນາ ຈນກ ໃນລະດັບທ້ອງຖິ່ນ ເພື່ອໃຫ້ສາມາດລາຍງານສະພາບການໃນການຈັດຕັ້ງປະຕິບັດໄດ້ຢ່າງເປັນລະບົບ ແລະ ທັນກັບສະພາບການ ໃນແຕ່ລະໄລຍະ.

# VI. ວິທີການຈັດຕັ້ງປະຕິບັດ



# VI. ວິທີການຈັດຕັ້ງປະຕິບັດ

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາ ຈນກ ປະສົບຜົນສຳເລັດ ຕາມ 07 ຂົງເຂດນະໂຍບາຍ ທີ່ກຳນົດໄວ້, ຈຶ່ງໄດ້ກຳນົດວິທີການເພື່ອຈັດຕັ້ງປະຕິບັດຈຳນວນໜຶ່ງ ດັ່ງນີ້:

## 1. ການຜັນຂະຫຍາຍ

### 1.1 ເພີ່ມທະວີການປະສານງານ

ການປະສານງານທີ່ມີປະສິດທິພາບ ຈະເຮັດໃຫ້ການຈັດຕັ້ງປະຕິບັດ ແຜນພັດທະນາ ຈນກ 2021-2025 ໄດ້ຮັບຜົນສຳເລັດ. ເນື່ອງຈາກ ການສົ່ງເສີມ ແລະ ພັດທະນາ ຈນກ ເປັນວຽກງານທີ່ມີຄວາມກ່ຽວພັນທັງ ສາຍຕັ້ງ ແລະ ສາຍຂວາງ ກັບຫລາຍຂະແໜງການ. ສະນັ້ນ, ທຸກພາກສ່ວນທີ່ກ່ຽວຂ້ອງຈະຕ້ອງໄດ້ໃຫ້ການຮ່ວມມືຈັດຕັ້ງປະຕິບັດຕາມພາລະບົດບາດຂອງຕົນເອງ ແລະ ສະໜອງຂໍ້ມູນ, ຄວາມຄືບໜ້າຂອງວຽກງານໃຫ້ກັນຊາບຢ່າງປົກກະຕິ ເພື່ອຫລີກລ່ຽງຄວາມຊໍ້າຊ້ອນໃນການປະຕິບັດວຽກງານ ໂດຍຜ່ານກົນໄກການປະສານງານທີ່ມີປະສິດທິພາບ.

### 1.2 ການກຳນົດແຫລ່ງທຶນ ແລະ ການຈັດສັນທຶນ

ທຶນຮອນ ເປັນປັດໄຈທີ່ມີຄວາມສຳຄັນ ແລະ ຕັດສິນຊີ້ຂາດ ການຈັດຕັ້ງປະຕິບັດບັນດາມາດຕະການ ແລະ ໂຄງການ ທີ່ກຳນົດໄວ້. ສະນັ້ນ, ຈຶ່ງຕ້ອງໄດ້ມີການກຳນົດແຫລ່ງທຶນ, ການລະດົມທຶນ ແລະ ການຈັດສັນທຶນຢ່າງເໝາະສົມເພື່ອໃຫ້ສາມາດດຳເນີນບັນດາມາດຕະການ ແລະ ໂຄງການເຫລົ່ານັ້ນໃຫ້ສຳເລັດ. ຢ່າງໃດກໍຕາມ, ນອກຈາກການລະດົມການຊ່ວຍເຫລືອທາງດ້ານທຶນຮອນຈາກພາຍນອກ ກໍ່ຍັງມີຄວາມຈຳເປັນຕ້ອງໄດ້ຈັດສັນງົບປະມານປົກກະຕິຂອງລັດຖະບານ ເພື່ອໃຫ້ສາມາດນຳມາຈັດຕັ້ງປະຕິບັດ ແຜນພັດທະນາ ຈນກ ຕື່ມອີກ.

### 1.3 ການເພີ່ມທະວີການປະກອບສ່ວນຂອງພາກທຸລະກິດ ແລະ ພາກສ່ວນກ່ຽວຂ້ອງ

ການປະຕິບັດ ແຜນພັດທະນາ ຈນກ 2021-2025 ຈະປະສົບຜົນສຳເລັດໄດ້ ກໍ່ຕໍ່ເມື່ອໄດ້ຮັບການສະໜັບສະໜູນ ແລະ ການເຂົ້າຮ່ວມຢ່າງຫ້າວຫັນຂອງພາກທຸລະກິດ ແລະ ອົງການຕົວແທນ ຂອງພາກທຸລະກິດ. ເນື່ອງຈາກພາກທຸລະກິດ ເປັນພາກສ່ວນທີ່ໄດ້ຮັບຜົນກະທົບໂດຍກົງຈາກການຈັດຕັ້ງປະຕິບັດນະໂຍບາຍຂອງລັດຖະບານ, ສະນັ້ນ ຈຶ່ງໄດ້ຊຸກຍູ້ ແລະ ສ້າງເງື່ອນໄຂໃຫ້ ຈນກ ໂດຍສະເພາະແມ່ນ ຜູ້ປະກອບກິດຈະການ ເພດຍິງ ແລະ ຊາວໜຸ່ມ ໄດ້ເຂົ້າຮ່ວມໃນການກຳນົດນະໂຍບາຍ, ລະບຽບການ, ຈັດຕັ້ງປະຕິບັດ ແລະ ຕິດຕາມ ແລະ ປະເມີນຜົນ ແຜນພັດທະນາ ຈນກ ສະບັບນີ້.

### 1.4 ການເຊື່ອມໂຍງກັບແຜນງານອື່ນໆຂອງລັດຖະບານ ແລະ ການດັດປັບຕາມຄວາມເໝາະສົມ

ແຜນພັດທະນາ ຈນກ ສະບັບນີ້ ແມ່ນໄດ້ເປັນສ່ວນໜຶ່ງຂອງແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ 2021-2025 ແລະ ແຜນພັດທະນາເສດຖະກິດ - ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025). ສະນັ້ນ ໃນການຈັດຕັ້ງປະຕິບັດ ຈຶ່ງຕ້ອງໄດ້ມີການປະສານສົມທົບຢ່າງໃກ້ຊິດ ກັບການຈັດຕັ້ງປະຕິບັດບັນດາຍຸດທະສາດ, ແຜນການ ແລະ ແຜນງານລວມຂອງລັດຖະບານ.

ນອກຈາກນີ້, ເນື່ອງຈາກ ແຜນພັດທະນາ ຈນກ ສະບັບນີ້ໄດ້ສ້າງຂຶ້ນບົນພື້ນຖານການເກັບກຳຂໍ້ມູນຕ່າງໆ ກ່ຽວກັບ ບັນຫາ, ອຸປະສັກ, ສິ່ງທ້າທາຍ ແລະ ຄວາມຮຽກຮ້ອງຕ້ອງການຂອງ ຈນກ ເພື່ອນຳໃຊ້ເປັນທິດທາງລວມເບື້ອງຕົ້ນ ສຳລັບການສົ່ງເສີມ ແລະ ພັດທະນາ ຈນກ ໃນໄລຍະ 2021-2025. ສະນັ້ນ, ການຈັດຕັ້ງປະຕິບັດຕົວຈິງ ຈະໄດ້ມີການດັດປັບໃຫ້ແທດເໝາະກັບສະພາບການ ແລະ ຈຸດພິເສດຂອງແຕ່ລະຂະແໜງການ ທັງສູນກາງ ແລະ ທ້ອງຖິ່ນຕື່ມອີກ.

## 2. ຄວາມຮັບຜິດຊອບຂອງພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ແຜນພັດທະນາ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 2021-2025

ເນື່ອງຈາກ ການສົ່ງເສີມ ແລະ ພັດທະນາ ຈນກ ເປັນການປັບປຸງວຽກງານທີ່ເປັນລັກສະນະແກນກາງ ຊຶ່ງທຸກພາກສ່ວນຕ້ອງໄດ້ຈັດຕັ້ງປະຕິບັດວຽກງານສົ່ງເສີມ ແລະ ພັດທະນາ ຈນກ ຕາມພາລະບົດບາດຂອງຕົນເອງ. ສະນັ້ນ, ການຈັດແບ່ງຄວາມຮັບຜິດຊອບທີ່ຈະແຈ້ງຊັດເຈນ ແລະ ການປະສານງານທີ່ມີປະສິດທິພາບ ຈຶ່ງມີຄວາມຈຳເປັນຢ່າງຍິ່ງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ແຜນພັດທະນາ ຈນກ 2021-2025 ປະສົບຜົນສຳເລັດ.

### 2.1 ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ມີບົດບາດສຳຄັນໃນການສັງລວມຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານສົ່ງເສີມ ແລະ ພັດທະນາ ຈນກ, ລາຍງານ ແລະ ຂໍທິດຊີ້ນຳຈາກລັດຖະບານ ໃນແຕ່ລະໄລຍະ.

### 2.2 ກະຊວງອຸດສາຫະກຳ ແລະ ການຄ້າ

- ເປັນເສນາທິການໃຫ້ແກ່ລັດຖະບານ ໃນວຽກງານສົ່ງເສີມ ແລະ ພັດທະນາ ຈນກ ຂອງ ສປປ ລາວ;
- ເຊື່ອມໂຍງແຜນພັດທະນາ ຈນກ 2021-2025 ເຂົ້າໃນແຜນພັດທະນາ, ແຜນຍຸດທະສາດ ຂອງຊາດ ແລະ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ເປັນຕົ້ນແມ່ນ: ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX, ແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ 2021-2025 ແລະ ອື່ນໆ;
- ຊີ້ນຳຢ່າງໃກ້ຊິດໃນການຈັດຕັ້ງປະຕິບັດວຽກງານຂອງ ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນຕົ້ນແມ່ນການເຜີຍແຜ່ ແຜນພັດທະນາ ຈນກ 2021-2025 ໃຫ້ທົ່ວສັງຄົມໄດ້ຮັບຊາບຢ່າງທົ່ວເຖິງ;
- ປະສານກັບບັນດາກະຊວງ, ອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້;
- ຊຸກຍູ້ການລະດົມທຶນຈາກແຫລ່ງຕ່າງໆ ເພື່ອຈັດຕັ້ງປະຕິບັດບັນດາມາດຕະການ, ໂຄງການ ແລະ ກິດຈະກຳຕ່າງໆທີ່ກຳນົດໄວ້ໃນແຜນພັດທະນາສະບັບນີ້.

### 2.3 ກະຊວງການເງິນ

ກະຊວງການເງິນ ເປັນເຈົ້າການຄົ້ນຄວ້າເພື່ອປັບປຸງກົນໄກ ແລະ ກຳນົດນະໂຍບາຍທາງດ້ານພາສີ-ອາກອນເປັນອັນສະເພາະສຳລັບ ຈນກ ລວມທັງ ທຸລະກິດແບບສະຕາດອັບ ເພື່ອສົ່ງເສີມການພັດທະນາຂອງຫົວໜ່ວຍທຸລະກິດ, ຊຸກຍູ້ຫົວໜ່ວຍທຸລະກິດໃຫ້ຫັນເຂົ້າສູ່ລະບົບ ແນໃສ່ເພື່ອເພີ່ມຖານລາຍຮັບທີ່ໝັ້ນຄົງໃຫ້ແກ່ລັດຖະບານ.

### 2.4 ທະນາຄານ ແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການຊຸກຍູ້ ແລະ ສ້າງກົນໄກທີ່ເອື້ອອຳນວຍໃຫ້ ຈນກ ສາມາດເຂົ້າເຖິງແຫລ່ງທຶນຈາກບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ໄດ້ສະດວກຍິ່ງຂຶ້ນ. ພ້ອມທັງ ຊຸກຍູ້ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ໃຫ້ນຳເອົາບັນດາມາດຕະການທີ່ກ່ຽວຂ້ອງເຂົ້າເປັນສ່ວນໜຶ່ງຂອງຍຸດທະສາດ ແລະ ແຜນງານຂອງຕົນ ເພື່ອຊ່ວຍຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນ.

### 2.5 ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ

ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ມີໜ້າທີ່ຫລັກໃນການເປັນຈຸດປະສານງານສຳລັບການສົ່ງເສີມ ແລະ ພັດທະນາ ຈນກ ໃນ ສປປ ລາວ ແລະ ມີໜ້າທີ່ຕົ້ນຕໍ ດັ່ງນີ້:

- ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ດຳເນີນການເຜີຍແຜ່ ແຜນພັດທະນາ ຈນກ 2021-2025 ໃຫ້ທຸກພາກສ່ວນກ່ຽວຂ້ອງ ທັງພາກລັດ, ພາກທຸລະກິດ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ແລະ ພາກສ່ວນອື່ນໆ ໄດ້ຮັບຊາບຢ່າງທົ່ວເຖິງ;
- ປະສານງານ ແລະ ຊຸກຍູ້ ໜ່ວຍງານທີ່ກ່ຽວຂ້ອງໃນລະດັບສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້;
- ລະດົມທຶນຈາກແຫລ່ງຕ່າງໆ ເພື່ອຈັດຕັ້ງປະຕິບັດບັນດາມາດຕະການ, ໂຄງການ ແລະ ກິດຈະກຳຕ່າງໆ ຕາມທີ່ກຳນົດໄວ້ໃນແຜນພັດທະນາສະບັບນີ້;
- ຕິດຕາມ, ປະເມີນຜົນ ແລະ ລາຍງານຄວາມຄືບໜ້າ ການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້ ໃນແຕ່ລະໄລຍະ.

## 2.6 ພາກທຸລະກິດ

ພາກທຸລະກິດ, ໂດຍສະເພາະ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (ສຄອຊ) ລວມທັງ ບັນດາສະມາຄົມທຸລະກິດ ມີບົດບາດສຳຄັນ ແລະ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ແຜນພັດທະນາ ຈນກ ໂດຍສະເພາະແມ່ນການໃຫ້ຄຳປຶກສາໃນທາງປະຕິບັດຕົວຈິງ ແລະ ການສະທ້ອນໃຫ້ເຫັນຜົນກະທົບ ຂອງບັນດາມາດຕະການຕ່າງໆ ຕໍ່ພາກທຸລະກິດ. ສະນັ້ນ, ສຄອຊ ຕ້ອງໄດ້ເພີ່ມທະວີພາລະບົດບາດຂອງຕົນໃນການເປັນຕົວແທນໃຫ້ແກ່ພາກທຸລະກິດ ກໍ່ຄືຫົວໜ່ວຍທຸລະກິດ, ຊຸກຍູ້ບັນດາຫົວໜ່ວຍທຸລະກິດ ເຄື່ອນໄຫວຢ່າງມີປະສິດທິຜົນ, ຖືກຕ້ອງຕາມລະບຽບກົດໝາຍ, ຄົ້ນຄວ້າປະກອບຄຳຄິດເຫັນ ແລະ ປະສານງານຢ່າງໃກ້ຊິດ ກັບພາກລັດຖະບານ ໃນວຽກງານສົ່ງເສີມ ແລະ ພັດທະນາ ຈນກ ໃນ ສປປ ລາວ.

## 2.7 ຄູ່ຮ່ວມພັດທະນາ ຫລື ປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ

ບັນດາຄູ່ຮ່ວມພັດທະນາ ເປັນຜູ້ທີ່ມີບົດບາດສຳຄັນໃນການສະໜັບສະໜູນທາງດ້ານທຶນຮອນ ແລະ ເຕັກນິກວິຊາການ ເຂົ້າໃນການສ້າງນະໂຍບາຍ ແລະ ມາດຕະການສົ່ງເສີມ ແລະ ພັດທະນາ ຈນກ ຢູ່ ສປປ ລາວ. ລັດຖະບານຕີລາຄາສູງຕໍ່ການຊ່ວຍເຫລືອ ແລະ ການສະໜັບສະໜູນໃນໄລຍະຜ່ານມາ ລວມທັງການສືບຕໍ່ໃຫ້ການສະໜັບສະໜູນໃນຕໍ່ໜ້າ. ສະນັ້ນ, ຮຽກຮ້ອງໃຫ້ຄູ່ຮ່ວມພັດທະນາ, ປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ພິຈາລະນາ ແລະ ກຳນົດເອົາຂົງເຂດວຽກງານ ຫລື ມາດຕະການຕ່າງໆໂດຍອີງຕາມພາລະບົດບາດ ແລະ ຄວາມຊຳນານຂອງຕົນ ເພື່ອບັນຈຸເຂົ້າໃນແຜນການຮ່ວມມືໃນຕໍ່ໜ້າ ແນ່ໃສ່ເຮັດໃຫ້ການສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາສະບັບດັ່ງກ່າວປະສົບຜົນສຳເລັດຕາມຄາດໝາຍ.

## 2.8 ບັນດາກະຊວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ

ເນື່ອງຈາກ ວຽກງານການສົ່ງເສີມ ແລະ ພັດທະນາ ຈນກ ມີການກ່ຽວພັນຢ່າງສະໜິດແໜ້ນທັງສາຍຕັ້ງ ແລະ ສາຍຂວາງ. ສະນັ້ນ, ບັນດາກະຊວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ຕ້ອງເປັນເຈົ້າການຈັດຕັ້ງປະຕິບັດ ແຜນພັດທະນາ ຈນກ ສະບັບນີ້ໃຫ້ສຳເລັດຕາມລະດັບຄາດໝາຍ ດ້ວຍການຜັນຂະຫຍາຍແຜນພັດທະນາ ແລະ ບັນດາມາດຕະການຕ່າງໆ ເຂົ້າໃນແຜນວຽກ ແລະ ແຜນກິດຈະກຳຂອງຕົນ ຕາມຄວາມເໝາະສົມ.

ນອກຈາກນີ້, ຂະແໜງການຕ່າງໆ ຍັງຕ້ອງໄດ້ໃຫ້ການຮ່ວມມືໃນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດໃນແຕ່ລະໄລຍະ ເພື່ອໃຫ້ ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດເກັບກຳ ແລະ ລາຍງານຄວາມຄືບໜ້າໃຫ້ຂັ້ນເທິງເພື່ອຊາບ ແລະ ໃຫ້ທິດຊີ້ນຳຢ່າງເປັນລະບົບຕໍ່ເນື່ອງ.

## 3. ການຕິດຕາມກວດກາ, ປະເມີນຜົນ ແລະ ການລາຍງານ

ການຕິດຕາມກວດກາ, ປະເມີນຜົນ ແລະ ການລາຍງານ ທີ່ມີປະສິດທິພາບ ແມ່ນມີຄວາມຈຳເປັນ ເພື່ອຮັບປະກັນການຈັດຕັ້ງປະຕິບັດ ແຜນພັດທະນາ ຈນກ ສະບັບນີ້ ເພາະຈະຊ່ວຍໃຫ້ສາມາດເກັບກຳຂໍ້ມູນກ່ຽວກັບຄວາມຄືບໜ້າ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ລວມທັງຜົນກະທົບ ເພື່ອລາຍງານຂັ້ນເທິງຮັບຊາບ ແລະ ໃຫ້ທິດຊີ້ນຳການປັບປຸງແກ້ໄຂຢ່າງທັນການໃນກໍລະນີຈຳເປັນ. ການຕິດຕາມປະເມີນຜົນ ແມ່ນຈະໄດ້ຈັດຕັ້ງປະຕິບັດໃນ 02 ລະດັບຄື: ການຕິດຕາມປະເມີນຜົນການຈັດຕັ້ງປະຕິບັດ ທຸກໆ 6 ເດືອນ ໂດຍນຳໃຊ້ລະບົບການຕິດຕາມປະເມີນຜົນທີ່ໄດ້ພັດທະນາຂຶ້ນມາ ຜ່ານລະບົບອອນລາຍ ເພື່ອຕິດຕາມປະເມີນຜົນການຈັດຕັ້ງປະຕິບັດ ແຜນພັດທະນາ ຈນກ 2021-2025 ແລະ ການຕິດຕາມ, ປະເມີນຜົນໂດຍ ອີງໃສ່ບົດລາຍງານຜົນການສຳຫລວດຕ່າງໆ ໂດຍສະເພາະແມ່ນການສຳຫລວດເສດຖະກິດທົ່ວປະເທດ ທຸກໆ 5 ປີ.

ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກຳ ແລະ ການຄ້າ ຈະໄດ້ເປັນໃຈກາງໃນການສັງລວມ ແລະ ລາຍງານຄວາມຄືບໜ້າ ການຈັດຕັ້ງປະຕິບັດແຜນພັດທະນາ ຈນກ 2021-2025 ໃຫ້ແກ່ກະຊວງອຸດສາຫະກຳ ແລະ ການຄ້າ, ລັດຖະບານ ແລະ ພາກສ່ວນກ່ຽວຂ້ອງ ໄດ້ຮັບຊາບຢ່າງເປັນປະຈຳ. ນອກຈາກການລາຍງານທຸກໆ 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ຕາມລະບົບປົກກະຕິແລ້ວ, ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງຈະສ້າງບົດລາຍ ແລະ ບົດຄົ້ນຄວ້າອື່ນ ໃນແຕ່ລະໄລຍະ ເພື່ອເຜີຍແຜ່ໃຫ້ທຸກພາກສ່ວນໄດ້ຮັບຊາບຢ່າງທົ່ວເຖິງ.

# VII. ງົບປະມານ ແລະ ແຫລ່ງທຶນ



# VII. ງົບປະມານ ແລະ ແຫລ່ງທຶນ

## 1. ຄາດຄະເນງົບປະມານ

ເພື່ອເຮັດໃຫ້ບັນດາມາດຕະການ, ໂຄງການ ແລະ ກິດຈະກຳທີ່ໄດ້ກຳນົດໄວ້ໃນ ແຜນພັດທະນາ ຈນກ 2021 – 2025 ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີຜົນສຳເລັດ, ໃນ 5 ປີ ຕໍ່ໜ້ານີ້ຈະຕ້ອງໄດ້ນຳໃຊ້ທຶນທັງໝົດປະມານ 5.073 ຕື້ກີບ, ໃນນີ້ທຶນພາຍໃນປະເທດປະມານ 4.185 ຕື້ກີບ, ທຶນຕ່າງປະເທດປະມານ 888 ຕື້ກີບ ຊຶ່ງຕົວເລກດັ່ງກ່າວນີ້ແມ່ນລວມທັງງົບປະມານ ຂອງບັນດາຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນຕ່າງໆ ສຳລັບຈັດຕັ້ງປະຕິບັດໂຄງການ ແລະ ວຽກງານຕ່າງໆ ທີ່ກ່ຽວຂ້ອງກັບຂົງເຂດນະໂຍບາຍໃນດ້ານຕ່າງໆ ຕາມພາລະບົດບາດຂອງຕົນເອງໃນການພັດທະນາ ຈນກ.

ທຶນສຳລັບຈັດຕັ້ງປະຕິບັດ ແຜນພັດທະນາ ຈນກ 2021 - 2025 ມີ 2 ປະເພດຄື:

1. ທຶນສຳລັບການສົ່ງເສີມດ້ານເຕັກນິກວິຊາການເພື່ອກະຕຸກຊຸກຍູ້ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ ຈນກ, ພາກລັດ ແລະ ບັນດາພາກສ່ວນກ່ຽວຂ້ອງ ກັບການສົ່ງເສີມ ຈນກ ໃນນີ້ແມ່ນລວມທັງການປັບປຸງບັນດາລະບຽບການທີ່ປີ່ນອ້ອມ ໃນການອຳນວຍໃຫ້ແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດ, ການສ້າງຄວາມເຂັ້ມແຂງແກ່ອົງການຈັດຕັ້ງ ຫລື ໜ່ວຍງານທີ່ເຮັດໜ້າທີ່ຄຸ້ມຄອງ, ການບໍລິການທາງດ້ານວິຊາການ ແລະ ດ້ານການເງິນໃຫ້ແກ່ ຈນກ ຄາດວ່າມີຄວາມຕ້ອງການທັງໝົດປະມານ 240 ຕື້ກີບ.
2. ທຶນທີ່ທາງສະຖາບັນການເງິນ ຈະຕ້ອງໄດ້ລະດົມທຶນຈາກສັງຄົມ ແລະ ກູ້ຢືມຈາກແຫລ່ງຕ່າງໆ ເພື່ອເປັນທຶນສຳລັບສະໜອງສິນເຊື່ອໃຫ້ແກ່ ການລົງທຶນ, ການຂະຫຍາຍທຸລະກິດ ແລະ ທຶນໝູນວຽນຂອງ ຈນກ ຄາດວ່າມີຄວາມຕ້ອງການທັງໝົດປະມານ 4.833 ຕື້ກີບ.

## 2. ແຫລ່ງທຶນ

ແຫລ່ງທຶນທີ່ຈະນຳໃຊ້ ເຂົ້າໃນການຈັດຕັ້ງປະຕິບັດ ແຜນພັດທະນາ ຈນກ 2021 - 2025 ຈະໄດ້ມາຈາກ 3 ແຫລ່ງຕົ້ນຕໍ ດັ່ງນີ້:

1) ງົບປະມານປະຈຳປີຂອງລັດຖະບານທີ່ຈັດສັນໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ໂດຍແມ່ນບັນດາຂະແໜງການ ແລະ ທ້ອງຖິ່ນ ເປັນຜູ້ຂຶ້ນແຜນງົບປະມານປະຈຳປີ ເພື່ອຮັບໃຊ້ການຈັດຕັ້ງປະຕິບັດບັນດາມາດຕະການ, ໂຄງການ ແລະ ກິດຈະກຳ ທີ່ກຳນົດໃນບັນດາຂົງເຂດນະໂຍບາຍຕ່າງໆ ທີ່ຕິດພັນກັບພາລະບົດບາດຂອງຕົນເອງ;
2) ກອງທຶນສົ່ງເສີມ ວິສາຫະກິດຂະໜາດນ້ອຍ ແລະ ກາງ ນຳໃຊ້ລາຍຮັບສະສົມຂອງກອງທຶນ ແລະ ເປັນເຈົ້າການລະດົມທຶນຈາກແຫລ່ງຕ່າງໆ ເພື່ອສະໜອງທຶນໃຫ້ແກ່ການຈັດຕັ້ງປະຕິບັດບັນດາມາດຕະການ, ໂຄງການ ແລະ ກິດຈະກຳຂອງບັນດາພາກສ່ວນ, ຂະແໜງການ ແລະ ທ້ອງຖິ່ນຕ່າງໆ;
3) ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການໃນການລະດົມທຶນ ໃນຮູບແບບຕ່າງໆ ເປັນຕົ້ນການກູ້ຢືມດອກເບ້ຍຕ່ຳ ແລະ ການຊ່ວຍເຫລືອລ້າຈາກສະຖາບັນການເງິນສາກົນ, ຈາກປະເທດເພື່ອນມິດ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (NGOs) ທັງພາຍໃນ ແລະ ຕ່າງປະເທດ ເພື່ອສະໜອງທຶນໃຫ້ແກ່ຈັດຕັ້ງປະຕິບັດ ແຜນພັດທະນາ ຈນກ 2021 – 2025.

# ເອກະສານຊ້ອນທ້າຍ



## ເອກະສານຊ້ອນທ້າຍ 1: ຂົງເຂດນະໂຍບາຍ, ໝາກຜົນ ແລະ ມາດຕະການ

| | ຂົງເຂດນະໂຍບາຍ | ໝາກຜົນ | ມາດຕະການ |
|---|---|---|---|
| 1 | ນະໂຍບາຍພັດທະນາຜູ້ປະກອບກິດຈະການ | 1.1. ຈຳນວນສູນຜູ້ປະກອບກິດຈະການເພີ່ມຂຶ້ນ;<br>1.2. ຈຳນວນຜູ້ປະກອບກິດຈະການແບບສະຕາດອັບເພີ່ມຂຶ້ນ;<br>1.3. ຈຳນວນຜູ້ປະກອບກິດຈະການເພີ່ມຂຶ້ນ;<br>1.4. ທຸລະກິດແບບສະຕາດອັບໄດ້ຮັບການສົ່ງເສີມຢ່າງເປັນລະບົບ. | 1. ພັດທະນາຫລັກສູດວິຊາທຸລະກິດທີ່ເປັນພື້ນຖານ ເພື່ອບັນຈຸເຂົ້າໃນລະບົບການຮຽນ-ການສອນ ໃນຊັ້ນມັດທະຍົມຕອນປາຍ;<br>2. ພັດທະນາວິຊາທຸລະກິດທີ່ເປັນພື້ນຖານສະເພາະ ສຳລັບນັກຮຽນເຕັກນິກ - ວິຊາຊີບ ຄຽງຄູ່ກັບບັນດາວິຊາເຕັກນິກຫລັກ;<br>3. ສ້າງໂຄງການຕໍ່ເນື່ອງໃນບັນດາສະຖາບັນການສຶກສາ ໃນລະດັບສາມັນສຶກສາ, ອະຊີວະສຶກສາ, ການສຶກສາຊັ້ນສູງ ແລະ ການພັດທະນາສີມືແຮງງານ;<br>4. ສ້າງສູນກໍ່ສ້າງຜູ້ປະກອບກິດຈະການ (Business Incubation Centre) ໃນບັນດາສະຖາບັນການສຶກສາຕ່າງໆທີ່ມີເງື່ອນໄຂ;<br>5. ຄົ້ນຄວ້າສ້າງຍຸດທະສາດການພັດທະນາສູນກໍ່ສ້າງຜູ້ປະກອບກິດຈະການ;<br>6. ຄົ້ນຄວ້າສ້າງໂຄງການການແຂ່ງຂັນແນວຄວາມຄິດ ແລະ ແຜນທຸລະກິດ ສຳລັບນັກຮຽນ, ນັກສຶກສາ ແລະ ບຸກຄົນທົ່ວໄປ ໂດຍການຮ່ວມມືລະຫວ່າງ ພາກລັດ ແລະ ພາກທຸລະກິດ;<br>7. ຄົ້ນຄວ້າສ້າງກອງທຶນຮ່ວມລົງທຶນ (Venture Capital);<br>8. ສ້າງແຜນພັດທະນາຜູ້ປະກອບກິດຈະການແບບສະຕາດອັບ;<br>9. ປະສານງານກັບອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາຕ່າງໆ ເພື່ອສົ່ງບັນດາຄູ, ອາຈານ ແລະ ຄູຝຶກ ເຂົ້າຮ່ວມຝຶກອົບຮົມ ສ້າງຄວາມເຂັ້ມແຂງໃນດ້ານຕ່າງໆ ໃນແຕ່ລະໄລຍະ;<br>10. ສະໜອງການຝຶກອົບຮົມໃຫ້ແກ່ຜູ້ປະກອບກິດຈະການໃນດ້ານຕ່າງໆ. |

| | | | |
|---|---|---|---|
| 2 | ນະໂຍບາຍສົ່ງເສີມການເຂົ້າເຖິງແຫລ່ງທຶນ | 2.1. ຜະລິດຕະພັນສິນເຊື່ອສຳລັບ SME ເພີ່ມຂຶ້ນ;<br>2.2. ການເພີ່ມຂອງທຶນ ທສວ;<br>2.3. ຄົ້ນຄວ້າ ແລະ ສ້າງ ຜະລິດຕະພັນທາງດ້ານການເງິນ ສຳລັບ ຈນກ;<br>2.4. ຄົ້ນຄວ້າກົນໄກການປ່ອຍກູ້ໃຫ້ແກ່ ຈນກ ຜ່ານສະຖາບັນການເງິນຈຸລະພາກ. | 1. ຄົ້ນຄວ້າກິດຈະການຂອງກອງທຶນສົ່ງເສີມ ຈນກ ເພື່ອຂະຫຍາຍແຫລ່ງລາຍຮັບ ສຳລັບການຂະຫຍາຍໂຕຂອງກອງທຶນ ເພື່ອເປັນການຂະຫຍາຍທຶນນອກຈາກການປະກອບທຶນຂອງລັດຖະບານ ແລະ ອັດຕາດອກເບ້ຍຈາກການປ່ອຍກູ້;<br>2. ລະດົມແຫລ່ງທຶນຕ່າງໆ ພ້ອມທັງກົນໄກ ແລະ ກິດຈະການ ການເຄື່ອນໄຫວຂອງ ກອງທຶນສົ່ງເສີມ ຈນກ;<br>3. ຄົ້ນຄວ້າການຈັດສັນທຶນສະເພາະ ສຳລັບບາງປະເພດກິດຈະການຂອງ ຈນກ;<br>4. ຄົ້ນຄວ້າ ແລະ ພັດທະນາ ຜະລິດຕະພັນການເງິນສຳລັບ ຈນກ ແລະ ຜູ້ເລີ່ມຕົ້ນທຸລະກິດໃໝ່;<br>5. ຄົ້ນຄວ້າເພື່ອສະໜອງຜະລິດຕະພັນທາງການເງິນສຳລັບ ຈນກ ໃນແຕ່ລະໄລຍະ ແລະ ເຫດການສຸກເສີນ ເພື່ອຊ່ວຍໃຫ້ ຈນກ ສາມາດສືບຕໍ່ການດຳເນີນທຸລະກິດ;<br>6. ສະໜອງທຶນສຳລັບການຝຶກອົບຮົມ ສ້າງຄວາມເຂັ້ມແຂງໃຫ້ແກ່ ຈນກ ແລະ ຜູ້ເລີ່ມຕົ້ນທຸລະກິດໃໝ່ ໃນຫົວຂໍ້ຕ່າງໆ ທີ່ຕິດພັນກັບການເຂົ້າເຖິງແຫລ່ງທຶນ;<br>7. ພັດທະນາກົນໄກ ການປະສານກັບບັນດາຄູ່ຮ່ວມທຸລະກິດ, ອົງການຈັດຕັ້ງສາກົນຕ່າງໆ ໃນການລະດົມທຶນເພື່ອສະໜອງທຶນໃຫ້ ຈນກ ຜ່ານກອງທຶນສົ່ງເສີມ ຈນກ, ສະຖາບັນການເງິນ ແລະ ທະນາຄານທຸລະກິດຕ່າງໆ. |

| | | | |
|---|---|---|---|
| 3 | ນະໂຍບາຍສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ | 3.1. ຜະລິດຕະພາບ ແລະ ຄຸນນະພາບໄດ້ຮັບການ ຍົກລະດັບ;<br>3.2. ສີມືແຮງງານໄດ້ຮັບການປັບປຸງ ແລະ ພັດທະນາ, ສາມາດເຂົ້າຮ່ວມໃນກິດຈະກຳຂອງການຜະລິດເສດຖະກິດກິຈິຕອນ. | 1. ຍົກລະດັບ ຄວາມອາດສາມາດຂອງ ອົງການຜະລິດຕະພາບແຫ່ງຊາດ;<br>2. ຍົກລະດັບຄວາມອາດສາມາດໃຫ້ແກ່ພາກສ່ວນກ່ຽວຂ້ອງ ໃນວຽກງານປັບປຸງຜະລິດຕະພາບ ແລະ ຄຸນນະພາບ;<br>3. ສ້າງຄວາມຮັບຮູ້ກ່ຽວກັບການຍົກລະດັບ ຜະລິດຕະພາບ ແລະ ຄຸນນະພາບໃຫ້ແກ່ ຈນກ;<br>4. ສະໜອງທຶນສົມທົບໃນການເຂົ້າເຖິງບໍລິການທີ່ປຶກສາ ພັດທະນາຜະລິດຕະພາບ ແລະ ຄຸນນະພາບ;<br>5. ສ້າງຜູ້ຊ່ຽວຊານສະເພາະດ້ານ ເພື່ອຊ່ວຍປັບປຸງຜະລິດຕະພາບໃຫ້ແກ່ ຈນກ ໃນຫົວຂໍ້ຕ່າງໆ ເຊັ່ນ: GMP/GHP, HACCP, TQM, ISO ແລະ ອື່ນໆ;<br>6. ປັບປຸງຫລັກສູດສີມືແຮງງານ ເພື່ອຍົກລະດັບສີມືແຮງງານໃຫ້ສາມາດຮອງຮັບການຫັນເປັນດິຈິຕອນ;<br>7. ສະໜອງທຶນສົມທົບ ເພື່ອຍົກລະດັບເຕັກໂນໂລຊີໃນການຜະລິດ ແລະ ການບໍລິການ;<br>8. ສ້າງກົນໄກການຮ່ວມມື ລະຫວ່າງ ຈນກ, ບໍລິສັດຂະໜາດໃຫຍ່ ແລະ ສະຖາບັນການສຶກສາ ສຳລັບການຄົ້ນຄວ້ານະວັດຕະກຳ ແລະ ເຕັກໂນໂລຊີ;<br>9. ສ້າງລະບົບການຍ້ອງຍໍ ແລະ ດຳເນີນການມອບລາງວັນດ້ານຕ່າງໆ;<br>10. ສະໜັບສະໜູນການສ້າງຄວາມເຂັ້ມແຂງ ແລະ ອຳນວຍຄວາມສະດວກໃນການຈົດທະບຽນປົກປ້ອງສິດທາງດ້ານຊັບສິນທາງປັນຍາຂອງ ຈນກ;<br>11. ປະສານງານກັບອົງການ APO ແລະ ອົງການຈັດຕັ້ງສາກົນອື່ນ ເພື່ອຈັດຕັ້ງປະຕິບັດໂຄງການໃນຫົວຂໍ້ທີ່ແທດເໝາະກັບການຍົກລະດັບຜະລິດຕະພາບ ແລະ ຄຸນນະພາບ. |

| | | | |
|---|---|---|---|
| 4 | ນະໂຍບາຍສົ່ງເສີມການເຂົ້າເຖິງການບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ | 4.1. ຂະຫຍາຍສູນບໍລິການ ວນກ ຢູ່ບັນດາແຂວງທີ່ມີທ່າແຮງ;<br>4.2. SME ໄດ້ຮັບການຝຶກອົບຮົມ ແລະ ການແນະນໍາກ່ຽວກັບການສ້າງແຜນທຸລະກິດ, ການວາງແຜນການເງິນ ແລະ ການຖືບັນຊີຢູ່ທຸກແຂວງ ໃນຂອບເຂດທົ່ວປະເທດ. | 1. ສ້າງຄູຝຶກ (TOT) ໃນຫົວຂໍ້ສະເພາະດ້ານ ຜ່ານຮູບແບບຕ່າງໆ;<br>2. ສະໜອງການບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ ໃນຫົວຂໍ້ສະເພາະເຊັ່ນ: 5ສ (5S), ໄຄເຊັນ (KAIZEN), ການຜະລິດທີ່ດີ (GMP), ການຜະລິດກະສິກໍາທີ່ດີ (GAP), ມາດຕະຖານສາກົນ (ISO), ການວິເຄາະ ແລະ ຄວບຄຸມຈຸດວິກິດຄວາມປອດໄພການຜະລິດອາຫານ (HACCP), ການນໍາໃຊ້ເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ແລະ ອື່ນໆ;<br>3. ສະໜອງການຝຶກອົບຮົມເພື່ອພັດທະນາທຸລະກິດ ໃນຫົວຂໍ້ຕ່າງໆ;<br>4. ຍົກລະດັບຄຸນນະພາບ ສະມາຊິກຂອງ ຄບທ ໃຫ້ສາມາດສະໜອງບໍລິການໃຫ້ມີຄຸນນະພາບ;<br>5. ປັບປຸງກົນໄກການຈັດຕັ້ງເຄື່ອນໄຫວຂອງ ຄບທ ໃຫ້ມີຄຸນນະພາບ ແລະ ສາມາດຂະຫຍາຍສະມາຊິກ ເພື່ອຄວາມຍືນຍົງ ໃນການສະໜອງການບໍລິການ;<br>6. ຄົ້ນຄວ້າປັບປຸງຍຸດທະສາດການຈັດຕັ້ງເຄື່ອນໄຫວຂອງ ສບວ ໃຫ້ສາມາດດໍາເນີນງານໄດ້ຢ່າງມີປະສິດທິຜົນ;<br>7. ຊຸກຍູ້ການຂະຫຍາຍສູນບໍລິການ ວນກ ໃນບັນດາແຂວງທີ່ມີເງື່ອນໄຂ;<br>8. ເພີ່ມທະວີການຮ່ວມມື ລະຫວ່າງພາກລັດ, ສະຖາບັນວິຊາການ, ສະຖາບັນການສຶກສາ ແລະ ພາກທຸລະກິດ ໃນການສະໜອງບໍລິການພັດທະນາທຸລະກິດໃຫ້ແກ່ ຈນກ. |
| 5 | ນະໂຍບາຍສົ່ງເສີມການເຂົ້າເຖິງ ແລະ ຂະຫຍາຍຕະຫລາດ | 5.1. ຈນກ ນໍາໃຊ້ການຄ້າທາງເອເລັກໂຕຣນິກ ໃນການເຂົ້າເຖິງຕະຫລາດ | 1. ພາກລັດ ແລະ ພາກທຸລະກິດ ຮ່ວມມືສ້າງເວທີໃນການເຂົ້າເຖິງຕະຫລາດ;<br>2. ເຜີຍແຜ່ວຽກງານການຄ້າທາງເອເລັກໂຕຣນິກ;<br>3. ສ້າງຄວາມເຂັ້ມແຂງໃຫ້ແກ່ພາກລັດ ແລະ ພາກທຸລະກິດ ໃຫ້ຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບຄວາມສໍາຄັນຂອງການຮ່ວມກຸ່ມຂະແໜງທຸລະກິດ (Cluster), ຕ່ອງໂສ້ມູນຄ່າເພີ່ມ ແລະ ທຸລະກິດແບບທົ່ວເຖິງ (Inclusive Business); |

| | | | |
|---|---|---|---|
| | | | 4. ຊຸກຍູ້ ຈນກ ໃຫ້ເກີດການຮ່ວມກຸ່ມຂະແໜງທຸລະກິດ (Cluster) ເພື່ອເຮັດໃຫ້ຕົ້ນທຶນຕ່ຳ ທັງເພີ່ມອຳນາດການຕໍ່ລອງດ້ານຕະຫລາດ ແລະ ຜູ້ສະໜອງປັດໄຈການຜະລິດ;<br>5. ພັດທະນາຂອດຕ່າງໆຂອງການຄ້າ ແລະ ການຜະລິດຂອງຂະແໜງທຸລະກິດຂອງສິນຄ້າ ແລະ ບໍລິການທີ່ມີທ່າແຮງ;<br>6. ສ້າງກົນໄກເຜີຍແຜ່ ແລະ ສົ່ງເສີມທຸລະກິດແບບທົ່ວເຖິງ (Inclusive) ເພື່ອໃຫ້ຜູ້ມີລາຍຮັບຕ່ຳ ມີສ່ວນຮ່ວມໃນການສະໜອງສິນຄ້າ ແລະ ບໍລິການ ໃຫ້ຂອດການຜະລິດ;<br>7. ຄົ້ນຄວ້າທຶນສົມທົບ ເພື່ອຊ່ວຍເຫລືອ ຈນກ ເຂົ້າເຖິງການຍັ້ງຢືນດ້ານເຕັກນິກຕ່າງໆ;<br>8. ສ້າງເວທີພົບປະ ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ຈັບຄູ່ທຸລະກິດ;<br>9. ໂຄງການຂອງລັດ ເປີດເຜີຍແຜນການ ຈັດຊື້-ຈັດຈ້າງ ໃຫ້ແກ່ ຈນກ ຮັບຊາບຢ່າງເປັນປະຈຳ;<br>10. ສະໜອງການຝຶກອົບຮົມ, ສຳມະນາ ເພື່ອປັບປຸງຄຸນນະພາບຂອງສິນຄ້າຕາມມາດຕະຖານ, ເງື່ອນໄຂ ໃນການຍັ້ງຢືນເຄື່ອງໝາຍ ODOP;<br>11. ປັບປຸງຖານຂໍ້ມູນຂ່າວສານດ້ານຕະຫລາດທັງພາຍໃນ ແລະ ຕ່າງປະເທດຢ່າງເປັນປະຈຳ. |

| | | | |
|---|---|---|---|
| 6 | ນະໂຍບາຍສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດ | 6.1. ຫລຸດຂັ້ນຕອນການເລີ່ມຕົ້ນທຸລະກິດ ຫລື ຂໍອະນຸຍາດຈາກຂະແໜງການ<br>6.2. ລະບົບການຂຶ້ນທະບຽນວິສາຫະກິດໄດ້ຮັບການປັບປຸງໃຫ້ດີຂຶ້ນກວ່າເກົ່າ<br>6.3. ນິຕິກຳທີ່ຮັບໃຊ້ໃຫ້ແກ່ການສົ່ງເສີມ ຈນກ ໄດ້ຮັບການປັບປຸງ ເພື່ອສາມາດເຄື່ອນໄຫວວຽກງານສົ່ງເສີມ ຈນກ ໄດ້ຄ່ອງຕົວກວ່າເກົ່າ<br>6.4. ຈຳນວນຂອງການຂຶ້ນທະບຽນວິສາຫະກິດເພີ່ມຂຶ້ນໃນແຕ່ລະປີ | 1. ປັບປຸງລະບຽບ ແລະ ພັດທະນາລະບົບການຂຶ້ນທະບຽນວິສາຫະກິດແບບເອເລັກໂຕຣນິກ;<br>2. ປັບປຸງລະບົບການຊຳລະອາກອນ ໃຫ້ກະທັດຮັດ, ສະດວກ ແລະ ວ່ອງໄວ;<br>3. ປັບປຸງວິທີການຄົ້ນຄວ້າ ແລະ ພິຈາລະນາ ເພື່ອອອກໃບອະນຸຍາດດຳເນີນທຸລະກິດໃຫ້ວ່ອງໄວ ແລະ ຮັບປະກັນຄວາມຖືກຕ້ອງຕາມລະບຽບການ;<br>4. ຂະຫຍາຍໂອກາດໃນການປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ ທັງສູນກາງ ແລະ ທ້ອງຖິ່ນ ໃຫ້ຫລາຍຂຶ້ນ;<br>5. ສ້າງໂອກາດໃຫ້ມີການປຶກສາຫາລື ລະຫວ່າງ ວິສາຫະກິດຂະໜາດໃຫຍ່ ຫລື ວິສາຫະກິດທີ່ເປັນການລົງທຶນຂອງຕ່າງປະເທດ ກັບ ຈນກ;<br>6. ການປັບປຸງຂອດບໍລິການ ອອກໃບອະນຸຍາດລົງທຶນ ແລະ ໃບອະນຸຍາດດຳເນີນທຸລະກິດ ໃຫ້ມີຄວາມສະດວກວ່ອງໄວ ແລະ ໃຫ້ສອດຄ່ອງກັບບົດຮຽນທີ່ດີຂອງສາກົນ ໂດຍກຳນົດການອອກໃບອະນຸຍາດດຳເນີນທຸລະກິດຕາມຄວາມສ່ຽງຂອງກິດຈະການ ແລະ ສ້າງກົນໄກການຄຸ້ມຄອງທີ່ເຂັ້ມແຂງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດດັ່ງກ່າວມີປະສິດທິພາບ;<br>7. ກຳນົດລະບົບບັນຊີເປັນອັນສະເພາະທີ່ເໝາະສົມ ສຳລັບ ຈນກ ແຕ່ລະຂະໜາດ. |
| 7 | ນະໂຍບາຍພາສີ-ອາກອນ ແລະ ດ້ານການເງິນ | 7.1. ຄົ້ນຄວ້າບັນດານິຕິກຳ ເພື່ອສົ່ງເສີມ ຈນກ ໂດຍການໄດ້ຮັບນະໂຍບາຍຕ່າງໆ<br>7.2. ຄົ້ນຄວ້າກົນໄກທຶນສົມທົບດ້ານການຍົກລະດັບເຕັກໂນໂລຊີ | 1. ຄົ້ນຄວ້າ ແລະ ກຳນົດບັນດາກິດຈະການ ແລະ ຂະແໜງການບຸລິມະສິດ ທີ່ຈະໄດ້ຮັບນະໂຍບາຍທາງດ້ານ ພາສີ-ອາກອນ ແລະ ການເງິນ;<br>2. ຄົ້ນຄວ້າ ແລະ ກຳນົດບັນດາເງື່ອນໄຂສຳລັບ ຈນກ ແບບສະຕາດອັບ ໃຫ້ໄດ້ຮັບການຍົກເວັ້ນອາກອນມູນຄ່າເພີ່ມ ແລະ ອາກອນກຳໄລ;<br>3. ຈັດສັນງົບປະມານ ແລະ ແຫລ່ງທຶນ ເພື່ອສະໜອງສິນເຊື່ອໃຫ້ ຈນກ;<br>4. ສ້າງ ແລະ ດຳເນີນໂຄງການທຶນສົມທົບ ໃນການປັບປຸງ ແລະ ປ່ຽນຖ່າຍເຕັກໂນໂລຊີ ແລະ ຊອກຫາຕະຫລາດ ໃຫ້ແກ່ ຈນກ;<br>5. ສ້າງ ແລະ ດຳເນີນໂຄງການທຶນສົມທົບ ສຳລັບການສະໜອງບໍລິການໃຫ້ຄຳປຶກສາຈາກຜູ້ຊ່ຽວຊານ ເພື່ອປັບປຸງທຸລະກິດ. |

## ເອກະສານຊ້ອນທ້າຍ 2: ພາກສ່ວນທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ແຜນພັດທະນາ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 2021-2025.

| | ຂົງເຂດນະໂຍບາຍ | ມາດຕະການ | ພາກສ່ວນຮ່ວມຈັດຕັ້ງປະຕິບັດ |
|---|---|---|---|
| 1 | ນະໂຍບາຍພັດທະນາຜູ້ປະກອບກິດຈະການ | 1. ພັດທະນາຫລັກສູດວິຊາທຸລະກິດທີ່ເປັນພື້ນຖານ ເພື່ອບັນຈຸເຂົ້າໃນລະບົບ ການຮຽນ-ການສອນ ໃນຊັ້ນມັດທະຍົມຕອນປາຍ;<br>2. ພັດທະນາວິຊາທຸລະກິດທີ່ເປັນພື້ນຖານສະເພາະ ສໍາລັບນັກຮຽນເຕັກນິກ - ວິຊາຊີບ ຄຽງຄູ່ກັບບັນດາວິຊາເຕັກນິກຫລັກ;<br>3. ສ້າງໂຄງການຕໍ່ເນື່ອງໃນບັນດາສະຖາບັນການສຶກສາ ໃນລະດັບສາມັນສຶກສາ, ອະຊີວະສຶກສາ, ການສຶກສາຊັ້ນສູງ ແລະ ການພັດທະນາສີມືແຮງງານ;<br>4. ສ້າງສູນກໍ່ສ້າງຜູ້ປະກອບກິດຈະການ (Business Incubation Centre) ໃນບັນດາສະຖາບັນການສຶກສາຕ່າງໆທີ່ມີເງື່ອນໄຂ;<br>5. ຄົ້ນຄວ້າສ້າງຍຸດທະສາດການພັດທະນາສູນກໍ່ສ້າງຜູ້ປະກອບກິດຈະການ;<br>6. ຄົ້ນຄວ້າສ້າງໂຄງການການແຂ່ງຂັນແນວຄວາມຄິດ ແລະ ແຜນທຸລະກິດ ສໍາລັບນັກຮຽນ, ນັກສຶກສາ ແລະ ບຸກຄົນທົ່ວໄປ ໂດຍການຮ່ວມມືລະຫວ່າງ ພາກລັດ ແລະ ພາກທຸລະກິດ;<br>7. ຄົ້ນຄວ້າສ້າງກອງທຶນຮ່ວມລົງທຶນ (Venture Capital);<br>8. ສ້າງແຜນພັດທະນາຜູ້ປະກອບກິດຈະການແບບສະຕາດອັບ;<br>9. ປະສານງານກັບອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາຕ່າງໆ ເພື່ອສົ່ງບັນດາຄູ, ອາຈານ ແລະ ຄູຝຶກ ເຂົ້າຮ່ວມຝຶກອົບຮົມ ສ້າງຄວາມເຂັ້ມແຂງໃນດ້ານຕ່າງໆ ໃນແຕ່ລະໄລຍະ;<br>10. ສະໜອງການຝຶກອົບຮົມໃຫ້ແກ່ຜູ້ປະກອບກິດຈະການໃນດ້ານຕ່າງໆ. | ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງສຶກສາທິການ ແລະ ກິລາ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ມະຫາວິທະຍາໄລ, ວິທະຍາໄລ, ທະນາຄານແຫ່ງ ສປປ ລາວ. |
| 2 | ນະໂຍບາຍສົ່ງເສີມການເຂົ້າເຖິງແຫລ່ງທຶນ | 1. ຄົ້ນຄວ້າກິດຈະການຂອງກອງທຶນສົ່ງເສີມ ຈນກ ເພື່ອຂະຫຍາຍແຫລ່ງລາຍຮັບສໍາລັບການຂະຫຍາຍໂຕຂອງກອງທຶນ ເພື່ອເປັນການຂະຫຍາຍທຶນນອກຈາກການປະກອບທຶນຂອງລັດຖະບານ ແລະ ອັດຕາດອກເບ້ຍຈາກການປ່ອຍກູ້; | ທະນາຄານແຫ່ງ ສປປ ລາວ, ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ທະນາຄານທຸລະກິດ. |

| | | | |
|---|---|---|---|
| | | 2. ລະດົມແຫລ່ງທຶນຕ່າງໆ ພ້ອມທັງກົນໄກ ແລະ ກິດຈະການ ການເຄື່ອນ ໄຫວຂອງ ກອງທຶນສົ່ງເສີມ ຈນກ;<br>3. ຄົ້ນຄວ້າການຈັດສັນທຶນສະເພາະ ສໍາລັບບາງປະເພດກິດຈະການຂອງ ຈນກ;<br>4. ຄົ້ນຄວ້າ ແລະ ພັດທະນາ ຜະລິດຕະພັນການເງິນສໍາລັບ ຈນກ ແລະ ຜູ້ເລີ່ມຕົ້ນທຸລະກິດໃໝ່;<br>5. ຄົ້ນຄວ້າເພື່ອສະໜອງຜະລິດຕະພັນທາງການເງິນສໍາລັບ ຈນກ ໃນແຕ່ລະໄລຍະ ແລະ ເຫດການສຸກເສີນ ເພື່ອຊ່ວຍໃຫ້ ຈນກ ສາມາດສືບຕໍ່ການດໍາເນີນທຸລະກິດ;<br>6. ສະໜອງທຶນສໍາລັບການຝຶກອົບຮົມ ສ້າງຄວາມເຂັ້ມແຂງໃຫ້ແກ່ ຈນກ ແລະ ຜູ້ເລີ່ມຕົ້ນທຸລະກິດໃໝ່ ໃນຫົວຂໍ້ຕ່າງໆ ທີ່ຕິດພັນກັບການເຂົ້າເຖິງແຫລ່ງທຶນ;<br>7. ພັດທະນາກົນໄກ ການປະສານກັບບັນດາຄູ່ຮ່ວມທຸລະກິດ, ອົງການຈັດຕັ້ງສາກົນຕ່າງໆ ໃນການລະດົມທຶນເພື່ອສະໜອງທຶນໃຫ້ ຈນກ ຜ່ານກອງທຶນສົ່ງເສີມ ຈນກ, ສະຖາບັນການເງິນ ແລະ ທະນາຄານທຸລະກິດຕ່າງໆ. | |
| 3 | ນະໂຍບາຍສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກໍາ | 1. ຍົກລະດັບ ຄວາມອາດສາມາດຂອງ ອົງການຜະລິດຕະພາບແຫ່ງຊາດ;<br>2. ຍົກລະດັບຄວາມອາດສາມາດໃຫ້ແກ່ພາກສ່ວນກ່ຽວຂ້ອງ ໃນວຽກງານປັບປຸງຜະລິດຕະພາບ ແລະ ຄຸນນະພາບ;<br>3. ສ້າງຄວາມຮັບຮູ້ກ່ຽວກັບການຍົກລະດັບ ຜະລິດຕະພາບ ແລະ ຄຸນນະພາບ ໃຫ້ແກ່ ຈນກ;<br>4. ສະໜອງທຶນສົມທົບໃນການເຂົ້າເຖິງບໍລິການທີ່ປຶກສາ ພັດທະນາຜະລິດຕະພາບ ແລະ ຄຸນນະພາບ;<br>5. ສ້າງຜູ້ຊ່ຽວຊານສະເພາະດ້ານ ເພື່ອຊ່ວຍປັບປຸງຜະລິດຕະພາບໃຫ້ແກ່ ຈນກ ໃນຫົວຂໍ້ຕ່າງໆ ເຊັ່ນ: GMP/GHP, HACCP, TQM, ISO ແລະ ອື່ນໆ;<br>6. ປັບປຸງຫລັກສູດສີມືແຮງງານ ເພື່ອຍົກລະດັບສີມືແຮງງານໃຫ້ສາມາດຮອງຮັບການຫັນເປັນດີຈີຕອນ;<br>7. ສະໜອງທຶນສົມທົບ ເພື່ອຍົກລະດັບເຕັກໂນໂລຊີໃນການຜະລິດ ແລະ ການບໍລິການ;<br>8. ສ້າງກົນໄກການຮ່ວມມື ລະຫວ່າງ ຈນກ, ບໍລິສັດຂະໜາດໃຫຍ່ ແລະ ສະຖາບັນການສຶກສາ ສໍາລັບການຄົ້ນຄວ້ານະວັດຕະກໍາ ແລະ ເຕັກໂນໂລຊີ; | ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສຶກສາທິການ ແລະ ກິລາ, ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ, ມະຫາວິທະຍາໄລ, ສະຖາບັນການສຶກສາ. |

| | | | |
|---|---|---|---|
| | | 9. ສ້າງລະບົບການຍ້ອງຍໍ ແລະ ດໍາເນີນການມອບລາງວັນດ້ານຕ່າງໆ;<br>10. ສະໜັບສະໜູນການສ້າງຄວາມເຂັ້ມແຂງ ແລະ ອໍານວຍຄວາມສະດວກໃນການຈົດທະບຽນປົກປ້ອງສິດທາງດ້ານຊັບສິນທາງປັນຍາຂອງ ຈນກ;<br>11. ປະສານງານກັບອົງການ APO ແລະ ອົງການຈັດຕັ້ງສາກົນອື່ນ ເພື່ອຈັດຕັ້ງປະຕິບັດໂຄງການໃນຫົວຂໍ້ທີ່ແທດເໝາະກັບການຍົກລະດັບຜະລິດຕະພາບ ແລະ ຄຸນນະພາບ. | |
| 4 | ນະໂຍບາຍສົ່ງເສີມການເຂົ້າເຖິງການບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ | 1. ສ້າງຄູຝຶກ (TOT) ໃນຫົວຂໍ້ສະເພາະດ້ານ ຜ່ານຮູບແບບຕ່າງໆ;<br>2. ສະໜອງການບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ ໃນຫົວຂໍ້ສະເພາະ ເຊັ່ນ: 5ສ (5S), ໄຄເຊັນ (KAIZEN), ການຜະລິດທີ່ດີ (GMP), ການຜະລິດກະສິກໍາທີ່ດີ (GAP), ມາດຕະຖານສາກົນ (ISO), ການວິເຄາະ ແລະ ຄວບຄຸມຈຸດວິກິດຄວາມປອດໄພການຜະລິດອາຫານ (HACCP), ການນໍາໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ (ICT) ແລະ ອື່ນໆ;<br>3. ສະໜອງການຝຶກອົບຮົມເພື່ອພັດທະນາທຸລະກິດ ໃນຫົວຂໍ້ຕ່າງໆ;<br>4. ຍົກລະດັບຄຸນນະພາບ ສະມາຊິກຂອງ ຄບທ ໃຫ້ສາມາດສະໜອງບໍລິການໃຫ້ມີຄຸນນະພາບ;<br>5. ປັບປຸງກົນໄກການຈັດຕັ້ງເຄື່ອນໄຫວຂອງ ຄບທ ໃຫ້ມີຄຸນນະພາບ ແລະ ສາມາດຂະຫຍາຍສະມາຊິກ ເພື່ອຄວາມຍືນຍົງ ໃນການສະໜອງການບໍລິການ;<br>6. ຄົ້ນຄວ້າປັບປຸງຍຸດທະສາດການຈັດຕັ້ງເຄື່ອນໄຫວຂອງ ສບວ ໃຫ້ສາມາດດໍາເນີນງານໄດ້ຢ່າງມີປະສິດທິຜົນ;<br>7. ຊຸກຍູ້ການຂະຫຍາຍສູນບໍລິການ ວນກ ໃນບັນດາແຂວງທີ່ມີເງື່ອນໄຂ;<br>8. ເພີ່ມທະວີການຮ່ວມມື ລະຫວ່າງພາກລັດ, ສະຖາບັນວິຊາການ, ສະຖາບັນການສຶກສາ ແລະ ພາກທຸລະກິດ ໃນການສະໜອງບໍລິການພັດທະນາທຸລະກິດໃຫ້ແກ່ ຈນກ. | ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງສາທາລະນະສຸກ, ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ, ມະຫາວິທະຍາໄລ, ສະຖາບັນການສຶກສາ. |
| 5 | ນະໂຍບາຍສົ່ງເສີມການເຂົ້າເຖິງ ແລະ ຂະຫຍາຍຕະຫລາດ | 1. ພາກລັດ ແລະ ພາກທຸລະກິດ ຮ່ວມມືສ້າງເວທີໃນການເຂົ້າເຖິງຕະຫລາດ;<br>2. ເຜີຍແຜ່ວຽກງານການຄ້າທາງເອເລັກໂຕຣນິກ; | ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງກະສິກໍາ ແລະ ປ່າໄມ້, ກະຊວງແຜນການ ແລະ ການລົງທຶນ, ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ. |

| | | | |
|---|---|---|---|
| | | 3. ສ້າງຄວາມເຂັ້ມແຂງໃຫ້ແກ່ພາກລັດ ແລະ ພາກທຸລະກິດ ໃຫ້ຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບຄວາມສໍາຄັນຂອງ ການຮ່ວມກຸ່ມຂະແໜງທຸລະກິດ (Cluster), ຕ່ອງໂສ້ມູນຄ່າເພີ່ມ ແລະ ທຸລະກິດແບບທົ່ວເຖິງ (Inclusive Business);<br>4. ຊຸກຍູ້ ຈນກ ໃຫ້ເກີດການຮ່ວມກຸ່ມຂະແໜງທຸລະກິດ ເພື່ອເຮັດໃຫ້ຕົ້ນທຶນຕໍ່າ ທັງເພີ່ມອໍານາດການຕໍ່ລອງດ້ານຕະຫລາດ ແລະ ຜູ້ສະໜອງປັດໄຈການຜະລິດ;<br>5. ພັດທະນາຂອດຕ່າງໆຂອງການຄ້າ ແລະ ການຜະລິດຂອງຂະແໜງທຸລະກິດ ຂອງສິນຄ້າ ແລະ ບໍລິການທີ່ມີທ່າແຮງ;<br>6. ສ້າງກົນໄກເຜີຍແຜ່ ແລະ ສົ່ງເສີມທຸລະກິດແບບທົ່ວເຖິງ (Inclusive) ເພື່ອໃຫ້ຜູ້ມີລາຍຮັບຕໍ່າ ມີສ່ວນຮ່ວມໃນການສະໜອງສິນຄ້າ ແລະ ບໍລິການ ໃຫ້ຂອດການຜະລິດ;<br>7. ຄົ້ນຄວ້າທຶນສົມທົບ ເພື່ອຊ່ວຍເຫລືອ ຈນກ ເຂົ້າເຖິງການຢັ້ງຢືນດ້ານເຕັກນິກຕ່າງໆ;<br>8. ສ້າງເວທີພົບປະ ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ຈັບຄູ່ທຸລະກິດ;<br>9. ໂຄງການຂອງລັດ ເປີດເຜີຍແຜນການ ຈັດຊື້-ຈັດຈ້າງ ໃຫ້ແກ່ ຈນກ ຮັບຊາບຢ່າງເປັນປະຈໍາ;<br>10. ສະໜອງການຝຶກອົບຮົມ, ສໍາມະນາ ເພື່ອປັບປຸງຄຸນນະພາບຂອງສິນຄ້າ ຕາມມາດຕະຖານ , ເງື່ອນໄຂ ໃນການຢັ້ງຢືນເຄື່ອງໝາຍ ODOP;<br>11. ປັບປຸງຖານຂໍ້ມູນຂ່າວສານດ້ານຕະຫລາດທັງພາຍໃນ ແລະ ຕ່າງປະເທດ ຢ່າງເປັນປະຈໍາ. | |
| 6 | ນະໂຍບາຍສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການສ້າງຕັ້ງ ແລະ ດໍາເນີນທຸລະກິດ | 1. ປັບປຸງລະບຽບ ແລະ ພັດທະນາລະບົບການຂຶ້ນທະບຽນວິສາຫະກິດແບບເອເລັກໂຕຣນິກ;<br>2. ປັບປຸງລະບົບການຊໍາລະອາກອນ ໃຫ້ກະທັດຮັດ, ສະດວກ ແລະ ວ່ອງໄວ;<br>3. ປັບປຸງວິທີການຄົ້ນຄວ້າ ແລະ ພິຈາລະນາ ເພື່ອອອກໃບອະນຸຍາດດໍາເນີນທຸລະກິດໃຫ້ວ່ອງໄວ ແລະ ຮັບປະກັນຄວາມຖືກຕ້ອງຕາມລະບຽບການ;<br>4. ຂະຫຍາຍໂອກາດໃນການປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ ທັງສູນກາງ ແລະ ທ້ອງຖິ່ນ ໃຫ້ຫລາຍຂຶ້ນ;<br>5. ສ້າງໂອກາດໃຫ້ມີການປຶກສາຫາລື ລະຫວ່າງ ວິສາຫະກິດຂະໜາດໃຫຍ່ ຫລື ວິສາຫະກິດທີ່ເປັນການລົງທຶນຂອງຕ່າງປະເທດ ກັບ ຈນກ; | ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ. |

| | | | |
|---|---|---|---|
| | | 6. ການປັບປຸງຂອດບໍລິການ ອອກໃບອະນຸຍາດລົງທຶນ ແລະ ໃບອະນຸຍາດດຳເນີນທຸລະກິດ ໃຫ້ມີຄວາມສະດວກວ່ອງໄວ ແລະ ໃຫ້ສອດຄ່ອງກັບບົດຮຽນທີ່ດີຂອງສາກົນ ໂດຍກຳນົດການອອກໃບອະນຸຍາດດຳເນີນທຸລະກິດຕາມຄວາມສ່ຽງຂອງກິດຈະການ ແລະ ສ້າງກົນໄກການຄຸ້ມຄອງທີ່ເຂັ້ມແຂງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດດັ່ງກ່າວມີປະສິດທິຜາບ;<br>7. ກຳນົດລະບົບບັນຊີເປັນອັນສະເພາະທີ່ເໝາະສົມ ສຳລັບ ຈນກ ແຕ່ລະຂະໜາດ. | |
| 7 | ນະໂຍບາຍພາສີ-ອາກອນ ແລະ ດ້ານການເງິນ | 1. ຄົ້ນຄວ້າ ແລະ ກຳນົດບັນດາກິດຈະການ ແລະ ຂະແໜງການບຸລິມະສິດ ທີ່ຈະໄດ້ຮັບນະໂຍບາຍທາງດ້ານ ພາສີ-ອາກອນ ແລະ ການເງິນ;<br>2. ຄົ້ນຄວ້າ ແລະ ກຳນົດບັນດາເງື່ອນໄຂສຳລັບ ຈນກ ແບບສະຕາດອັບ ໃຫ້ໄດ້ຮັບການຍົກເວັ້ນອາກອນມູນຄ່າເພີ່ມ ແລະ ອາກອນກຳໄລ;<br>3. ຈັດສັນງົບປະມານ ແລະ ແຫລ່ງທຶນ ເພື່ອສະໜອງສິນເຊື່ອໃຫ້ ຈນກ;<br>4. ສ້າງ ແລະ ດຳເນີນໂຄງການທຶນສົມທົບ ໃນການປັບປຸງ ແລະ ປ່ຽນຖ່າຍເຕັກໂນໂລຊີ ແລະ ຊອກຫາຕະຫລາດ ໃຫ້ແກ່ ຈນກ;<br>5. ສ້າງ ແລະ ດຳເນີນໂຄງການທຶນສົມທົບ ສຳລັບການສະໜອງບໍລິການໃຫ້ຄຳປຶກສາຈາກຜູ້ຊ່ຽວຊານ ເພື່ອປັບປຸງທຸລະກິດ. | ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ |

ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce (MOIC)
ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ
Department of SME Promotion (DOSMEP)

ໂຄງການເຂົ້າເຖິງແຫຼ່ງທຶນຂອງ ຈອນກ
ເພື່ອຮັບມືກັບຜົນກະທົບ ແລະ ຟື້ນຟູຈາກ ໂຄວິດ-19
MSME A2F-ESR Project

ສະໜັບສະໜູນໂດຍ:
Supported by
THE WORLD BANK

ຈັດພິມໂດຍ:
**ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ**
ຖະໜົນໂພນໄຊ, ບ້ານໂພນໄຊ, ເມືອງໄຊເສດຖາ,
ນະຄອນຫລວງວຽງຈັນ, ສປປ ລາວ
ໂທລະສັບ: +856 21 414 064
www.dosmep.org

ສະໜັບສະໜູນການພິມໂດຍ:
ໂຄງການເຂົ້າເຖິງແຫລ່ງທຶນຂອງຈຸນລະວິສາຫະກິດ,
ວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອຮັບມືກັບ
ຜົນກະທົບ ແລະ ຟື້ນຟູຈາກ ໂຄວິດ-19
(MSME A2F-ESR)

